# ພາກ ຂ:

# ຂໍ້ມູນກ່ຽວກັບ ການຄ້າມະນຸດ ແລະ ການເຄື່ອນຍ້າຍແຮງງານ



# 3 ບົດທີ 3: ການຄ້າມະນຸດແມ່ນຫຍັງ? ການເຄື່ອນຍ້າຍແຮງງານແມ່ນຫຍັງ?

**ຈຸດປະສົງ: ຜູ້ເຂົ້າຈະໄດ້ເຂົ້າໃຈນິຍາມຂອງການຄ້າມະນຸດ ແລະ ການເຄື່ອນຍ້າຍແຮງງານ ແລະ ສາມາດຈໍາແນກໄດ້ຢ່າງງ່າຍດາຍ**

**ເວລາ:**

80 ນາທີ

**ການກະກຽມ:**

ຕັດເລື່ອງສັ້ງຫຼຽນເປັນຕອນໆ, ຮັບປະກັນວ່າແຕ່ລະເລື່ອງການຄ້າມະນຸດໃຫ້ສອດຄ່ອງການເຄື່ອນຍ້າຍແຮງງານ ໂດຍການພັບເປັນກ້ໍແລ້ວເກັບໄວ້ໃນຖົງ.

**ອຸປະກອນ**

- ❖ ເຈ້ຍເອກະສານສໍາລັບການເຄື່ອນຍ້າຍແຮງງານ ແລະ ຄໍາເວົ້າກ່ຽວກັບການຄ້າມະນຸດທີ່ກ່ຽວຂ້ອງກັບການຝຶກແອບ.
- ❖ ບິກຂຽນ ຫຼື ສໍສີ. ຫຼຽນອັນໜຶ່ງໃສ່ຖົງ
- ❖ ເອກະສານອ້າງອີງ3 ຂ: ການຄ້າມະນຸດແມ່ນຫຍັງ? ການເຄື່ອນຍ້າຍແຮງງານແມ່ນຫຍັງ?
- ❖ ປື້ມນ້ອຍຂໍ້ມູນໃຫ້ແຕ່ລະຄົນ

**ການແນະນໍາ:**

**ຍິນດີຕ້ອນຮັບຜູ້ເຂົ້າຮ່ວມ:**

ໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ.

**ອົບອຸ່ນຮ່າງກາຍ:**

ໂດຍການໃຊ້ເກມຈາກລາຍການທີ່ມີຢູ່.

**ທວນຄືນ:**

ເຈົ້າໄດ້ສັງເກດບໍ່ວ່າຄົນໃນຊຸມຊົນຂອງເຈົ້າມີເປົ້າໝາຍໃນຊີວິດ?

ເປົ້າໝາຍໃນຊີວິດຂອງເຈົ້າແມ່ນຫຍັງ?

***ຈື່ງຈໍາໄວ້ວ່າ:*** ຢ່າເຮັດໃຫ້ເດັກຄົນອື່ນໆອາຍທີ່ວ່າບໍ່ສາມາດຕອບຄໍາຖາມ. ເປັນສິ່ງທີ່ດີຖ້າເດັກນ້ອຍມ່ວນຊື່ນກັບການຫຼິ້ນ ແລະ ມາຮ່ວມຕະຫຼອດ.

## ນິຍາມ: ການຄ້າມະນຸດ ແລະ ການເຄື່ອນຍ້າຍແຮງງານ

ບອກໃຫ້ຜູ້ເຂົ້າຮ່ວມນັ່ງເປັນວົງ.



ໃຫ້ທຸກຄົນໃນກຸ່ມຄິດໃນເລື່ອງທີ່ວ່າໂລກເຮົາມີການປ່ຽນແປງຕະຫຼອດເວລາ 20 ປີ ທີ່ຜ່ານມາ. ຖ້າຍາກທີ່ຈະຕອບຄໍາຖາມ, ໃຫ້ກຸ່ມອະທິບາຍບາງສິ່ງຈາກຊຸມຊົນຂອງພວກເຂົາໃນບ້ານໃນເມືອງທີ່ມີການປ່ຽນແປງໃນ 3 ປີຜ່ານມາ. ແລ້ວອະທິບາຍໂລກເຮົາປ່ຽນແປງມີເດັກໜຸ່ມຫຼາຍຄົນມີການເດີນທາງໄປຕ່າງປະເທດເພື່ອຊອກຫາວຽກເຮັດງານທໍາຫຼາຍກວ່າປະຫວັດຕິການ.

ໃຫ້ຜູ້ໃດໜຶ່ງເລົ່າເລື່ອງທີ່ເຂົາຮູ້ກັບຜູ້ທີ່ອອກຈາກບ້ານໄປຊອກວຽກເຮັດງານທໍາ

ຄໍາວ່າ ***"ການເຄື່ອນຍ້າຍແຮງງານ"*** ໝາຍຄວາມວ່າ: ເມື່ອທ່ານເຄື່ອນຍ້າຍໄປຊອກຫາວຽກເຮັດງານທໍາ. ***ແຮງງານເຄື່ອນຍ້າຍ*** ຄົນໜຶ່ງແມ່ນຜູ້ທີ່ຍ້າຍຖິ່ນ. ຖາມຜູ້ເຂົ້າຮ່ວມ: ພວກເຂົາຄິດແນວໃດເມື່ອໄດ້ຍິນຄໍາວ່າການເຄື່ອນຍ້າຍແຮງງານ? ໃຫ້ຜູ້ເຂົ້າຮ່ວມຂຽນເປັນຄໍາເວົ້າ ຫຼື ແຕ້ມສິ່ງທີ່ພວກເຂົາພົວພັນ ແລະ ສະແດງທີ່ພວກເຂົາໄດ້ຂຽນສາມາດໃຫ້ທຸກຄົນເຫັນໄດ້. ມັນເປັນສິ່ງທີ່ດີຖ້າຂຽນນິຍາມປະໄວ້ບ່ອນໃດໜຶ່ງພໍໃຫ້ຜູ້ເຂົ້າຮ່ວມແນມເຫັນໃນເວລາຫຼິ້ນກິດຈະກໍາ.

**ການເຄື່ອນຍ້າຍແຮງງານ** ເປັນສິ່ງທີ່ດີ, ມັນຊ່ວຍໃຫ້ໄວໜຸ່ມຊອກວຽກເຮັດງານທໍາ ຫຼື ເຫັນສະຖານທີ່ໃໝ່, ຫຼື ໄດ້ຮັບການສຶກສາ.ມີຫຼາຍຄົນໃນຫ້ອງນີ້ຄິດວ່າຈະເຄື່ອນຍ້າຍແຮງງານ.ແຕ່ວ່າການເຄື່ອນຍ້າຍແຮງງານກໍ່ມີຄວາມອັນຕະລາຍເຊັ່ນກັນ.ມີຫຼາຍຄົນຜູ້ທີ່ເອົາປຽບ ຫຼື ລອກລວງແຮງງານເຄື່ອນຍ້າຍໄວໜຸ່ມເພື່ອຫາເງິນຈາກເຂົາເຫຼົ່ານັ້ນໃສ່ຕົນເອງ. ເລກົນເຫຼົ່ານັ້ນສາມາດເຮັດໃຫ້ໄວໜຸ່ມຕົກຢູ່ໃນອັນຕະລາຍ.

ອະທິບາຍວ່າ ຍັງມີບົດຮຽນສອງສາມຕອນທີ່ເວົ້າເຖິງກ່ຽວກັບໄພອັນຕະລາຍທີ່ແຮງງານເຄື່ອນຍ້າຍໄດ້ປະເຊີນ. ແລະ ໃນຕອນທ້າຍຂອງເອກະສານນີ້ຍັງໄດ້ເວົ້າເຖິງວິທີເຮັດໃຫ້ແຮງງານເຄື່ອນຍ້າຍມີຄວາມປອດໄພ ແລະ ຊອກທາງເລືອກທີ່ດີກວ່າ.

ຈົ່ງອະທິບາຍຕື່ມອີກວ່າ: ບາງຄັ້ງຜູ້ເຄື່ອນຍ້າຍແຮງງານກໍ່ໄດ້ **"ຖືກຫຼອກເປັນຈໍານວນຫຼວງຫຼາຍ".**

ອະທິບາຍວ່າການຄ້າມະນຸດແມ່ນ**ການຫຼອກລວງ** ຫຼື **ບັງຄັບຄົນໂດຍການຂູດຮີດແຮງງານ,** ເຊິ່ງວ່າຜູ້ທີ່ຕົກເປັນເຫຍື່ອຈາກການຄ້າມະນຸດມີຊີວິດທີ່ລໍາບາກ.ການຄ້າມະນຸດແມ່ນກ່ຽວພັນເຖິງ**ການຫຼອກລວງ**ເອົາຜູ້ຖືກເຄາະຮ້າຍຈາກບ່ອນທີ່ເຂົາດໍາລົງຊີວິດຢູ່ໄປຍັງອີກສະຖານທີ່ແຫ່ງອື່ນ,ໂດຍການບັງຄັບ ຫຼື ຫຼອກລວງ. ເພື່ອຂູດຮີດແຮງງານ.ເຖິງຢ່າງໃດກໍ່ຕາມ, ເຈົ້າບໍ່ໄດ້ຍ້າຍຖິ່ນກໍ່ມີສິດຖືກຫຼອກເໝືອນກັນ.

ຖາມຜູ້ເຂົ້າຮ່ວມ: ພວກເຂົາຄິດແນວໃດເມື່ອໄດ້ຍິນຄໍາວ່າການເຄື່ອນຍ້າຍແຮງງານ? ໃຫ້ຜູ້ເຂົ້າຮ່ວມຂຽນເປັນຄໍາເວົ້າ ຫຼື ແຕ້ມທີພວກເຂົາພົວພັນ ແລະ ສະແດງທີ່ພວກເຂົາໄດ້ຂຽນສາມາດໃຫ້ທຸກຄົນເຫັນໄດ້. ມັນເປັນສິ່ງທີ່ດີຖ້າຂຽນນິຍາມປະໄວ້ບ່ອນໃດໜຶ່ງພໍໃຫ້ຜູ້ເຂົ້າຮ່ວມແນມເຫັນໃນເວລາຫຼິ້ນກິດຈະກໍາ.

**ການບັງຄັບ:** ອະທິບາຍວ່າເມື່ອຄົນຖືກຂາຍແລ້ວພວກເຂົາກໍ່ຈະໄດ້ຖືກບັງຄັບທາງດ້ານຈິດໃຈໃນທາງທີ່ແຕກຕ່າງກັນ. ບາງຄົນກໍ່ຖືກ**ຫຼອກລວງ**ວ່າເມື່ອໄປເຖິງທີ່ນັ້ນກໍ່ໄດ້ເຮັດວຽກທີ່ດີ, ແລະ ຖືກບັງຄັບໃຫ້ເຮັດວຽກຕ່າງຈາກທີ່ເວົ້າ. ບາງຄົນກໍ່ຖືກຂັງໃນໂຮງງານນັ້ນເລີຍຫຼືເຮືອຫາປາ ແລະ ບໍ່ສາມາດໜີໄປໄດ້ອີກເລີຍ. ບາງຄົນບອກວ່າຖ້າເຈົ້າລັກໜີນາຍໜ້າຈະມາທໍາຮ້າຍກັບສໍາມະຊິກຄອບຄົວຂອງເຈົ້າ. ນີ້ແມ່ນຮູບການທີ່ຖືກບັງຄັບຈາກຜູ້ຄ້າມະນຸດ.

**ການຫຼອກລວງ:** ຕົວຢ່າງຂອງການຫຼອກລວງແມ່ນການກະທໍາທີ່ປິດບັງທີ່ປັດສະຈາກຄວາມຈິງ ຫຼື ພຶດຕິກໍາທີ່ບໍ່ສັດ-ຊື່.

ອະທິບາຍຄຳວ່າ **"ການຂູດຮີດ"** ໝາຍຄວາມວ່າຄົນໜຶ່ງໃຊ້ອີກຄົນໜຶ່ງເຮັດວຽກເພື່ອເອົາຜົນປະໂຫຍດ. ເມື່ອຄົນທີ່ຖືກຄ້າ, ເຂົາເຫຼົ່ານັ້ນກໍ່ຖືກເອົາປະໂຫຍດຈາກ: ໂດຍການບັງຄັບໃຫ້ເຮັດວຽກໃນສິ່ງທີ່ພວກເຂົາບໍ່ຕ້ອງການ. ບັງຄັບໃຫ້ເຮັດວຽກໂດຍທີ່ບໍ່ໄດ້ຈ່າຍເງິນ, ບັງຄັບໃຫ້ຂາຍບໍລິການທາງເພດ ຫຼື ຕັດອາໄວຍະວະໃນຮ່າງກາຍເອົາອອກໄປຂາຍ.

ຖາມວ່າໃຜມີຄຳຖາມຫຍັງ. ອະທິບາຍວ່າພວກເຂົາຍັງຈະໄດ້ຮຽນເພີ່ມຕື່ມໃນຫົວຂໍ້ນີ້ໃນຕອນຕໍ່ໆໄປຂອງເອກະສານສະບັບນີ້.

(**ຜູ້ຄ້າມະນຸດ**ແມ່ນບຸກຄົນໜຶ່ງຜູ້ເຊິ່ງຫຼອກຄົນໄປຂາຍ)

ຈົ່ງບອກຜູ້ເຂົ້າຮ່ວມໝົດທຸກຄົນວ່າຜູ້ຄ້າມະນຸດມັກຈະສະເໜີງານໃຫ້ໄວໜຸ່ມເກີນຄວາມຈິງ. ໄວໜຸ່ມທີ່ຊອກຫາວຽກເຮັດງານທຳ ແລະ ກໍ່ພົບວ່າເມື່ອໄປເຖິງທີ່ໝາຍກໍ່ຖືກຫຼອກແລ້ວ. ເມື່ອໄວໜຸ່ມເຫັນວຽກດັ່ງກ່າວຢາກຄິດກັບບ້ານ, ແຕ່ວ່າບໍ່ສາມາດກັບບ້ານໄດ້. ບາງຄັ້ງນາຍໜ້າກໍ່ຂັງເດັກໃນໂຮງງານນັ້ນເລີຍ. ບາງຄັ້ງພວກເຂົາກໍ່ໄດ້ບອກວ່າບໍ່ສາມາດກັບບ້ານໄດ້ເພາະພວກເຂົາຕິດໜີ້ນາຍໜ້າຄ່າເດີນທາງມາ, ບາງຄັ້ງ ນາຍໜ້າກໍ່ຈະຂົ່ມຂູ່ຜູ້ເຄື່ອນຍ້າຍແຮງງານ, ນາຍໜ້າກໍ່ໄດ້ໃຊ້ຫຼາຍໆວິທີທາງເພື່ອບັງຄັບໃຫ້ເຮັດວຽກ ແລະ ເມື່ອຜູ້ເຄື່ອນຍ້າຍແຮງງານໄດ້ເຮັດວຽກແລ້ວພວກເຂົາກໍ່ເຮັດໃນສະພາບທີ່ລຳບາກໄດ້ຮັບເງິນເດືອນໜ້ອຍ ຫຼື ບໍ່ໄດ້ຮັບເງິນເລີຍກໍ່ມີ.

ອະທິບາຍຄວາມແຕກຕ່າງລະຫ່ວາງ**ການຄ້າມະນຸດ** ແລະ **ການລັກລອບເຂົ້າເມືອງ**ທີ່ຜິດກົດໝາຍ. ຫຼາຍຄົນເລືອກທີ່ຈະລັກລອບເຂົ້າເມືອງຜິດກົດໝາຍ. ເມື່ອບຸກຄົນໃດໜຶ່ງຫາກໄດ້ຖືກລັກລອບ, ພວກເຂົາຈ້າງໃຫ້ຄົນອື່ນລັກພາຂ້າມຊາຍແດນທີ່ຜິດກົດໝາຍ. ຄົນທີ່ຈ້າງເງິນພາຂ້າມຊາຍແດນເພື່ອລັກລອບ, ເມື່ອການເດີນທາງສິ້ນສຸດລົງພວກເຂົາກໍ່ມີອິດສະຫຼະໃນການໄປ, ເມື່ອພວກເຂົາຫາກຮອດປາຍທາງ. ຄົນຜູ້ທີ່ຖືກຄ້າຈະບໍ່ມີອິດສະຫຼະໃນການຈາກໄປ. ນີ້ກໍ່ບໍ່ໄດ້ໝາຍວ່າການລັກລອບເຂົ້າເມືອງຈະປອດໄພ. ຜູ້ທີ່ລັກຫລອບຂ້າມດ່ານສາກົນກໍ່ມີຄວາມສ່ຽງຫຼາຍໆຢ່າງ. ຕົວຢ່າງເຂົາເຫຼົ່ານັ້ນອາດຖືກຂົ່ມຂືນຈາກຜູ້ນຳພາໄປ, ຫຼື ຖືກລັກເງິນ. ເມື່ອເຖິງທີ່ໝາຍອາດຖືກລອກລວງເພາະວ່າພວກເຂົາລັກລອບເຂົ້າເມືອງທີ່ຜິດກົດໝາຍ ແລະ ບໍ່ມີໜັງສືເດີນທາງ.

ຈົ່ງບອກຜູ້ເຂົ້າຮ່ວມວ່າການຄ້າແບບນີ້ມັກເກີດຂຶ້ນກັບເດັກຊາຍ, ຍິງ, ຊາຍໜຸ່ມ ແລະ ຍິງໜຸ່ມ.

## ກິດຈະກຳ ການສ່ຽງຈັກຫຼຽນ

ບອກໃຫ້ກຸ່ມຕົບມື. ສົ່ງຖົງຫຼຽນຕໍ່ໆອ້ອມກຸ່ມ. ອະທິບາຍວ່າເມື່ອພວກເຂົາຍົກມືຂຶ້ນກໍ່ໃຫ້ເຊົາຕົບມື. ໃຜທີ່ຖືຖົງຢູ່ນັ້ນຕ້ອງຫຼັບຕາ, ຈົກເອົາຫຼຽນອອກແລ້ວໂຍນຖົງລົງພື້ນ. ເມື່ອຫຼຽນຫາກໄດ້ສິ່ງຕໍ່ແລ້ວກໍ່ໃຫ້ທຸກຄົນຢຸດຕົບມື ແລະ ກໍ່ອ່ານຫຼຽນດັ່ງໆ.

ໃຫ້ກຸ່ມສົນທະນາວ່າກໍລະນີນີ້ແມ່ນການຄ້າມະນຸດບໍ່ ຫຼື ການເຄື່ອນຍ້າຍແຮງງານແລ້ວຖາມພວກເຂົາອະທິບາຍວ່າເປັນຫຍັງ. ເມື່ອອະທິບາຍແລ້ວພັບຫຼຽນ ແລະ ຂ້າງອື່ນ.ໃຫ້ກຸ່ມອະທິບາຍຂ້າງນັ້ນມີຄວາມແຕກຕ່າງກັນແນວໃດ.

## ສຶກສາເຖິງນິຍາມ

ເອົາປື້ມນ້ອຍ ການເຄື່ອນຍ້າຍແຮງງານທີ່ປອດໄພອອກມາ. ໃຫ້ອະທິບາຍວ່າປື້ມສະບັບນີ້ໄດ້ຮວບຮວມເອົາຂໍ້ມູນທີ່ຈຳເປັນສຳລັບຜູ້ເຂົ້າຮ່ວມ. ໃຫ້ແຕ່ລະຄົນຂຽນຊື່ຂອງໃຜລາວໃສ່ປື້ມດັ່ງກ່າວນີ້ເຊິ່ງວ່າພວກເຮົາ



ຈະນຳໃຊ້ມັນຄຽງຄູ່ກັບເຄື່ອງມືນີ້ ແລະ ໃຫ້ທຸກຄົນເກັບໄວ້ນຳກັນກັບປື້ມບັນທຶກລາຍວັນ ເພື່ອມັນຈະບໍ່ເສຍ. ເມື່ອຮຽນຈົບຫຼັກສູດນີ້ແລ້ວທຸກຄົນຈະຕ້ອງຖືໄວ້ປະຈຳຕົວຕະຫຼອດໄປ

ໃຫ້ອະທິບາຍກົດໝາຍຕ່າງໆທີ່ພົວພັນເຖິງ**ການຄ້າເດັກນ້ອຍ**, ວ່າມັນມີຄວາມແຕກຕ່າງກັນແນວໃດກ່ຽວກັບກົດໝາຍ **ການຄ້າຜູ້ໃຫຍ່**. ຖ້າເດັກນ້ອຍຜູ້ໜຶ່ງຫາກຖືກຂູດຮີດແຮງງານ, ຂູດຮີດທາງເພດ ຫຼື ຂູດຮີດທາງກາຍ, ສິ່ງເຫຼົ່ານີ້ກໍ່ແມ່ນການຄ້າມະນຸດ. ສຳລັບເດັກນ້ອຍຜູ້ທີ່ພິຈາລະນາວ່າຖືກຄ້າແລ້ວພວກເຂົາກໍ່ບໍ່ຕ້ອງການສະແດງອອກວ່າພວກເຂົາຖືກບັງຄັບ ຫຼື ຖືກຄວບຄຸມ. ເທົ່ານີ້ກໍ່ພຽງພໍແລ້ວທີ່ຈະສະແດງວ່າແມ່ນການກະທຳຂອງທຸກຄົນໃດໜຶ່ງທີ່ເຮັດໃຫ້ເດັກນ້ອຍຄົນນັ້ນຢູ່ໃນສະຖານະການທີ່ຖືກຂູດຮີດແຮງງານ.

ຈົ່ງອະທິບາຍວ່າການຄ້າມະນຸດນີ້ມັກກ່ຽວພັນຢູ່ກັບການເຄື່ອນຍ້າຍໄປມາຢູ່ສະເໝີ, ບໍ່ຕ້ອງມີການເຄື່ອນຍ້າຍເພື່ອບໍ່ໃຫ້ຖືກຄ້າມະນຸດ.

ບອກບັນດາຜູ້ເຂົ້າຮ່ວມທັງໝົດແບ່ງເປັນສອງກຸ່ມເອົາສຳເນົາເອກະສານ **3 ຂ: (ການຄ້າມະນຸດແມ່ນຫຍັງ?)** ການເຄື່ອນຍ້າຍແຮງງານແມ່ນ? ໃຫ້ແຕ່ລະກຸ່ມໃຫ້ພວກເຂົາອ່ານຈົນໝົດຢູ່ໃນໜ້ານັ້ນພ້ອມກັນ ແລະ ໃຫ້ກຳນົດວ່າມີຄຳຖາມອັນໃດທີ່ພວກເຂົາເຫັນວ່າພວກເຂົາສາມາດຊ່ວຍໃຫ້ຄົນອື່ນນຳໃຊ້ເອກະສານຂໍ້ມູນກ່ອນ, ກ່ອນຖ້າພວກເຂົາບໍ່ສາມາດ ແລະ ພວກເຂົາກໍ່ຖາມເຮົາກ່ຽວກັບຄຳຖາມເຫຼົ່ານັ້ນ.

## ຂຽນບັນທຶກປະຈຳວັນ

ໃຫ້ແຕ່ລະກຸ່ມຂຽນ ຫຼື ແຕ້ມຮູບໃສ່ບັນທຶກລາຍວັນຂອງພວກເຂົາທີ່ພັນລະນາເຖິງຄົນທີ່ພວກເຂົາຮູ້ຜູ້ເຊິ່ງຈາກບ້ານໄປຊອກວຽກເຮັດງານທຳຢູ່ຖິ່ນອື່ນ, ອະທິບາຍເຖິງສະຖານທີ່ທີ່ພວກເຂົາໄປ ແລະ ວຽກງານທີ່ພວກເຂົາໄດ້ເຮັດ. ໃຫ້ພວກເຂົາຂຽນກ່ຽວກັບບຸກຄົນເຫຼົ່ານັ້ນວ່າມີຄວາມປອດໄພ ຫຼື ບໍ.ພາຍຫຼັງ (15 ນາທີ) ຜ່ານໄປ, ໄປເກັບເອົາບັນທຶກລາຍວັນມາຮັກສາໃນກ່ອງໄວ້.ບໍ່ໃຫ້ຜູ້ເຂົ້າຮ່ວມນັ້ນເລົ່າເລື່ອງທີ່ພວກເຂົາຂຽນ.

### ສະຫຼຸບບົດຮຽນ

• **ການເຄື່ອນຍ້າຍແຮງງານ**ແມ່ນອະທິບາຍເຖິງຄົນເຮົາຍ້າຍຖິ່ນຖານໄປຊອກວຽກເຮັດງານທຳ, **ແຮງງານເຄື່ອນຍ້າຍ**ແມ່ນອະທິບາຍເຖິງບຸກຄົນໜຶ່ງເຊິ່ງວ່າເຄື່ອນຍ້າຍໄປ. ບໍ່ໄດ້ໝາຍຄວາມວ່າແຮງງານເຄື່ອນຍ້າຍໝົດທຸກຄົນຈະຖືກຄ້າມະນຸດ.

• **ການຄ້າມະນຸດມີສາມອົງປະກອບ**

- **(ການກະທຳ).** ການຊອກຫາແຮງງານ, ການຂົນສົ່ງ, ການນຳສົ່ງ, ການມອບສົ່ງ ຫຼື ການໄປຮັບເອົາຄົນ.

- **(ວິທີການ: ບໍ່ໄດ້ຕ້ອງການສະເພາະວ່າແຕ່ເດັກ 18 ປີ ຫຼື ໜຸ່ມກວ່າ )**

ການຂົ່ມຂູ່ ຫຼື ໃຊ້ແບບບັງຄັບ ຫຼື ຮູບການຂູ່ເຂັນອື່ນໆ, ລັກພາຕົວ, ການຕົວະຍົວະ, ການຫຼອກລວງ, ການໃຊ້ອຳນາດຂົ່ມຂູ່.

- ຈຸດປະສົງ).ການຂູດຮີດ-ຂູດຮີດແຮງງານ / ການເປັນຂ້າທາດ, ການເປັນໂສເພນີ ຫຼື ການຕັດອະໄວຍະວະເພື່ອໄປຂາຍ.

• ການຄ້າເດັກນ້ອຍ.ຖ້າເດັກນ້ອຍຜູ້ໃດໜຶ່ງຫາກຖືກຂູດຮີດແຮງງານ, ຂູດຮີດທາງເພດ ຫຼື ທາງຮ່າງກາຍ ກໍລະນີ້ຮຽກວ່າແມ່ນ: ການຄ້າມະນຸດ. ສໍາລັບເດັກນ້ອຍຜູ້ທີ່ຖືກຄ້າມະນຸດແລ້ວພວກເຂົາມັກຈະບອກວ່າ ບອກເຂົາຖືກບັງຄັບ ຫຼື ຖືກຄວບຄຸມ.

• ການຄ້າມະນຸດແມ່ນ ແຕກຕ່າງກັບການລັກລອບເຂົ້າເມືອງທີ່ຜິດກົດໝາຍ ເພາະວ່າຄົນເຮົາສ່ວນຫຼາຍນັ້ນເລືອກທີ່ຈະລັກລອບເຂົ້າເມືອງຜິດກົດໝາຍ ແລະ ພວກເຂົາບໍ່ໄດ້ເລືອກໃຫ້ໄປເປັນຜູ້ຖືກຄ້າມະນຸດ.

### ປິດທ້າຍບົດຮຽນ:

ໃຫ້ຜູ້ເຂົ້າຮ່ວມຊຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ບອກວ່າພວກເຮົາຍັງມີເວລາອີກ 10 ນາທີ ຖ້າບຸກຄົນໃດໃນກຸ່ມນີ້ຫາກມີຄໍາຖາມ ຫຼື ຢາກຈະລົມເປັນການສ່ວນຕົວ.

ຂອບໃຈໝົດທຸກຄົນທີ່ມາເຂົ້າຮ່ວມໃນການຝຶກຄັ້ງນີ້. ກໍານົດເວລາໃນການຝຶກຄັ້ງໜ້າ.ໃຫ້ບອກໝົດທຸກຄົນວ່າຜູ້ທີ່ເຂົ້າມາຮ່ວມນີ້ແມ່ນທຸກຄົນໄດ້ຮັບດາວຜູ້ລະ 1 ດາວ.



# ເອກະສານອ້າງອີງ 3 ກ: ເກມສ່ຽງຫຼຽນ

## ການເຄື່ອນຍ້າຍແຮງງານ

ນ. ແອັດ ອາຍຸ 19 ປີ ອາໄສຢູ່ປະເທດລາວ ປ້າຂອງລາວໄດ້ບອກກັບແອັດ ວ່າ ລາວຈະຊອກວຽກທີ່ດີໃຫ້ເອັດ ຢູ່ປະເທດໄທ. ນ. ແອັດ ກໍໄດ້ຕົກລົງ ນ. ແອັດໄດ້ຖືກພາມາທີ່ນະຄອນຫຼວງປະເທດໄທ ກຸງເທບ ແລະ ແລ້ວກໍ່ໄດ້ປະໃຫ້ນ. ແອັດຢູ່ໃນເຮືອນແຫ່ງໜຶ່ງບ່ອນທີ່ມີຍິງສາວຫຼາຍໆຄົນອາໄສຢູ່. ນ. ແອັດໄດ້ອາໄສຢູ່ທີ່ນັ້ນເປັນເວລາສາມອາທິດມີຍິງຄົນໜຶ່ງຜູ້ເຊິ່ງດູແລພວກຜູ້ຍິງ, ຜູ້ທີ່ຖືໜັງສືເດີນທາງ ແລະ ເອກະສານຕ່າງໆຂອງພວກເຂົາ.

ໃນທີ່ສຸດ, ນ. ແອັດກໍ່ໄດ້ບິນໄປທີ່ປະເທດໄທ, ລາວໄດ້ເຮັດວຽກໃຫ້ກັບຄອບຄົວໜຶ່ງ. ແອັດຕ້ອງໄດ້ເຮັດວຽກຢູ່ທີ່ນັ້ນເປັນເວລາສາມປີ, ລາວໄດ້ຮັບເງິນເດືອນໜ້ອຍ.

## ການຄ້າມະນຸດ

ນ. ແອັດ ອາຍຸ 19 ປີ ອາໄສຢູ່ປະເທດລາວ ປ້າຂອງລາວໄດ້ບອກກັບ ແອັດ ວ່າ ລາວຈະຊອກວຽກທີ່ດີໃຫ້ແອັດ ຢູ່ປະເທດໄທ. ນ. ແອັດ ກໍໄດ້ຕົກລົງ ນ. ແອັດໄດ້ຖືກພາໄປທີ່ນະຄອນຫຼວງຂອງປະເທດໄທ (ກຸງເທບ) ແລະ ແລ້ວກໍ່ໄດ້ປະໃຫ້ ນ. ແອັດ ຢູ່ໃນເຮືອນແຫ່ງໜຶ່ງບ່ອນທີ່ມີຍິງສາວຫຼາຍໆຄົນອາໄສຢູ່. ນ. ແອັດໄດ້ອາໄສຢູ່ທີ່ນັ້ນເປັນເວລາສາມອາທິດມີຍິງຄົນໜຶ່ງຜູ້ເຊິ່ງດູແລພວກຜູ້ຍິງ, ຜູ້ທີ່ຖືໜັງສືບເດີນທາງ ແລະ ເອກະສານຕ່າງໆຂອງພວກເຂົາ. ພວກເຂົາໄດ້ເອົາອາຫານມາໃຫ້ແຕ່ບໍ່ອະນຸຍາດໃຫ້ອອກຈາກເຮືອນ. ພວກເຂົາໄດ້ຖືກຂັງຢູ່ທີ່ນັ້ນ.

ໃນທີ່ສຸດ ນ. ແອັດກໍ່ໄດ້ບິນໄປທີ່ປະເທດມາເລເຊຍ, ລາວໄດ້ເຮັດວຽກໃຫ້ກັບຄອບຄົວໜຶ່ງ.ພວກເຂົາໄດ້ບອກກັບລາວວ່າລາວໄດ້ຕິດໜີ້ຄ່າປີ້ຍົນ ແລະ ກໍ່ຄ່າເຮັດໜັງສືເດີນທາງ ແລະ ຄ່າອາຫານຕ່າງໆ ເຊິ່ງ ນ.ແອັດຕ້ອງໄດ້ເຮັດວຽກຢູ່ທີ່ນັ້ນເປັນເວລາ3ປີກ່ອນທີ່ເຂົາຈະຈ່າຍເງິນໃຫ້ແກ່ລາວ. ພວກເຂົາຂັງລາວໄວ້ຢູ່ໃນເຮືອນຫ້ອງແຖວ ແລະ ບອກກັບລາວວ່າບໍ່ໃຫ້ລາວອອກຈາກເຮືອນ ແລະ ບໍ່ໃຫ້ໂທຫາຄອບຄົວອີກ.

## ການເຄື່ອນຍ້າຍແຮງງານ

ທ. ວີ ເປັນຊາຍໜຸ່ມທີ່ດໍາລົງຊີວິດຢູ່ປະເທດລາວ. ລາວມີເພື່ອນຫຼາຍຄົນທີ່ໄປເຮັດວຽກຢູ່ປະເທດໄທ ແລະ ວີກໍ່ໄດ້ຕັດສິນໃຈຕາມພວກເຂົາໄປລາວໄດ້ຮູ້ຈັກກັບຊາຍຄົນໜຶ່ງຜູ້ທີ່ບອກກັບວີວ່າຈະຫາວຽກຢູ່ໂຮງງານປາກະປ໋ອງແຫ່ງໜຶ່ງ. ຊາຍຄົນນັ້ນບອກກັບວີວ່າລາວຈະຈ່າຍຄ່າເດີນທາງໃຫ້ວີ ແລະ ວີ ກໍ່ຈະຈ່າຍໃຫ້ລາວຄືນເມື່ອ ວີ ໄດ້ຮັບເງິນເດືອນ ວີກໍ່ໄດ້ເດີນທາງກັບຊາຍຄົນນັ້ນຂ້າມຊາຍແດນໄປປະເທດໄທເມື່ອລາວໄປຮອດສະຖານທີ່ບ່ອນເຮັດວຽກລາວໄດ້ເລີ່ມເຮັດວຽກຢູ່ທີ່ໂຮງງານນັ້ນ.ເປັນວຽກທີ່ຫຍຸ້ງຍາກລໍາບາກ ແລະ ລາວກໍ່ໄດ້ຖືກບັງຄັບໃຫ້ເຮັດວຽກຫຼາຍຊົ່ວໂມງ. ລາວໄດ້ຮັບເງິນເດືອນໜ້ອຍພໍແຕ່ໄດ້ຊື້ກິນ ວີ ໄດ້ເຮັດວຽກຢູ່ທີ່ໂຮງງານນັ້ນເປັນເວລາສາມປີ

## ການຄ້າມະນຸດ

ທ. ວີ ເປັນຊາຍໜຸ່ມທີ່ດຳລົງຊີວິດຢູ່ປະເທດລາວ. ລາວມີເພື່ອນຫຼາຍຄົນທີ່ໄປເຮັດວຽກຢູ່ປະເທໄທ ແລະ ວີກໍ່ໄດ້ຕັດສິນໃຈຕາມພວກເຂົາໄປລາວໄດ້ຮູ້ຈັກກັບຊາຍຄົນໜຶ່ງຜູ້ທີ່ບອກກັບວີວ່າຈະຫາວຽກຢູ່ໂຮງງານປາກະປ໋ອງແຫ່ງໜຶ່ງ. ຊາຍຄົນນັ້ນບອກກັບວີວ່າລາວຈະຈ່າຍຄ່າເດີນທາງໃຫ້ວີ ແລະ ວີ ກໍ່ຈະຈ່າຍໃຫ້ລາວຄືນເມື່ອ ວີ ໄດ້ຮັບເງິນເດືອນ ວີກໍ່ໄດ້ເດີນທາງກັບຊາຍຄົນນັ້ນຂ້າມຊາຍແດນໄປປະເທດໄທ ເມື່ອລາວໄປຮອດສະຖານທີ່ບ່ອນເຮັດວຽກມັນກໍ່ບໍ່ແມ່ນວຽກທີ່ລາວໄດ້ເຄີຍບອກກັບວີໄວ້ນັ້ນ ວີ ຕ້ອງໄດ້ເຮັດວຽກເປັນເວລາຫຼາຍຊົ່ວໂມງ ແລະ ເຮັດວຽກກັບນາຍໜ້າທີ່ເປັນຄົນບໍ່ດີເຂົາໄດ້ລົງໂທດວີ ໂດຍການເອົາໄມ້ແສ່ເຫຼັກຕີເຂົ້າທີ່ເກາງດັງ, ວີຄິດຢາກຈະໜີແຕ່ວ່າລາວຍັງຕິດໜີ້ຄ່າເດີນທາງຖ້າລາວຄິດຈະໜີເຈົ້າຂອງໂຮງງານກໍ່ຈະໂທຫາຕຳຫຼວດມາຈັບເອົາວີໄປ

## ການເຄື່ອນຍ້າຍແຮງງານ

ນ. ເອັມ ເປັນຍິງສາວຈາກປະເທດລາວ ແມ່ຂອງລາວບໍ່ສະບາຍດັ່ງນັ້ນລາວຈຶ່ງໄດ້ເຂົ້າໄປຫາເພື່ອນບ້ານທີ່ເປັນຄົນຮັ່ງມີ ແລະ ໃຫ້ເຂົາຊ່ວຍຫາວຽກໃຫ້ເຮັດເພື່ອນບ້ານໄດ້ບອກກັບເອັມວ່າຈະຫາວຽກໃຫ້ເຮັດຢູ່ທີ່ນະຄອນປະເທດໄທ ( ກຸງເທບ) ຄືເປັນຜູ້ລ້າງຈານ ທີ່ຮ້ານອາຫານແຫ່ງໜຶ່ງ.ນາງເອັມກໍ່ຕົກລົງ ແລະ ເດີນທາງໄປປະເທດໄທ, ແລະ ເລີ່ມເຮັດເປັນລ້າງຈານ, ຜູ້ອານາໄມ ວຽກໜັກ ແລະ ເຮັດວຽກຄົນດຽວ ແຕ່ວ່າ ລາວໄດ້ໂຮມເງິນ ແລະ ສົ່ງໃຫ້ແມ່ຂອງລາວ.

## ການຄ້າມະນຸດ

ນ. ເອັມ ເປັນຍິງສາວຈາກປະເທດຫວຽດນາມແມ່ຂອງລາວບໍ່ສະບາຍດັ່ງນັ້ນລາວຈຶ່ງໄດ້ເຂົ້າໄປຫາເພື່ອນບ້ານທີ່ເປັນຄົນຮັ່ງມີ ແລະ ໃຫ້ເຂົາຊ່ວຍຫາວຽກໃຫ້ເຮັດເພື່ອນບ້ານໄດ້ບອກກັບເອັມວ່າຈະຫາວຽກໃຫ້ເຮັດຢູ່ທີ່ນະຄອນໂຮ່ຈິມິນຄືເປັນຜູ້ລ້າງຈານຢູ່ທີ່ຮ້ານອາຫານ. ນ ເອັມກໍ່ໄດ້ຕົກລົງເມື່ອລາວໄປເຖິງນະຄອນໂຮ່ຈິມິນລາວກໍ່ໄດ້ພົບວ່າຄວາມຈິງແລ້ວຮ້ານອາຫານນັ້ນແມ່ນຮ້ານຂາຍບໍລິການ. ມັນກໍ່ຊ້າໄປແລ້ວເຈົ້າຂອງຮ້ານຂາຍບໍລິການນັ້ນໄດ້ບອກກັບເອັມວ່າ ລາວຄວນນອນຢູ່ທີ່ນີ້ກ່ອນຄືນໜຶ່ງແລ້ວມື້ອື່ນເຊົ້າຈຶ່ງອອກໄປ. ແຕ່ວ່າເຊົ້າຕໍ່ມາເຈົ້າຂອງຮ້ານບໍລິການໄດ້ບອກກັບເອັມວ່າເພື່ອນບ້ານຂອງເຈົ້າໄດ້ຂາຍເຈົ້າໃຫ້ກັບຮ້ານຂ້ອຍ ແລ້ວເຈົ້າຂອງຮ້ານໄດ້ບອກກັບເອັມເຈົ້າຕ້ອງຂາຍບໍລິການທາງເພດເພື່ອແລກກັບເງິນຄ່າໄຖ່ຕົວ ຫຼື ຖ້າບໍ່ດັ່ງນັ້ນຕຳຫຼວດກໍ່ຈະໄປທຳຮ້າຍແມ່ຂອງເຈົ້າ. ເອັມໄດ້ຢູ່ທີ່ນັ້ນ ແລະ ເຮັດວຽກເປັນໂສເພນີໃນຮ້ານຂາຍບໍລິການ.



# 3 ເອກະສານອ້າງອີງ: ການຄ້າມະນຸດແມ່ນຫຍັງ? ການເຄື່ອນຍ້າຍແຮງງານແມ່ນຫຍັງ?

| ການກະທຳ | | ວິທີການ | | ຈຸດປະສົງ | |
|---|---|---|---|---|---|
| ການຊອກຫາແຮງງານ, ການຂົນສົ່ງ, ການນຳສົ່ງ, ການມອບສົ່ງ ຫຼື ຮັບຄົນ | + | ການຂົ່ມຂູ່ ຫຼື ໃຊ້ແບບບັງຄັບ ຫຼື ຮູບການຂູ່ເຂັນອື່ນໆ. ລັກພາຕົວ, ການຕົວະຍົວະ, ການລອກລວງ, ການໃຊ້ອຳນາດຂົ່ມຂູ່. | + | ການຂູດຮີດ-ຂູດຮີດແຮງງານ, ການເປັນຂ້າທາດ, ການເປັນໂສເພນີ ຫຼື ການຕັດອະໄວຍະວະເພື່ອໄປຂາຍ. | = ການຄ້າມະນຸດ |

**ການຄ້າມະນຸດແມ່ນ:** ການຕົວະຍົວະຂູດຮີດແຮງງານຄົນໃນຮູບການຕ່າງໆ, ເຊິ່ງເຮັດໃຫ້ມີຄວາມລຳບາກ. ການຄ້າມະນຸດແມ່ນພົບເຫັນໄດ້ຈາກການເອົາຜູ້ຖືກເຄາະຮ້າຍຈາກບ່ອນທີ່ເຂົາດຳລົງຊີວິດຢູ່ໄປອີກສະຖານທີ່ອື່ນໂດຍການບັງຄັບເພື່ອຈຸດປະສົງຂູດຮີດແຮງງານ.

**ການບັງຄັບ:** ເມື່ອຄົນໃດຫາກຖືກຄ້າມະນຸດແລ້ວພວກເຂົາເຫຼົ່ານັ້ນກໍ່ຖືກບັງຄັບຕາມວິທີທາງທີ່ແຕກຕ່າງກັນ. ບາງຄົນນັ້ນກໍ່ຖືກຫລອກວ່າຈະມີວຽກເຮັດງານທຳທີ່ດີເມື່ອໄປເຖິງຈຸດໝາຍ ແລະ ບາງຄົນກໍ່ຖືກຫລອກບັງຄັບເຮັດວຽກໃນສິ່ງທີ່ຕົນເອງບໍ່ມັກ. ອີກຫຼາຍໆຄົນກໍ່ໄດ້ຖືກຂັງໄວ້ຢູ່ໃນໂຮງງານ ຫຼື ຢູ່ເຮືອເຊິ່ງບໍ່ສາມາດໜີໄປທາງໃດໄດ້ອີກ. ແລະ ມີຄົນຈຳນວນຫຼວງຫຼາຍກໍ່ໄດ້ຖືກນາຍໜ້າຂູ່ເຂັນວ່າຖ້າພວກເຂົາລັກໜີນາຍໜ້າກໍ່ຈະໄປທຳຮ້າຍສະມາຊິກຄອບຄົວຜູ້ນັ້ນ, ສິ່ງເຫຼົ່ານີ້ຮຽກວ່າ: ຮູບການບັງຄັບ.

**ການຂູດຮີດແຮງງານ:** ອະທິບາຍວ່າສະຖານະການແບບນີ້ແມ່ນບຸກຄົນໜຶ່ງທີ່ສວຍໂອກາດໃຊ້ຄົນອື່ນເພື່ອທຳງານ, ປົກກະຕິແລ້ວແມ່ນເພື່ອຫວັງເອົາຜົນກຳໄລຈາກບຸກຄົນເຫຼົ່ານັ້ນ, ຫຼາຍຄົນທີ່ຖືກຫລອກພວກເຂົາກໍ່ຖືກຂູດຮີດແຮງງານໂດຍການບັງຄັບໃຫ້ເຮັດວຽກທີ່ພວກເຂົາບໍ່ຢາກຈະເຮັດ, ໄດ້ບັງຄັບໃຫ້ເຮັດວຽກໂດຍທີ່ບໍ່ໄດ້ຈ່າຍເງິນ, ບັງຄັບໃຫ້ມີເພດສຳພັນ ຫຼື ຂາຍບໍລິການທາງເພດ ຫຼື ບາງຄັ້ງກໍ່ມີການບັງຄັບຕັດເອົາອະໄວຍະວະຮ່າງກາຍອອກມາຂາຍ.

**ການຄ້າເດັກນ້ອຍ:** ຖ້າເດັກນ້ອຍຫາກໄດ້ຖືກຂູດຮີດແຮງງານ, ຂູດຮີດທາງເພດ ຫຼື ຂູດຮີດທາງຮ່າງກາຍເຫຼົ່ານີ້ຮຽກວ່າການຄ້າມະນຸດ. ສຳລັບເດັກນ້ອຍຜູ້ທີ່ຖືກຄ້າມະນຸດແລ້ວ, ພວກເຂົາບໍ່ອາດຈະບອກໃຜເລີຍວ່າພວກເຂົາໄດ້ຖືກບັງຄັບ ແລະ ຖືກຄຸມຕົວ ຫຼັກຖານເຫຼົ່ານີ້ກໍ່ພຽງພໍແລ້ວວ່າແມ່ນການກະທຳຂອງບຸກຄົນໃດໜຶ່ງທີ່ເຮັດໃຫ້ເດັກນ້ອຍຕົກຢູ່ໃນສະຖານະການຖືກຂູດຮີດແຮງງານ.

**ການເຄື່ອນຍ້າຍແຮງງານ:** ເມື່ອເຈົ້າເຄື່ອນຍ້າຍໄປເຮັດວຽກ. ຜູ້ເຄື່ອນຍ້າຍແຮງງານແມ່ນບຸກຄົນຜູ້ທີ່ຍ້າຍຖິ່ນ.

# 4 ບົດທີ 4: ການຄ້າມະນຸດ ສາມາດເກີດຂຶ້ນໄດ້ທຸກບ່ອນ

**ຈຸດປະສົງ: ບັນດາຜູ້ເຂົ້າຮ່ວມສາມາດນິຍາມ "ຜູ້ຄ້າມະນຸດ" ໃຫ້ເຂົ້າໃຈເຖິງການຄ້າມະນຸດສາມາດເກີດໄດ້ໃນທຸກໆສະຖານທີ່ເຊິ່ງວ່າຜູ້ຄ້າມະນຸດນັ້ນອາດມີຫຼາຍຄົນຮ່ວມໃນຂະບວນການ, ຜູ້ຄ້າມະນຸດອາດເປັນເພື່ອນຂອງເຈົ້າ, ເພື່ອນບ້ານ, ຄົນແປກໜ້າ ຫຼື ພີ່ນ້ອງຂອງເຈົ້າເອງ**

## ເວລາ:

80 ນາທີ

## ການກະກຽມ

ແຂວນເອກະສານອ້າງຂ: ປ້າຍບອກສະຖານທີ່ ໃສ່ຝາແຕ່ລະປ້າຍຫ່າງກັນປະມານ 2 ແມັດ.

### ອຸປະກອນ

- ❖ ສຳເນົາເອກະສານອ້າງອີງ 4 ກ ຢ່າງໜ້ອຍ 5 ສະບັບ: (ຂໍ້ຄວາມທີ່ໃຊ້ໃນການເດີນທາງ) ຕັດເປັນຕອນໆ (ຜູ້ເຂົ້າຮ່ວມທຸກຄົນຕ້ອງມີໄວ້ຄົນລະອັນ ແລະ ມີ5ຢ່າງຢູ່ໃນການເດີນທາງເຫຼົ່ານີ້)
- ❖ ຂຽນສຳເນົາ4ຂ: ເປັນຕົວອັກສອນໃຫຍ່ປ້າຍບອກສະຖານທີ່
- ❖ ສຳເນົາ4ຄ: ໂສມໜ້າຂອງຜູ້ຄ້າມະນຸດເຊິ່ງໄດ້ອະທິບາຍໃສ່ກ້ອງແຕ່ລະພາບເພື່ອອ້າງອີງແຕ່ຕ້ອງລວມເຂົ້າໃນບົດຮຽນ

## ການແນະນຳ:

**ຍິນດີຕ້ອນຮັບຜູ້ເຂົ້າຮ່ວມ:**

ໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ.

**ອົບອຸ່ນຮ່າງກາຍ:**

ເລືອກເອົາເກມທີ່ມີຢູ່ໃນລາຍການ.

**ທວນຄືນບົດຮຽນ:**

ໂດຍການຕັ້ງຄຳຖາມ

(ບອກໃຫ້ພວກເຂົາເບິ່ງຄືນທີ່ເອກະສານຂໍ້ມູນຈາກອາທິດກ່ອນຖ້າວ່າຍັງສັບສົນຢູ່).

ການເຄື່ອນຍ້າຍແຮງງານແມ່ນຫຍັງ?

ການຄ້າມະນຸດແມ່ນຫຍັງ?

ການລັກລອບເຂົ້າເມືອງທີ່ຜິດກົດໝາຍແຕກຕ່າງກັບການຄ້າມະນຸດແນວໃດ?

## ການເດີນທາງ ແລະ ອຸບາຍຂອງຜູ້ຄ້າມະນຸດ

ອະທິບາຍໃຫ້ຜູ້ເຂົ້າຮ່ວມວ່າ: ມີຫຼາຍຄົນທີ່ໄດ້ປະໂຫຍດແຕ່ລະຂັ້ນຕອນຂອງຂະບວນການຄ້າມະນຸດ. ຄົນເຫຼົ່ານັ້ນລ້ວນແລ້ວແຕ່ອີງໃສ່ນາຍໜ້າ. ຜູ້ຄ້າມະນຸດແມ່ນບຸກຄົນໜຶ່ງທີ່ຮູ້ດີວ່າຈະໄດ້ຮັບປະໂຫຍດຈາກການ: ຈັດຫາຄົນງານ, ນຳສົ່ງ, ກັກຕົວ ຫຼື ຂູດຮີດແຮງງານຄົນຜູ້ນັ້ນ. ຈະບໍ່ແມ່ນແຕ່ມີຜູ້ຄ້າມະນຸດພຽງຄົນດຽວ ແຕ່ຍັງມີຫຼາຍຄົນທີ່ກຳລັງດຳເນີນຂະບວນການນີ້ຢູ່.



ອະທິບາຍວ່າບົດຮຽນນີ້ ເຖິງການເດີນທາງຂອງຜູ້ເຄື່ອນຍ້າຍແຮງງານທີ່ພາໃຫ້ພວກເຂົາຈາກບ້ານເກີດເມືອງນອນໄປຫາຊອກວຽກເຮັດງານທຳຢູ່ສະຖານທີ່ບ່ອນໃໝ່.

ອະທິບາຍຕື່ມອີກວ່າບົດຮຽນຕອນນີ້ຈະກວມເອົາເລື່ອງທີ່ຜູ້ເຄື່ອນຍ້າຍແຮງງານຖືກຫລອກໃນລະຫວ່າງການເດີນທາງນັ້ນວ່າຖືກຫລອກແນວໃດ ແລະ ເມື່ອໃດ.

### ປ້າຍຂໍ້ຄວາມທີ່ໃຊ້ໃນການເດີນທາງ.

ຊີ້ໃສ່ປ້າຍບອກສະຖານທີ່ຢູ່ເທິງຝາທີ່ຕິດໄວ້.ອ່ານດັງໆ. ອະທິບາຍແຕ່ລະປ້າຍທີ່ຕິດໄວ້ຕາມລຳດັບນັ້ນວ່າພວກເຂົາບົ່ງບອກເຖິງຕອນໃດແລ້ວຂອງການເດີນທາງຜູ້ເຄື່ອນຍ້າຍແຮງງານ.

ໃຫ້ຜູ້ເຂົ້າຮ່ວມແບ່ງເປັນກຸ່ມ 3 – 5 ຄົນໃຫ້ພວກເຂົາອ່ານຂໍ້ຄວາມທີ່ໃຊ້ໃນການເດີນທາງໃນກຸ່ມຂອງພວກເຂົາ ແລະ ໃຫ້ໄປຢືນຢູ່ຕໍ່ໜ້າຂອງປ້າຍດັ່ງກ່າວບ່ອນທີ່ມັນສະແດງເຖິງຜູ້ເຄື່ອນຍ້າຍແຮງງານທີ່ຖືກຫລອກຕາມບົດເລື່ອງທີ່ໄດ້ອ່ານ. ໃຫ້ຜູ້ເຂົ້າຮ່ວມຍົກປ້າຍຂຶ້ນມາຖ້າບຸກຄົນໃດຍົກປ້າຍໃນລັກສະນະດຽວກັນແຕ່ຢືນໃນສະຖານທີ່ແຕກຕ່າງກັນ, ແນະນຳໃຫ້ພວກເຂົາສົນທະນາກັນວ່າເປັນຫຍັງຈຶ່ງເລືອກສະຖານທີ່ແຕກຕ່າງກັນ ແລະ ຄ່ອຍດັດແກ້ຄວາມເຂົ້າໃຈຜິດດັ່ງກ່າວ. ອະທິບາຍໃຫ້ຜູ້ເຄື່ອນຍ້າຍແຮງງານວ່າພວກເຂົາສາມາດຖືກຫລອກໃນປະເທດຂອງຕົນເອງ ແລະ ຕ່າງປະເທດ.

ບັດນີ້ປິດປ້າຍບອກສະຖານທີ່ລົງມາໂດຍເອົາໂສມໜ້າຂອງຜູ້ຄ້າມະນຸດໄປຕິດໃສ່ແທນ.

ໃຫ້ຜູ້ເຂົ້າຮ່ວມທັງໝົດຢືນຢູ່ຕໍ່ໜ້າຮູບພາບທີ່ໄດ້ແຕ້ມໄວ້, ທີ່ສະແດງເຖິງຜູ້ຄ້າມະນຸດທີ່ຂຽນໄວ້ຕາມຂໍ້ຄວາມທີ່ໃຊ້ໃນການເດີນທາງ ໂດຍທີ່ສະແດງເຖິງຜູ້ຄ້າມະນຸດມີຫຼາຍກວ່າໜຶ່ງຈາກບົດເລື່ອງດັ່ງກ່າວລະດົມໃຫ້ປຶກສາຫາລືກັນວ່າການຄ້າມະນຸດແມ່ນຫຍັງ. ອີກເທື່ອໜຶ່ງກໍ່ຍັງໄດ້ລະດົມໃຫ້ປຶກສາຫາລືກັນກ່ຽວກັບການເລືອກຂອງແຕ່ລະຄົນ ແລະ ໃຫ້ຄ່ອຍໆດັດແກ້ຄວາມເຂົ້າໃຈຜິດດັ່ງກ່າວ.

## ສົນທະນາ

ໃຫ້ຜູ້ເຂົ້າຮ່ວມນັ່ງເປັນວົງມົນ ແລະ ຖາມຄຳຖາມ:

- ເຈົ້າຮູ້ສຶກຕື່ນເຕັ້ນບໍທີ່ໄດ້ຮຽນໃນມື້ນີ້?
- ເຈົ້າຮູ້ບໍ່ວ່າການຄ້າມະນຸດສາມາດເກີດຂຶ້ນໄດ້ທຸກໆບ່ອນໃນເວລາເດີນທາງ
- ເຈົ້າຮູ້ບໍ່ວ່າຜູ້ຄ້າມະນຸດນັ້ນອາດແມ່ນເພື່ອນຂອງເຈົ້າ, ພີ່ນ້ອງ, ຄົນແປກໜ້າຕ່າງໆ ຫຼື ອາດແມ່ນຄົນໃນຄອບຄົວຂອງເຈົ້າ?
- ເຈົ້າຈະນຳເອົາບົດຮຽນທີ່ໄດ້ຮຽນໃນມື້ນີ້ນຳໃຊ້ເຂົ້າໃນຊີວິດປະຈຳວັນຂອງເຈົ້າແນວໃດ?.

## ການຂຽນບັນທຶກລາຍວັນ::

ເມື່ອສົນທະນາຈົບລົງແລ້ວ ຜູ້ເຂົ້າຮ່ວມອາດຕ້ອງການເວລາເພື່ອດຳເນີນການໃຊ້ຄຳຖາມດັ່ງກ່າວ. ຖ້າຍັງມີເວລາໃຫ້ໂອກາດຜູ້ເຂົ້າຮ່ວມຂຽນໃສ່ປື້ມບັນທຶກລາຍວັນ.

## ການສະແດງບົດບາດສົມມຸດ

ໃຫ້ຜູ້ເຂົ້າຮ່ວມແບ່ງເປັນ 8 - 12 ຄົນ ໃຫ້ແຕ່ລະກຸ່ມກະກຽມເລື່ອງບົດບາດສົມມຸດໂດຍອີງໃສ່ເລື່ອງດັ່ງລຸ່ມນີ້:

**ບົດເລື່ອງ.** ຕົວລະຄອນຫຼັກແມ່ນຜູ້ເຄື່ອນຍ້າຍແຮງງານຄົນໜຶ່ງຂີ່ລົດເມຄັນໜຶ່ງ. ບຸກຄົນທີ່ນັ່ງຢູ່ໃກ້ກັບລາວນັ້ນຊັກຊວນລາວໄປເຮັດວຽກກັບເຂົາພ້ອມທັງສະເໜີໃຫ້ເງິນເດືອນສູງ. ໃຫ້ກຸ່ມນັ້ນຊ່ວຍລາວໃນການຄິດຄໍາເວົ້າທີ່ວ່າ **"ບໍ່ໄປ".**

ບອກໃຫ້ກຸ່ມປັບປຸງການສະແດງບົດບາດສົມມຸດປະມານ (5 ນາທີ) ແລ້ວກໍ່ເລີ່ມຕົ້ນສະແດງ.

ຄູຝຶກຄວນຂຽນລາຍການທັງໝົດໂດຍທີ່ວ່າຜູ້ໂດຍສານນັ້ນເວົ້າວ່າ **"ບໍ່"** ແລກປ່ຽນສິ່ງທີ່ໄດ້ຂຽນລົງກັບກຸ່ມ"

- "ໂອຂ້ອຍໄດ້ນັດກັບນາຍຈ້າງຂອງຂ້ອຍແລ້ວ"
- "ໂອຂ້ອຍຊິເອົາຄວາມຄິດຂອງເຈົ້າໄປລົມກັບພໍ່ແມ່ຂອງຂ້ອຍກ່ອນ ແລ້ວຂ້ອຍຊິໂທຫາເຈົ້າ"
- "ຂ້ອຍບໍ່ເຊື່ອເຈົ້າ".
- "ເປັນຫຍັງເຈົ້າຈຶ່ງຖາມຄໍາຖາມນີ້ກັບຂ້ອຍ, ເຈົ້າບໍ່ມີພີ່ນ້ອງ ຫຼື ເພື່ອນຜູ້ທີ່ເຂົາຕ້ອງການວຽກນີ້ບໍ?".
- ງຽບໆບໍ່ເວົ້າຫຍັງເຮັດຄືບໍ່ສົນໃຈກັບຄໍາເວົ້າຫັນໄປລົມກັບຜູ້ໂດຍສານຄົນອື່ນໃຫ້ຫຼາຍຂຶ້ນ.
- ຖາມຫຼາຍໆຄໍາຖາມກັບຜູ້ໂດຍສານຄົນອື່ນໆ

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈທຸກໆຄົນທີ່ເຂົ້າຮ່ວມໃນມື້ນີ້, ພົບກັນອາທິດໜ້າ, ທຸກໆຄົນທີ່ເຂົ້າຮ່ວມແມ່ນໄດ້ຮັບດາວຜູ້ລະ 1 ອັນມື້ນີ້.

ຖ້າມີຜູ້ເຂົ້າຮ່ວມຮູ້ກັບເພື່ອນໆ, ຄອບຄົວ ຫຼື ເພື່ອນບ້ານ ຜູ້ທີ່ເປັນຜູ້ຄ້າມະນຸດ, ເປັນສິ່ງທີ່ດີໃນການຕິດຕາມພວກເຂົາ ຫຼັງຈາກສໍາເລັດກິດຈະກໍາສະໂມສອນເດັກ, ຖ້າມັນຈະບໍ່ເປັນການລົບກວນພວກເຂົາ.

### ສະຫຼຸບບົດຮຽນ

- ຄົນເຮົາສາມາດຖືກຫລອກໄດ້ໃນທຸກສະຖານທີ່: ທີ່ເຮືອນຂອງພວກເຂົາ, ລະຫ່ວາງການເດີນທາງ, ລະຫ່ວາງການໄປຮອດ, ແລະ ໃນເວລາທີ່ຖາມເຖິງວຽກເຮັດງານທໍາ.
- ຜູ້ຄ້າມະນຸດສາມາດເປັນ "ເພື່ອນ" ເພື່ອນບ້ານເຮົາເອງ, ຄົນແປກໜ້າຕ່າງ, ນາຍຈ້າງເຮົາເອງ ແລະ ອື່ນໆ.
- ຜູ້ຄ້າມະນຸດທັງຫຼາຍອາດມາຈາກບ້ານເຈົ້າເອງ, ແຂວງເຈົ້າເອງ ຫຼື ມາຈາກບ່ອນອື່ນ.



# ເອກະສານອ້າງອີງ 4 ກ: ປ້າຍບອກໃນການເດີນທາງ

## ບົດເລື່ອງທີ 1

ນ. ບີ ອາຍຸ 18 ປີ ລາວຍ້າຍເຂົ້າໄປຢູ່ໃນເມືອງ ແລະ ໄດ້ວຽກເຮັດຢູ່ທີ່ໂຮງງານຕັດຫຍິບແຫ່ງໜຶ່ງ. ລາວບໍ່ໄດ້ມັກວຽກນີ້ເລີຍ, ລາວໄດ້ພົບກັບຍິງຄົນໜຶ່ງທີ່ມາຈາກແຂວງດຽວກັນ ຜູ້ເຊິ່ງເວົ້າວ່າຈະຊ່ວຍໃຫ້ລາວນັ້ນມີວຽກທີ່ດີກວ່ານີ້.

ນ. ບີ ກໍ່ໄດ້ເຊື່ອລາວ ແລະ ໄດ້ໄປກັບລາວບບ່ອນໂຮງງານແຫ່ງໃໝ່ ບ່ອນທີ່ ນ. ບີໄດ້ຈ່າຍຄ່າຕິດໜີ້ເຈົ້າຂອງໂຮງງານ, ເຈົ້າຂອງໂຮງງານບອກວ່າຈະຕັດຄ່າຈ້າງຂອງລາວ ແລະ ເຈົ້າຂອງໂຮງງານກໍ່ໄດ້ເອົາເອກະສານທັງໝົດຂອງລາວນັ້ນໄວ້ ເພື່ອຮັບປະກັນບໍ່ໃຫ້ລາວໜີ.

ນ. ບີ ບໍ່ໄດ້ຮັບເງິນເດືອນເລີຍເພາະວ່າລາວເປັນໜີ້.

ນ. ບີ ໄດ້ຮຽນຮູ້ຫຼາຍຢ່າງຈາກເພື່ອນຮ່ວມງານຂອງລາວ.ເພື່ອນຮ່ວມງານຂອງລາວໝົດທຸກຄົນກໍ່ໄດ້ຈ່າຍຄ່າໜີ້ຄືກັນກັບລາວ.

## ບົດເລື່ອງທີ 2

ທ. ວີ ອາຍຸ 19 ປີ ລາວອາໄສຢູ່ໃນໝູ່ບ້ານແຫ່ງໜຶ່ງທີ່ປະເທດລາວເພື່ອນບ້ານຂອງລາວ ໄດ້ມາສະເໜີໃຫ້ກັບລາວວ່າຈະຫາວຽກໃຫ້ລາວຢູ່ໂຮງງານປາກະປ໋ອງທີ່ປະເທດໄທ. ເພື່ອນບ້ານຂອງລາວເປັນນາຍໜ້າຄົນໜຶ່ງ ແລະ ລາວໄດ້ບອກກັບວີວ່າຈະຈ່າຍຄ່າເດີນທາງໃຫ້ຈົນເຖິງໂຮງງານເມື່ອ ວີ ໄດ້ເຮັດງານແລ້ວແມ່ນຈ່າຍໃຫ້ລາວຄືນ.

ປະມານໜຶ່ງເດືອນຕໍ່ມາ ເພື່ອນບ້ານຂອງລາວກໍ່ໄດ້ພາວີໄປຫາອີກຜູ້ຊາຍຄົນໜຶ່ງ ຜູ້ເຊິ່ງຖືເອກະສານວີໄວ້ ແລະ ພາວີຂ້າມຊາຍແດນເຂົ້າປະເທດໄທ,ເມື່ອໄປເຖິງທ່າເຮືອປາກນໍ້າຊາຍຄົນນັ້ນກໍ່ໄດ້ບອກກັບວີວ່າ: ລາວຕ້ອງເຮັດວຽກຢູ່ທີ່ເຮືອຫາປາແຫ່ງນີ້ເປັນເວລາໜຶ່ງເດືອນກ່ອນທີ່ຈະໄປເຮັດວຽກຢູ່ໂຮງງານ.

ວີ ກໍ່ບໍ່ຕ້ອງການຢາກເຮັດວຽກດັ່ງກ່າວແຕ່ວ່າລາວບໍ່ຮູ້ກັບໃຜທີ່ຢູ່ປະເທດໄທ ແລະ ລາວກໍ່ບໍ່ມີເງິນພຽງພໍທີ່ຈະກັບບ້ານ, ຊໍ້າບໍ່ພໍລາວຍັງຕິດໜີ້ເພື່ອນບ້ານຂອງລາວອີກ

ວີ ກໍ່ໄດ້ຂຶ້ນເຮືອ ກໍ່ຖືກບັງຄັບເຮັດວຽກຢູ່ໃນເຮືອໂດຍບໍ່ໄດ້ຮັບຄ່າຈ້າງເປັນເວລາ 2 ປີ.

## ບົດເລື່ອງທີ 3

ນ. ຟີ ອາຍຸ 16 ປີອາໄສຢູ່ໝູ່ບ້ານນ້ອຍທາງພາກເໜືອຂອງປະເທດລາວ, ລາວໄດ້ຂີ່ລົດເມແຕ່ບ້ານຂອງລາວໄປກຸງເທບເພື່ອຊອກຫາວຽກເຮັດ, ປ້າຂອງລາວຈະມາຮັບເອົາລາວຢູ່ທີ່ສະຖານີລົດເມ, ເມື່ອເວລາລາວມາຮອດສະຖານີລົດເມໃນກຸງເທບກໍ່ບໍ່ເຫັນປ້າຂອງລາວ.

ຟີກໍຢ້ານກົວ, ແຕ່ມີຜູ້ຍິງຄົນໜຶ່ງເຂົ້າມາຖາມລາວ, ວ່າລາວຕ້ອງການຄວາມຊ່ວຍເຫຼືອບໍ, ຟີໄດ້ບອກກັບຍິງຄົນນັ້ນວ່າມີບັນຫາເກີດຂຶ້ນກັບລາວ, ຍິງຄົນນັ້ນໄດ້ສະເໜີໃຫ້ທີ່ພັກເຊົາ ແລະ ຈະຊ່ວຍລາວຕິດຕໍ່ຫາຄອບຄົວ, ແຕ່ຍິງຄົນນັ້ນໄດ້ເອົາລາວໄປຮ້ານຂາຍບໍລິການ.

ຍິງຄົນນັ້ນບອກກັບຟີວ່າ, ເຈົ້າຕ້ອງເຮັດວຽກຢູ່ທີ່ນີ້ຄືນດຽວ, ຟີບອກຍິງຄົນນັ້ນວ່າລາວຢ້ານລາວບໍ່ຢາກຢູ່ຄືນດຽວ.

## ບັດເລື່ອງທີ 4

ເມື່ອທ. ບີ ອາຍຸໄດ້ 16 ປີ ລາວໄດ້ຈ່າຍເງິນໃຫ້ຊາຍຄົນໜຶ່ງເພື່ອຊ່ວຍໃຫ້ລາວຂ້າມຊາຍແດນ ແລະ ແລ້ວລາວກໍ່ໄດ້ຂີ່ລົດເມມຸ້ງໜ້າລົງທີ່ພາກໃຕ້ຄົນດຽວ.

ລາວໄດ້ມີເພື່ອນຫຼາຍຄົນ ພ້ອມກັບມີຊາຍຄົນໜຶ່ງໃນລົດເມຜູ້ເຊິ່ງທີ່ເຮັດວຽກຢູ່ໃນໂຮງງານແຫ່ງໜຶ່ງ ແລະ ລາວກໍ່ສາມາດຈະຊ່ວຍໃຫ້ ບີ ມີວຽກເຮັດງານທຳ ແລະ ເງິນເດືອນສູງ, ເພື່ອນຄົນນີ້ກໍ່ໄດ້ພາບີໄປຂຶ້ນລົດເມອີກຄັນໜຶ່ງເພື່ອທີ່ຈະພາໄປໂຮງງານ.

ເມື່ອລາວໄປເຖິງທີ່ໂຮງງານ, ເຈົ້າຂອງໂຮງງານໄດ້ບອກ ບີ ວ່າເຈົ້າໄດ້ຕິດໜີ້ຄ່າລົດເມຂ້ອຍ, ລາວຈຳຕ້ອງໄດ້ເຮັດວຽກໃຊ້ໜີ້. ບີບໍ່ຮູ້ວ່າຈະກັບບ້ານແນວໃດ ເພາະລາວມີເງິນພຽງແຕ່ໜ້ອຍດຽວ.

ຕໍ່ຈາກນັ້ນລາວກໍ່ບໍ່ໄດ້ພົບກັບໝູ່ຂອງລາວອີກເລີຍ

## ບັດເລື່ອງທີ 4

ນາງ ທີ ມາຈາກຄອບຄົວທີ່ທຸກຍາກທີ່ປະເທດລາວ. ພວກເຂົາບໍ່ເຄີຍຈາກບ້ານເຂົາຈັກເທື່ອ, ແຕ່ວ່າ. ທີ ເປັນຄົນທີ່ມີພີ່ນ້ອງທີ່ຮັ່ງມີ ທີ່ຢູ່ຕົວເມືອງ ເມື່ອ ທີ ໄດ້ອາຍຸ 16 ປີ ພີ່ນ້ອງລາວຜູ້ທີ່ຮັ່ງມີນັ້ນໄດ້ພາທີມາຢູ່ນຳໃນເຮືອນຂອງລາວ ແລະ ເຮັດວຽກທີ່ຮ້ານອາຫານ. ລາວເວົ້າວ່າເປັນສິ່ງທີ່ດີແລ້ວທີ່ລາວໄດ້ຊ່ວຍຄອບຄົວຂອງລາວ.

ເມື່ອ ທີ ມາຮອດເມືອງແລ້ວ ລາວໄດ້ອາໄສນຳພີ່ນ້ອງ, ລາວໄດ້ຊ່ວຍເຮັດວຽກເຮືອນແຕ່ວ່າບໍ່ພໍເທົ່າໃດນັ້ນ, ພີ່ນ້ອງຂອງລາວກໍ່ໄດ້ພາໄປເຮືອນຜູ້ຊາຍຄົນໜຶ່ງອີກ. ເພື່ອນບ້ານໄດ້ບອກກັບທີວ່າຖ້າເຈົ້າບໍ່ມີເພດສຳພັນກັບຊາຍຄົນນັ້ນ, ເຈົ້າຈະບໍ່ມີວຽກເຮັດເລີຍ. ນາງທີກໍ່ຍອມ.

**ຄຳຕອບຕ່າງໆ** *(ຈະບໍ່ບອກໃຫ້ຜູ້ເຂົ້າຮ່ວມຈົນກວ່າເກມຈະຈົບລົງ).*

| ສະຖານທີ່ | ບັນດາຜູ້ຄ້າມະນຸດ |
|---|---|
| ເລື່ອງທີ 1 ກ່ຽວກັບການມາຮອດ | ເລື່ອງທີ 1. ເພື່ອນ ແລະ ເຈົ້າຂອງໂຮງງານ. |
| ເລື່ອງທີ 2 ຢູ່ທີ່ບ້ານຕົນເອງ | ເລື່ອງທີ 2. ເພື່ອນບ້ານ, ຊາຍຄົນອື່ນ ແລະ ເຈົ້າຂອງເຮືອນ. |
| ເລື່ອງທີ 3 ຄິວລົດເມ | ເລື່ອງທີ 3. ຜູ້ຍິງຄົນໜຶ່ງທີ່ສະຖານີລົດເມ ແລະ ເຈົ້າຂອງຮ້ານຂາຍບໍລິການ. |
| ເລື່ອງທີ 4 ໃນລະຫ່ວາງການເດີນທາງ | ເລື່ອງທີ 4. ເພື່ອນທີ່ພົບກັນໃນລົດເມ ແລະ ເຈົ້າຂອງໂຮງງານ. |
| ເລື່ອງທີ 5 ຫຼັງຈາກການເລີ່ມເຮັດວຽກ | ເລື່ອງທີ 5. ພີ່ນ້ອງທີ່ເປັນຄົນຮັ່ງມີ. |



# ເອກະສານອ້າງອີງ ກ: ຂໍ້ຄວາມບອກສະຖານທີ່ 4

**ແຕ່ລະສະຖານທີ່ໃສ່ເຈ້ຍແຜ່ນດຽວ ຂຽນເປັນຕົວໜັງສືໃຫຍ່**

**1. ການເລີ່ມຕົ້ນ**

**(ລວມທັງຢູ່ທີ່ເຮືອນ)**

**2. ການມາຮອດ**

**3. ການເດີນທາງ**

**4. ປ້າຍຈອດລົດ**

**5. ພາຍຫຼັງເລີ່ມຕົ້ນເຮັດວຽກ**

# ເອກະສານອ້າງອີງ 4 ຄ: ໂສມໜ້າຜູ້ຄ້າມະນຸດ



1.ເພື່ອນຍິງຄົນໜຶ່ງ (ທີ່ເປັນຍິງໜຸ່ມ)



2.ເຈົ້າຂອງໂຮງງານຄົນໜຶ່ງ (ເປັນຜູ້ຊາຍ)



3. ເພື່ອນບ້ານຄົນໜຶ່ງ



4. ຜູ້ຊາຍທົ່ວໄປ



5.ເຈົ້າຂອງເຮືອ (ທີ່ເປັນຜູ້ເຖົ້າ)




6. ຜູ້ຍິງທີ່ຢູ່ສະຖານີລົດເມ



7.ເຈົ້າຂອງຮ້ານບໍລິການ (ທີ່ເປັນຜູ້ຍິງ)



8.ເພື່ອນພົບກັນທີ່ລົດເມ (ທີ່ເປັນຄົນໜຸ່ມ)



9.ເຈົ້າຂອງໂຮງງານ (ທີ່ເປັນຜູ້ຊາຍ)



10. ຄົນຮັ່ງມີ (ທີ່ເປັນຜູ້ຊາຍ)

# 5 ບົດທີ 5: ການຈຳແນກໃນສັງຄົມບົດບາດຍິງ-ຊາຍ ເດັກ ແລະໄວໜຸ່ມ ຜູ້ຍິງອາດຈະຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດ

**ຈຸດປະສົງ:** **ຜູ້ເຂົ້າຮ່ວມທັງໝົດຈະຕ້ອງໄດ້ເລີ່ມເຂົ້າໃຈເຖິງຜົນກະທົບ, ຜົນຄາດຫວັງຈາກສັງຄົມ ແລະ ຈະພິຈາລະນາເຖິງເລື່ອງລາວຕ່າງໆທີ່ພົວພັນກັບການຄ້າມະນຸດ.**

## ເວລາ:

75 ນາທີ

### ອຸປະກອນ

- ❖ເອກະສານອ້າງອີງ 5 ກ: ຄວາມແຕກຕ່າງລະຫວ່າງຍິງ, ຊາຍ ເພື່ອເຮັດໃຫ້ຄູຝຶກນຳໃຊ້ເປັນບ່ອນອີງ:
- ❖ ເຈ້ຍແຜ່ນໃຫຍ່
- ❖ ບິກແດງ ແລະ ບິກຟ້າ.

## ການກະກຽມ

ອົງການສຸພະນິມິດຈະບໍ່ມີການຈຳແນກເພດ. ເຮົາອາດຈະໃຫ້ສະມາຊິກຜູ້ໜຶ່ງໃນກຸ່ມຂອງເຮົາ, ຍົກເຈ້ຍຂໍ້ຄວາມທີ່ສະແດງເຖິງການຈຳແນກ (ຕົວຢ່າງ): ການສຶກສາຂອງເດັກຊາຍຈຳເປັນກວ່າການສຶກສາຂອງເດັກຍິງ) ຫຼື (ຜູ້ຊາຍແມ່ນມີອຳນາດໃນການຕັດສິນໃຈທຸກສິ່ງທຸກຢ່າງໃນຄອບຄົວ ເພາະວ່າບັນດາຜູ້ຊາຍເປັນຄົນທີ່ສະຫຼາດກວ່າ). ໃນນາມທີ່ເປັນຄູຝຶກຄົນໜຶ່ງເຈົ້າຕ້ອງແກ້ໄຂໃນມູມມອງຕ່າງໆ ໃຫ້ອະທິບາຍຈຸດຢືນຂອງອົງການສຸພະນິມິດ. (ຕົວຢ່າງ: ໃນມູມມອງຂອງອົງການສຸພະນິມິດພວກເຮົາຄິດວ່າ: ການສຶກສາຂອງເດັກຍິງກໍ່ມີຄວາມສຳຄັນເທົ່າທຽມກັບເດັກຊາຍ ຫຼື ອີກຢ່າງໜຶ່ງວ່າໃນມູມມອງຂອງພວກເຮົາ, ຜູ້ຍິງກໍ່ມີຄວາມສະຫຼຽວສະຫຼາດເຊັ່ນດຽວກັນກັບຜູ້ຊາຍ) ມັນເປັນສິ່ງທີ່ສຳຄັນທີ່ພວກເຮົາຈະຕ້ອງໄດ້ເຄົາລົບວັດທະນາທຳຂອງຜູ້ເຂົ້າຮ່ວມໃນນະທີ່ນີ້

## ການແນະນຳ:

**ຍິນດີຕ້ອນຮັບ:**

ຍິນດີຕ້ອນຮັບຜູ້ເຂົ້າຮ່ວມທຸກຄົນໂດຍການຮ້ອງຊື່ ແລະ ຍື່ນໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ.

**ອົບອຸ່ນຮ່າງກາຍ:**

ຄູຝຶກນຳໃຊ້ເກມທີ່ມີຢູ່ໃນລາຍການ.

**ທວນຄືນບົດຮຽນ:**

ການຄ້າມະນຸດສາມາດເກີດຂຶ້ນໄດ້ທຸກໆບ່ອນບໍ່? (ແມ່ນແລ້ວ)

ມີສະຖານທີ່ໃດແດ່ທີ່ພວກເຮົາໄດ້ໂອ້ລົມກັນກ່ຽວກັບການຄ້າມະນຸດທີ່ເກີດຂຶ້ນໃນບົດຮຽນກ່ອນ?

## ການສົນທະນາ

ອະທິບາຍບົດຮຽນກ່ຽວກັບຄວາມແຕກຕ່າງລະຫວ່າງຍິງ,ຊາຍ



ໃຫ້ຜູ້ເຂົ້າຮ່ວມແບ່ງເປັນກຸ່ມ 5 - 6 ຄົນ ແລະ ໃຫ້ພວກເຂົາຄິດຫາຕົວຢ່າງຄວາມແຕກຕ່າງລະຫວ່າງຍິງ ແລະ ຊາຍ, ເທົ່າທີ່ພວກເຂົາຈະສາມາດຫາໄດ້, ຂຽນລົງໃສ່ເຈ້ຍແຜ່ນໃຫຍ່ ເຊັ່ນ: ຖາມພວກເຂົາ, ວຽກທີ່ພວກເຂົາເຮັດທຸກໆມື້,

- ຄວາມແຕກຕ່າງລະຫວ່າງຍິງ, ຊາຍ ໃນການນຸ່ງຖືແນວໃດ?
- ຄວາມແຕກຕ່າງລະຫວ່າງການເຮັດວຽກເຮືອນຂອງຍິງ ແລະ ຊາຍແມ່ນແນວໃດ?
- ຄວາມແຕກຕ່າງລະຫວ່າງການວ່າຈ້າງງານລະຫວ່າງຍິງ ແລະ ຊາຍເປັນແນວໃດ?
- ຄວາມແຕກຕ່າງລະຫວ່າງຄວາມມ່ວນຊື່ນຂອງ ຍິງ ແລະ ຊາຍເປັນແນວໃດ?
- ໃຜສາມາດເດີນທາງຄົນດຽວໄດ້?

ບັດນີ້ໃຫ້ແຕ່ລະກຸ່ມເບິ່ງກິດຈະກິດລະຫວ່າງຍິງຊາຍຢູ່ທີ່ເຈ້ຍແຜ່ນໃຫຍ່ນັ້ນ.ໃຫ້ກຸ່ມຂີດກ້ອງສີແດງໃສ່ກິດຈະກຳທີ່ສະແດງເຖິງກ່ຽວກັບຊີວິດ ແລະ ຂີດກ້ອງສີຟ້າທີ່ເວົ້າເຖິງສັງຄົມ.

(ຕົວຢ່າງ: ບັນດາຜູ້ຍິງມີລູກນ້ອຍແມ່ນເປັນຜົນທີ່ສະແດງເຖິງຊີວິດການເປັນຢູ່, ຜູ້ຊາຍທີ່ຈິ່ງຜົມສັ້ນແມ່ນໝາຍເຖິງຜົນສະທ້ອນທາງສັງຄົມ.)

ຄູຝຶກຄວນໄປເບິ່ງເອກະສານຂໍ້ມູນ 5ກ: ຄວາມແຕກຕ່າງລະຫວ່າງຍິງ, ຊາຍ ເພື່ອກວດເບິ່ງຄຳຕອບດັ່ງກ່າວ.

ອະທິບາຍວ່າ: ຄວາມແຕກຕ່າງລະຫ່ວາງຍິງຊາຍແມ່ນຜົນມາຈາກສັງຄົມ ຫຼື ວັດທະນາທຳ (ໃຫ້ຂີດກ້ອງບິກຟ້າໃສ່). ຄວາມແຕກຕ່າງນີ້ອາດມີການປ່ຽນແປງຖ້າບຸກຄົນໃດໜຶ່ງຫາກຕ້ອງການໃຫ້ປ່ຽນ.

## ການສົນທະນາ

ໃຫ້ບັນດາຜູ້ເຂົ້າຮ່ວມທັງໝົດແບ່ງເປັນກຸ່ມ 4 - 6 ຄົນແຍກຍິງ, ແຍກຊາຍ, ກຸ່ມຊາຍກໍ່ໃຫ້ເປັນຊາຍໝົດ, ກຸ່ມຍິງກໍ່ໃຫ້ເປັນຍິງໝົດ. ແລະ ແລ້ວກໍ່ໃຫ້ຄຳຖາມດັ່ງຕໍ່ໄປນີ້ມາສົນທະນາກັນ.

- ໃນວັດທະນາທຳຂອງເຮົາແມ່ນຜູ້ໃດຫາເງິນໄດ້ຫຼາຍກວ່າໝູ່ຜູ້ຍິງ ຫຼື ຜູ້ຊາຍ?
- ໃຜເປັນຜູ້ອະນາໄມເຮືອນ, ເບິ່ງແຍງລູກຫຼາຍກວ່າກັນ: ເດັກຍິງ ຫຼື ເດັກຊາຍ?
- ແມ່ນໃຜໄດ້ມີໂອກາດເຂົ້າໂຮງຮຽນຫຼາຍກວ່າ: ເດັກຍິງ ຫຼື ເດັກຊາຍ ?
- ໃຜເປັນຜູ້ຕັດສິນໃຈໃນການໃຊ້ຈ່າຍເງິນໃນການຊື້ເຄື່ອງເປັນຈຳນວນເງິນຫຼວງຫຼາຍ ຕົວຢ່າງ: ຊື້ລົດຈັກ ຜູ້ຍິງ ຫຼື ຜູ້ຊາຍ?
- ຖ້າພໍ່ແມ່ເສຍຊີວິດແມ່ນຜູ້ໃດຮັບຜິດຊອບມໍລະດົກທີ່ດິນ ລູກສາວ ຫຼື ລູກຊາຍ ຫຼື ທັງສອງ ?
- ເຈົ້າຄິດວ່າວັດທະນາທຳຂອງພວກເຮົາຍຸຕິທຳກັບຜູ້ຍິງ ຫຼື ເດັກຍິງແລ້ວບໍ?

ເມື່ອພວກເຂົາສົນທະນາກັນສຳເລັດແລ້ວ ກໍ່ໃຫ້ພວກເຂົາແບ່ງປັນຄວາມຄິດຢູ່ໃນກຸ່ມ. ບັນດາເດັກຜູ້ຍິງອາດມີຄຳຕອບທີ່ແຕກຕ່າງກັນກັບຜູ້ຊາຍ, ຖ້າເປັນເຊັ່ນນີ້ກໍ່ໃຫ້ພວກເຂົາຖາມກັນວ່າເປັນຫຍັງ? ຈຶ່ງມີແນວຄວາມຄິດແຕກຕ່າງ?.

ອະທິບາຍຕື່ມອີກວ່າການຄ້າມະນຸດອາດເກີດຂຶ້ນກັບທັງສອງບໍ່ວ່າຍິງ ແລະ ຊາຍ. ອົງການແຮງງານສາກົນ (ILO)ໄດ້ປະເມີນວ່າຈຳນວນຜູ້ຊາຍ ແລະ ຜູ້ຍິງ ຜູ້ທີ່ຖືກຂາຍເພື່ອບັງຄັບໃຊ້ແຮງງານມີຈຳນວນເກືອບ

ເທົ່າທຽມກັນ ແລະ ພວກເຂົາຍັງປະເມີນອີກວ່າມີ 98% ຂອງແມ່ຍິງທີ່ຕົກເປັນເຫຍື່ອການຄ້າມະນຸດທາງເພດ. ອະທິບາຍຕື່ມອີກວ່າມີຄວາມເປັນໄປໄດ້ເຊັ່ນກັນທີ່ຜູ້ຊາຍຖືກເອົາໄປຂາຍເພື່ອຈຸດປະສົງທາງເພດເຊັ່ນກັນ ແຕ່ກໍ່ມີຈຳນວນໜ້ອຍ.

ໃຫ້ຜູ້ເຂົ້າຮ່ວມຄິດກ່ຽວກັບຕົວຢ່າງ, ສັງຄົມຄິດແນວໃດກ່ຽວກັບຜູ້ຍິງທີ່ດ້ອຍໂອກາດນັ້ນຖືກຂາຍເພື່ອບໍລິການທາງເພດ?

ເມື່ອພວກເຂົາໄດ້ຄຳຕອບເໝົ່ານັ້ນແລ້ວ, ກໍ່ໃຫ້ນຳເອົາຕົວຢ່າງດັ່ງຕໍ່ໄປນີ້ໃຫ້ກຸ່ມຟັງນຳ:

- ບັນດາເດັກນ້ອຍຜູ້ຍິງອອກໂຮງຮຽນໄວກວ່າ ແລະ ບໍ່ສາມາດຫາວຽກທີ່ດີໄດ້.
- ມີວຽກງານໃດວຽກໜຶ່ງວຽກໜຶ່ງບໍ່ຢູ່ໃນຊຸມຊົນຂອງພວກເຮົາທີ່ໃຫ້ເດັກຍິງເຮັດຫຼາຍກວ່າເດັກຊາຍ.
- ຜູ້ຊາຍອາດຈະໄປທີ່ຮ້ານຂາຍບໍລິການທາງເພດເພື່ອມີເພດສຳພັນກັບຜູ້ຍິງ.
- ຖ້າຜູ້ຍິງຄົນໜຶ່ງຫາກບໍ່ສາມາດສືບມໍລະດົກຈາກພໍ່, ເມື່ອພໍ່ລາວເສຍຊີວິດ, ລາວກໍ່ຈະບໍ່ມີທີ່ຢູ່ອາໄສ ແລະ ກໍ່ບໍ່ມີຫຍັງເຫຼືອເລີຍ.
- ບັນດາຜູ້ຍິງທີ່ເຮັດວຽກເປັນຄົນຮັບໃຊ້ຢູ່ໃນບ້ານ ອາດເກີດມີຄວາມສ່ຽງໃນການຖືກຂົ່ມທາງເພດຈາກນາຍຈ້າງ.

ບອກໃຫ້ຜູ້ເຂົ້າຮ່ວມຄິດຫາວິທີທາງ ເຊິ່ງວ່າເດັກຊາຍ ແລະ ຜູ້ຊາຍ ສາມາດປົກປ້ອງເດັກຍິງ ແລະ ແມ່ຍິງໃນຊີວິດຂອງພວກເຂົາ? ຄຽງຄູ່ກັບເລື່ອງດັ່ງກ່າວ: ໃຫ້ຜູ້ເຂົ້າຮ່ວມຄິດຫາວິທີທາງ ໃນການສ້າງຄວາມເຂັ້ມແຂງໃຫ້ກັບແມ່ຍິງເພື່ອປ້ອງກັນຕົວຂອງພວກເຂົາ ແລະ ປົກປ້ອງແມ່ຍິງ, ເດັກຍິງຄົນອື່ນໆໃນຊີວິດຂອງພວກເຂົາ.

ເມື່ອພວກເຂົາມີຄຳຕອບແລ້ວ, ກໍ່ໃຫ້ພວກເຂົານຳຄຳຕອບເຫຼົ່ານັ້ນມາເລົ່າສູ່ກຸ່ມຟັງ:

- ໃຫ້ໂອກາດແກ່ບັນດາຜູ້ຍິງໄດ້ມີສ່ວນຮ່ວມໃນວຽກງານຫຼາຍກວ່າຜູ້ຊາຍ.
- (ມີຜູ້ຍິງຫຼາຍເທົ່າໃດຍິ່ງພິຈາະນາເທົ່ານັ້ນ )

## ສະແດງບົດບາດສົມມຸດ

ໃຫ້ບັນດາຜູ້ເຂົ້າຮ່ວມແບ່ງເປັນກຸ່ມ 8 - 12 ຄົນ. ໃຫ້ແຕ່ລະກຸ່ມກຽມການສະແດງບົດບາດສົມມຸດ, ເປັນຜູ້ຊັກຊວນ (ຖ້າມີຫຼາຍກວ່າສອງກຸ່ມໃຫ້ເຮົາໃຊ້ເລື່ອງໜຶ່ງສະແດງເປັນສອງຄັ້ງ).

**ກຸ່ມທີ 1:** ຕົວລະຄອນຫຼັກແມ່ນຍິງຄົນໜຶ່ງມີອາຍຸ 15 ປີ ເຊິ່ງວ່າແມ່ຂອງລາວໄດ້ບອກໃຫ້ລາວອອກໂຮງຮຽນເພື່ອໄປຫາເງິນມາສະໜັບສະໜູນໃຫ້ນ້ອງຊາຍຫຼ້າເຂົ້າໂຮງຮຽນໃຫ້ກຸ່ມນັ້ນຊ່ວຍລາວຄິດຫາວິທີທາງເພື່ອຊັກຊວນໃຫ້ແມ່ຂອງລາວໃຫ້ລາວຢູ່ເຂົ້າໂຮງຮຽນ.

**ກຸ່ມທີ 2:** ຕົວລະຄອນຫຼັກແມ່ນຜູ້ຍິງຄົນໜຶ່ງຜູ້ທີ່ຢາກຂາຍຍິງສາວຄົນນັ້ນໃຫ້ກັບຄົນຈີນເພື່ອໄປແຕ່ງງານ. ໃຫ້ກຸ່ມນັ້ນຊ່ວຍລາວຄິດຫາທາງ,ຊັກຊວນໃຫ້ຄອບຄົວຂອງລາວໂນມນ້າວໃຫ້ລາວຢູ່ເຮືອນບໍ່ໃຫ້ລາວໄປ.

ໃຫ້ບັນດາກຸ່ມນັ້ນກຽມບົດບາດສົມມຸດປະມານ 10 ນາທີ, ແລ້ວສະແດງໃຫ້ໝູ່ເບິ່ງ.

---

*ອົງການແຮງງານສາກົນ, ການປະເມີນການຂູດຮີດແຮງງານໃນທົ່ວໂລກຄັ້ງທີສອງໂດຍອີງໃສ່ຂໍ້ມູນຈາກພະແນກການຂອງສະຫະລັດອາເມລິກາປີ 2012 ທີ່ເວົ້າກ່ຽວກັບການຄ້າມະນຸດຂອງວໍຊິງຕັນດີຊີ*



## ສະຫຼຸບບົດຮຽນ

- ມີຄວາມແຕກຕ່າງທາງຊີວິດບາງຢ່າງລະຫວ່າງຍິງ, ຊາຍທີ່ບໍ່ອາດປ່ຽນແປງໄດ້.
- ມີຄວາມແຕກຕ່າງທາງວັດທະນະທຳບາງຢ່າງລະຫວ່າງຍິງ ແລະ ຊາຍທີ່ສາມາດປ່ຽນແປງໄດ້.
- ມີບາງຄວາມແຕກຕ່າງລະຫວ່າງວັດທະນາທຳທີ່ບໍ່ຍຸດຕິທຳກັບບັນດາແມ່ຍິງ.
- ວັດທະນາທຳບາງຢ່າງທີ່ພາໃຫ້ຜູ້ຍິງ ແລະ ໜຸ່ມສາວຕົກຢູ່ໃນຄວາມສ່ຽງການຄ້າທາງເພດຫຼາຍກວ່າຜູ້ຊາຍ ແລະ ເດັກຊາຍ.
- ມີບັນດາຜູ້ຍິງຫຼາຍຄົນທີ່ຖືກຄ້າທາງເພດຫຼາຍກວ່າຜູ້ຊາຍ

## ປິດທ້າຍບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຊຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈນຳທຸກໆຄົນທີ່ມາຮ່ວມໃນມື້ນີ້, ພວກເຮົາຈະໄດ້ພົບກັນໃນກອງປະຊຸມໃນຄັ້ງໜ້າ, ມື້ນີ້ທຸກໆຄົນທີ່ເຂົ້າຮ່ວມແມ່ນໄດ້ດາວຄົນລະ 1 ດາວ.

ໃຫ້ບັນດາສະມາຊິກໃນກຸ່ມນຶກພາບຄົນໃນຊຸມຊົນຂອງພວກເຂົາ ແລະ ຕອບຄຳຖາມດັ່ງຕໍ່ໄປນີ້ :

- ເດັກຊາຍ ແລະ ເດັກຍິງໄດ້ຖືກລ້ຽງດູທີ່ແຕກຕ່າງກັນໃນຊຸມຊົນນັ້ນແນວໃດ?
- ບັນດາຜູ້ຍິງ ແລະ ຜູ້ຊາຍໄດ້ຖືກລ້ຽງດູແຕກຕ່າງກັນໃນຊຸມຊົນແນວໃດ?

ບັນດາຄູຝຶກກໍ່ສາມາດບອກໃຫ້ຜູ້ເຂົ້າຮ່ວມຂຽນຄຳຖາມເຫຼົ່ານີ້ໃສ່ເຈ້ຍແລ້ວຖືເມືອເຮືອນເພື່ອເຕືອນຄວາມຈຳ.

# 5 ເອກະສານອ້າງອີງ 5 ກ: ຄວາມແຕກຕ່າງລະຫວ່າງຍິງ-ຊາຍ

*ສໍາລັບຄູຝຶກທີ່ໃຊ້ເປັນຂໍ້ອ້າງອີງຢ່າງດຽວ. ບໍ່ແຈກຢາຍສໍາເນົານີ້ໃຫ້ໃຜ.*

## ບັນດາຄໍາຕອບຕ່າງໆກ່ຽວກັບກິດຈະກໍາບົດບາດຍິງ-ຊາຍ

| **ທາງຊີວະວິທະຍາ** | **ທາງສັງຄົມ** |
|---|---|
| ຜູ້ຍິງຖືພາ | ຜູ້ຊາຍຫຼິ້ນກິລາ |
| ຜູ້ຍິງລ້ຽງລູກດ້ວຍນົມ | ຜູ້ຊາຍຈີ່ງຜົມສັ້ນ |
| ຜູ້ຊາຍຈີ່ງໜວດ, ຜູ້ຍິງມີເຕົ້ານົມ | ຜູ້ຍິງຈີ່ງຜົມຍາວ |
| | ຜູ້ຍິງນຸ່ງສິ້ນ |
| | ຜູ້ຊາຍດື່ມເບຍ |
| | ຜູ້ຍິງເບິ່ງແຍງລູກ |
| | ຜູ້ຍິງອານາໄມເຮືອນ |
| | ຜູ້ຊາຍເຮັດວຽກການກໍ່ສ້າງ |
| | ຜູ້ຊາຍເປັນຜູ້ຕັດສິນໃຈໃນຄອບຄົວ |
| | ຜູ້ຊາຍສືບທອດມໍລະດົກ |
| | ຜູ້ຍິງບໍ່ຄວນເດີນທາງໄປຄົນດຽວ |



# ບົດທີ 6: ຜົນຮ້າຍຂອງຢາເສບຕິດ ແລະ ເຫຼົ້າທີ່ພົວພັນກັບການຄ້າມະນຸດ 6

**ຈຸດປະສົງ:** **ບັນດາຜູ້ເຂົ້າຮ່ວມຈະໄດ້ຮຽນຮູ້ເຖິງນິຍາມຂອງຢາເສບຕິດຕ່າງໆ ແລະ ລັກສະນະຂອງມັນ. ບັນດາຜູ້ເຂົ້າຮ່ວມຈະເຂົ້າໃຈຢາເສບຕິດ ແລະ ເຫຼົ້າແມ່ນເປັນສິ່ງທີ່ຜູ້ຄ້າມະນຸດເອົາມານໍາໃຊ້, ດັ່ງນັ້ນມັນຈຶ່ງເປັນສິ່ງທີ່ຈໍາເປັນທີ່ພວກເຂົາຄວນລະວັງໃນການປົກປ້ອງຕົວຂອງເຂົາເອງ.**

**ເວລາ:**

75 ນາທີ

**ອຸປະກອນ**

- ❖ ຖົງ1ອັນ
- ❖ ພາບຕ່າງໆ ແລະ ຮູບພາບຢາຕ່າງໆທີ່ແຕກຕ່າງກັນ ພ້ອມທັງອະທິບາຍສັບພະຄຸນຂອງຢາຢູ່ຂ້າງຫຼັງເຈ້ຍ, ທີ່ເອົາມາຈາກ ເອກະສານອ້າງອີງ 6 ກ: ຢາເສບຕິດຕ່າງໆ.
- ❖ ອັດສໍາເນົາອ້າງອີງ 6ຂ: ຢາຕ່າງໆ ແລະ ການຄ້າມະນຸດ ໃຫ້ພໍ 4 - 5 ຄົນແລ້ວ , ແຕ່ລະກຸ່ມຄວນໃຫ້ມີສໍາເນົາກຸ່ມລະ 1 ອັນ.
- ❖ ສໍາເນົາເອກະສານອ້າງອີງ 6 ຄ: ຄໍາຖາມກ່ຽວກັບຢາເສບຕິດ,ຕັດເປັນແຕ່ລະຄໍາຖາມ.

## ການແນະນໍາບົດຮຽນ:

**ຍິນດີຕ້ອນຮັບ:**

ຍິນດີຕ້ອນຮັບຜູ້ເຂົ້າຮ່ວມໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ ແລະ ຍື່ນໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ

**ອົບອຸ່ນຮ່າງກາຍ:**

ຄູຝຶກນໍາໃຊ້ເກມທີ່ມີຢູ່ໃນລາຍການ.

**ທວນຄືນບົດຮຽນ:**

ໃຫ້ຄົນໃດຄົນໜຶ່ງຜູ້ທີ່ສັງເກດບົດບາດຍິງ-ຊາຍໃນຊຸມຊົນຂອງພວກເຂົານັ້ນ,ພວກເຂົາສັງເກດເຫັນຫຍັງແນ່ທີ່ວ່າຍັງບໍ່ທັນໄດ້ເຂົ້າໃຈກ່ອນທີ່ພວກເຂົາສົນທະນາບົດຮຽນ? ມີບົດບາດອັນໃດແດ່ທີ່ຄວນມີການປ່ຽນແປງ.

## ການສົນທະນາ

**ຢາເສບຕິດແມ່ນຫຍັງ?**

ໃຫ້ກຸ່ມໃດໜຶ່ງເວົ້າສູ່ຟັງວ່າຢາເສບຕິດທີ່ຜິດກົດໝາຍເປັນແນວໃດ, ໃຫ້ພວກເຂົາອະທິບາຍຢາເສບຕິດທີ່ແຕກຕ່າງກັນ ແລະ ຜົນກະທົບຂອງພວກມັນ.

ອະທິບາຍຢາດັ່ງກ່າວທີ່ເປັນລັກສະນະເປັນເມັດ, ຜົງ, ພືດທີ່ປູກ ຫຼື ເປັນນໍ້າ. ຊະນິດທີ່ໃຊ້ສູບ, ສັກ, ສູດດົມ ຫຼື ກືນກິ

ອະທິບາຍກ່ຽວກັບການປ່ຽນແປງຂອງຢາດັ່ງກ່າວທີ່ເຈົ້າເຄີຍເຫັນ, ລົດຊາດຂອງພວກຢາເສບຕິດ, ຄວາມຮູ້ສຶກ, ຄວາມຄິດ ແລະ ການປະຕິບັດກັບມັນ.

ຍື່ນຖົງຕໍ່ໆກັນໄປພ້ອມກັບຮູບພາບຂອງຢາຕ່າງໆ ຖາມຜູ້ເຂົ້າຮ່ວມໃຫ້ເອົາຮູບຢາດັ່ງກ່າວອອກມາ, ແລ້ວອ່ານຂໍ້ຄວາມຢູ່ດ້ານຫຼັງຂອງຢາດັ່ງກ່າວ.

ຖ້າຜູ້ເຂົ້າຮ່ວມຫາກມີຄວາມແປກໃຈທີ່ໄດ້ຮຽນຮູ້ວ່າ: ເຫຼົ້າກໍ່ເປັນຢາເສບຕິດຊະນິດໜຶ່ງ, ຖາມພວກເຂົາວ່າເຫຼົ້າໄດ້ປ່ຽນຄວາມຮູ້ສຶກ, ຄວາມຄິດ, ການກະທໍາ ຂອງຄົນແນວໃດເມື່ອໄດ້ດື່ມມັນລົງໄປ :

ເມື່ອຂໍ້ຄວາມຂອງຢາດັ່ງກ່າວໄດ້ຖືກອ່ານໝົດແລ້ວ ແລະ ໃຫ້ບັນດາຜູ້ເຂົ້າຮ່ວມນັ້ນໂອ້ລົມກັນຕື່ມກ່ຽວກັບ ຢາຊະນິດຕ່າງໆທີ່ໄດ້ຍິນມາ. ຕົວຢ່າງ: ແມັດຖໍາເພັດຕາມິນ ຍັງຮຽກອີກຊື່ໜຶ່ງວ່າຢາບ້າ , ຢາມ້າ. ຢາກະຕຸ້ນ ແລະ ຢາໄອ໋ສ ໃນຫຼາຍປະເທດທີ່ແຕກຕ່າງກັນ.

ຕໍ່ໄປໃຫ້ຜູ້ເຂົ້າຮ່ວມຍົກຕົວຢ່າງວ່າພວກເຂົາຮູ້ຫັຍງແດ່ກ່ຽວກັບຢາດັ່ງກ່າວ, ຍົກຕົວຢ່າງບາງຄົນອາດເວົ້າວ່າຢາໄອ໋ສ ສາມາດລົດນໍ້າໜັກໄດ້ ຫຼື (ຢາບ້າສາມາດປິ່ນປົວພະຍາດໄດ້.)

ເຈົ້າອາດຈະຕອບວ່າ(ຢາໄອ໋ສ/ຢາບ້າ ແມ່ນມີຊື່ແຕກຕ່າງກັນແຕ່ເປັນຢາຊະນິດດຽວກັນ: ແມັດຖໍາເພັດຕາມິນ. ເປັນສາເຫດໃຫ້ນໍ້າໜັກຫຼຸດແຕ່ບໍ່ໄດ້ເຮັດໃຫ້ຜິວງາມ. ມັນສາມາດສິ່ງຜົນຮ້າຍແຮງຕໍ່ຫົວໃຈ, ປະສາດ, ແຂ້ວ ແລະ ເປັນສາເຫດກໍ່ໃຫ້ເກີດມີພາບຫລອນ ແລະ ລະແວງຢູ່ຕະຫຼອດເວລາ.

## ໃຫ້ກຸ່ມອະທິບາຍວ່າການຕິດຢາເປັນແນວໃດ

ການຕິດຢາແມ່ນ: ເມື່ອຮ່າງກາຍ ແລະ ຈິດໃຈຫິວຢາ ເມື່ອປະລິມານຢາຢູ່ໃນຮ່າງກາຍຂອງເຈົ້າຫາກຫຼຸດລົງ,ຖ້າແມ່ນຜູ້ຕິດຢາແລ້ວ ເມື່ອພວກເຂົາຫາກບໍ່ມີຢາກິນຮ່າງກາຍຂອງພວກເຂົາກໍ່ຕ້ອງການຢາດັ່ງກ່າວອີກ. ໃນທີ່ສຸດພວກເຂົາກໍ່ຕົກເປັນທາດຂອງຢາເສບຕິດ ເມື່ອບໍ່ໄດ້ກິນຢາຮ່າງກາຍກໍ່ຈະບໍ່ທໍາງານເປັນປົກກະຕິ,ບາງຄັ້ງການຕິດຢາກໍ່ສິ່ງຜົນກະທົບຕໍ່ສຸຂະພາບ, ເຮັດໃຫ້ຕົນມີສັ່ນ ຫຼື ເຫື່ອອອກ, ເຈັບຫົວ, ໂສກເສົ້າຫງ່ວມເຫງົາ ຈົນກະທັ່ງໄດ້ກິນຢາຈຶ່ງພາໃຫ້ຮ່າງກ່າຍສົດຊື່ນ.

## ຢາເສບຕິດ ແລະ ເຫຼົ້າສາມາດທໍາຮ້າຍຄົນໃນວິທີທາງທີ່ແຕກຕ່າງກັນ

- ຢາເສບຕິດສິ່ງຜົນກະທົບຕໍ່ຮ່າງກາຍໄລຍະຍາວ, ກະທົບຫົວໃຈ, ປອດ, ຕັບ ແລະ ໝາກໄຂ່ຫຼັງ.
- ຄົນເຮົາສາມາດເສບຢາເກີນຂະໜາດໂດຍທີ່ບໍ່ຮູ້ເທົ່າເຖິງການ ແລະ ອາດສິ່ງຜົນກະທົບເຖິງແກ່ຊີວິດໄດ້. ດັ່ງທີ່ເຄີຍຮູ້ຜ່ານມາ.
- ຄົນເຮົາສາມາດຕິດພະຍາດເອດສ ແລະ ພະຍາດອື່ນໆເມື່ອພວກເຂົາຫາກໃຊ້ເຂັມຊີດຢາຮ່ວມກັນ.
- ຢາເສບຕິດດັ່ງກ່າວສາມາດປ່ຽນຄວາມຄິດຂອງສະໝອງ, ເຮັດໃຫ້ເຈົ້າມີຄວາມລະແວງຫຼືມີພາບຫລອນຢູ່ຕະຫຼອດເວລາ.
- ຢາເສບຕິດແມ່ນສາມາດເຮັດໃຫ້ເຈົ້າເຮັດໃນສິ່ງທີ່ມີຄວາມສ່ຽງເຊັ່ນວ່າ: ມີເພດສໍາພັນໂດຍບໍ່ໃຊ້ຖົງຢາງອານາໄມ, ເມົາແລ້ວຂັບລົດ, ຕີກັນ ຫຼື ມີເພດສໍາພັນກັບຄົນທີ່ເຈົ້າບໍ່ຮູ້ຈັກ.

## ຢາເສບຕິດສາມາດເຮັດໃຫ້ເຈົ້າຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດ

ອະທິບາຍວ່າຄົນຜູ້ທີ່ເສບຢາ ຫຼືດື່ມເຫຼົ້າພວກເຂົາຈະບໍ່ມີຄວາມສາມາດຄິດໄດ້ຢ່າງຊັດເຈນ ແລະ ມັກຈະເຮັດໃນສິ່ງທ້າທາຍ ແລະ ສ່ຽງໄພ.



ອະທິບາຍເມື່ອເຈົ້າຄິດບໍ່ຖີ່ຖ້ວນນັ້ນ, ແລະ ເຮັດໃຫ້ເຈົ້າມັກເຮັດໃນສິ່ງທີ່ສ່ຽງເພີ່ມຂື້ນ, ສິ່ງເລົ່ານີ້ເປັນສາເຫດທີ່ພາໃຫ້ເຈົ້າຕົກເປັນເຫຍື່ອຂອງການຄ້າມະນຸດ.

ບອກບັນດາຜູ້ເຂົ້າຮ່ວມຕື່ມອີກວ່າມີກໍລະນີນີ້ແລ້ວເກີດຂື້ນຈິງ ເຊິ່ງວ່າຄົນເຮົາມັກດື່ມເຫຼົ້າຫຼາຍ ແລະ ກໍ່ເຮັດໃຫ້ມີຄວາມຮູ້ສຶກຢາກນອນ, ເມື່ອຕື່ນຂື້ນມາກໍ່ຖືກຫລອກໄປຢູ່ໃນເຮືອຫາປາ.

ໃຫ້ບັນດາຜູ້ເຂົ້າຮ່ວມແບ່ງເປັນກຸ່ມ 4-6 ຄົນ ໃຫ້ແຕ່ລະກຸ່ມເອົາເລື່ອງໜຶ່ງທີ່ມາຈາກເອກະສານແຫຼ່ງຂໍ້ມູນ 6 ຂ : ຢາເສບຕິດ ແລະ ການຄ້າມະນຸດ. ຖ້າວ່າການເດີນທາງທີ່ປອດໄພທີ່ເປັນຫຼັກສູດນໍາໃຊ້ໃນສະໂມສອນເດັກ ( SNCC ) ຫາກເປັນຄູຝຶກເດັກກໍ່ໃຫ້ພວກເຂົານໍາພາໃນການສົນທະນາເລີຍ. ໃຫ້ກຸ່ມນັ້ນສືບຕໍ່ໃນເລື່ອງດັ່ງກ່າວ ອະທິບາຍວ່າຢາເສບຕິດ ແລະ ເຫຼົ້ານັ້ນເປັນສາເຫດທີ່ພາໃຫ້ຄົນເຮົາຕົກ ເປັນເຫຍື່ອຂອງການຄ້າມະນຸດ. ຫຼັງຈາກ 10 ນາທີຜ່ານໄປກໍ່ໃຫ້ພວກເຂົາມາໂອ້ລົມກ່ຽວກັບຄໍາຕອບຂອງພວກເຂົາ.

## ຢາເສບຕິດ ແລະ ການໃຊ້ແຮງງານ

ຖາມຜູ້ເຂົ້າຮ່ວມຄົນໃດໜຶ່ງຫາກວ່າເຂົາເຄີຍໄດ້ຍິນກ່ຽວກັບນາຍຈ້າງເອົາຢາເສບຕິດໃຫ້ລູກຈ້າງກິນ. ອະນຸຍາດໃຫ້ເຂົາຍົກຕົວຢ່າງພ້ອມທັງອະທິບາຍກ່ຽວກັບນາຍຈ້າງທີ່ບໍ່ດີ, ທີ່ເອົາຢາໃຫ້ລູກຈ້າງກິນເພື່ອເຮັດໃຫ້ລູກຈ້າງເຮັດວຽກໜັກ ແລະ ຫຼາຍຂື້ນ ແລະ ຄວບຄຸມລູກຈ້າງໃຫ້ຢູ່ໃນຂອບເຂດຂອງພວກເຂົາ.

ໃຫ້ຜູ້ໜຶ່ງອາສາສະໝັກອ່ານບົດເລື່ອງທີ່ເອົາມາຈາກເລື່ອງຈິງດັ່ງຕໍ່ໄປນີ້.

“ຂ້າພະເຈົ້າເຮັດວຽກຢູ່ທີ່ເຮືອຫາກຸ້ງແຫ່ງໜຶ່ງ, ພວກເຮົາອອກສູ່ທະເລເປັນເວລາຫຼາຍເດືອນ, ເຈົ້າຂອງເຮືອໄດ້ເອົາຢາເມັດໃຫ້ພວກເຮົາກິນທຸກໆເຊົ້າ, ຢາເມັດດັ່ງກ່າວເຮັດໃຫ້ພວກເຮົາມີຄວາມຮູ້ສຶກແຂງແຮງເຮັດໃຫ້ພວກເຮົາຂະຫຍັນ, ແຕ່ວ່າໃນຕອນເຊົ້ານັ້ນພວກເຮົາທັງໝົດກໍ່ມີອາການເຈັບຫົວຢ່າງຮຸນແຮງ”

(ຢາເມັດທີ່ວ່ານັ້ນແມ່ນຢາມ້າ.)

“ຂ້າພະເຈົ້າໄດ້ເຮັດວຽກຢູ່ທີ່ເໝືອງແຫ່ງໜຶ່ງ, ວຽກດັ່ງກ່າວແມ່ນມີຄວາມຫຍຸ້ງຍາກຫຼາຍ, ພວກເຮົາໄດ້ໃຊ້ເວລາໝົດມື້ເຮັດວຽກຢູ່ພື້ນດິນ. ຜູ້ຊາຍເຮັດວຽກຢູ່ແຫ່ງນັ້ນໝົດທຸກຄົນກໍ່ກາຍເປັນຄົນຕິດເຮໂລອິນ. ບັນດາຫົວໜ້າເໝືອງແຫ່ງນັ້ນກໍ່ມັກທີ່ທຸກຄົນເປັນເຊັ່ນນີ້, ບາງຄັ້ງພວກເຂົາກໍ່ເອົາເຮໂລອິນໃຫ້ ເພາະວ່າພວກເຂົາບໍ່ຢາກໃຫ້ພວກເຮົາລາອອກຈາກງານ ເພາະພວກເຂົາຢາກໃຫ້ພວກເຮົາເປັນຄົນຕິດຢາ. ພວກເຮົາເມື່ອຍຫຼາຍທີ່ຈະປະທ້ວງກ່ຽວກັບເລື່ອງນີ້.”

“ຂ້າພະເຈົ້າເຮັດວຽກທີ່ສະຖານທີ່ກໍ່ສ້າງແຫ່ງໜຶ່ງ ແລະ ຄົນງານທັງໝົດຢູ່ທີ່ນັ້ນບອກກັບຂ້ອຍວ່າ, ຂ້ອຍຈະສະບາຍຖ້າຂ້ອຍກິນຢາມ້າທຸກໆມື້, ເຮັດວຽກໜັກກໍ່ໄດ້, ໃນເບື້ອງຕົ້ນຂ້ອຍກໍ່ມີຄວາມຮູ້ສຶກແຂງແຮງ ແຕ່ວ່າເມື່ອຂ້ອຍເລີ່ມຮູ້ສຶກບໍ່ສະບາຍ, ຂ້ອຍກໍ່ມີອາການເຫື່ອໄຫຼ ແລະ ມີອາການສັ່ນຢູ່ຕະຫຼອດເວລາ.”

ອ່ານບົດຄວາມສຸດທ້າຍດັ່ງກ່າວດ້ວຍຕົວຂອງເຈົ້າເອງ:

“ຂ້ອຍໄດ້ຖືກຂາຍໃຫ້ຮ້ານຂາຍບໍລິການຕັ້ງແຕ່ຂ້ອຍອາຍຸໄດ້ 15 ປີ . ໃນແຕ່ລະວັນຂ້ອຍມີຄວາມຮູ້ສຶກໂສກເສົ້າ ແລະ ຄິດຢາກຈະຂ້າຕົວຕາຍ, ເຈົ້າຂອງຮ້ານຂາຍບໍລິການກໍ່ເອົາຢາມາໃຫ້ພ້ອມທັງບັງຄັບໃຫ້ຂ້ອຍກິນ,ເມື່ອຂ້ອຍໄດ້ກິນຢານັ້ນແລ້ວ.ຂ້ອຍມີຄວາມຮູ້ສຶກວ່າຂ້ອຍບໍ່ໄດ້ຢູ່ໃນຮ່າງກາຍຂອງຕົນເອງ.
ຂ້ອຍບໍ່ສົນວ່າ, ຂ້ອຍຊິຢູ່ ຫຼື ຊິຕາຍ. ຕໍ່ມາເມື່ອຂ້ອຍໄດ້ຖືກຊ່ວຍເຫຼືອອອກຈາກຮ້ານຂາຍບໍລິການດັ່ງກ່າວ, ຂ້ອຍກໍ່ຮູ້ສຶກບໍ່ສະບາຍ ແລະ ກໍ່ໄດ້ກາຍເປັນຄົນຕິດຢາແລ້ວ.”

ຕໍ່ໄປໃຫ້ອະທິບາຍເຖິງເລື່ອງທີ່ພວກເຮົາໄດ້ໂອ້ລົມກັນກ່ຽວກັບຢາເສບຕິດຕ່າງໆ ວ່າຢາເຫຼົ່ານັ້ນພາໃຫ້ມີຄວາມຮູ້ສຶກແນວໃດ. ພວກເຮົາກໍ່ຍັງຈະໄດ້ໂອ້ລົມເຖິງຜົນເສຍຂອງມັນນຳອີກວ່າ ຄົນເຮົາກາຍມາເປັນຄົນຕິດຢາໄດ້ແນວໃດ? ປ່ອຍແນວໃດ ? ຫຼື ມັກກະທຳຄວາມສ່ຽງແນວໃດພາຍຫຼັງເສບຢາ ແລະ ພວກເຮົາຍັງຈະໄດ້ໂອ້ລົມກັນອີກວ່າຢາເສບຕິດເປັນສາເຫດໃຫ້ຄົນເຮົາຕົກເປັນເຫຍື່ອຂອງການຄ້າມະນຸດ.

**ເປັນຫຍັງຄົນເຮົາຈຶ່ງເສບຢາເສບຕິດ?.**

ໃຫ້ຜູ້ເຂົ້າຮ່ວມທັງໝົດນັ້ນສະແດງເຫດຜົນຂອງຕົນເອງແລ້ວໃຫ້ປະຕິບັດຕາມຕົວຢ່າງ: ໂຕທີ່ຍັງບໍ່ມີຢູ່ໃນລາຍການດັ່ງກ່າວຕື່ມໃສ່ອີກ:

- ພວກເຂົາຖືກບັງຄັບໂດຍນາຍຈ້າງ.
- ເພາະວ່າເພື່ອນຂອງພວກເຂົານັ້ນເສບຢາ.
- ເພາະວ່າຢາເສບຕິດເຮັດໃຫ້ພວກເຂົາມີຄວາມຮູ້ສຶກຍິ່ງໃຫຍ່.
- ເພາະວ່າພວກເຂົາມີຄວາມຮູ້ສຶກສັບສົນ ແລະ ຢາເສບຕິດກໍ່ຊ່ວຍໃຫ້ພວກເຂົາລືມຄວາມຫຍຸ້ງຍາກດັ່ງກ່າວ,ມັນກໍ່ຊ່ວຍຫຼຸດຜ່ອນພຽງເລັກໜ້ອຍເທົ່ານັ້ນ, ແຕ່ເຖິງຢ່າງໃດກໍ່ຕາມ. ຖ້າເສບຢາເປັນເວລາຍາວນານມັນກໍ່ຈະເຮັດໃຫ້ເຈົ້າມີຄວາມຮູ້ສຶກບໍ່ດີ, ຮ້າຍແຮງໄປຕື່ມ.

ແລ້ວຍັງຈະໄດ້ອະທິບາຍໃນຕອນທ້າຍອີກວ່າ, ມັນກໍ່ຂຶ້ນກັບຕົວຂອງເຈົ້າເອງທີ່ຈະຕັດສິນໃຈໃນການເສບຢາ. ເຈົ້າກໍ່ຮູ້ດີວ່າມັນທຳລາຍເຈົ້າ ແລະ ທຳລາຍອະນາຄົດຂອງເຈົ້າແຕ່ວ່າເຈົ້າກໍ່ມີຄວາມສາມາດທີ່ຈະປະຕິເສດວ່າບໍ່ເສບຢາ, ດ້ວຍຕົວຂອງເຈົ້າເອງ.

ຍ່າງອ້ອມເປັນວົງມົນ ແລະ ໃຫ້ຜູ້ເຂົ້າຮ່ວມຄິດວິທີທາງປະຕິເສດວ່າບໍ່ເສບຢາໃນເມື່ອຜູ້ໃດຜູ້ໜຶ່ງຫາກບັງຄັບ.

ໃຫ້ກຸ່ມນັ້ນຄິດກ່ຽວກັບເລື່ອງທີ່ພວກເຂົາຈະຊັກຊວນໃນທາງທີ່ໃຫ້ພວກເຮົາປະຕິເສດວ່າບໍ່ເສບຢາ?

## ຂຽນບັນທຶກລາຍວັນ

ໃຫ້ຜູ້ເຂົ້າຮ່ວມທັງໝົດຂຽນບັກທຶກລາຍວັນຂອງພວກເຂົາ 15 ນາທີ. ໃຫ້ພວກເຂົາຂຽນກ່ຽວກັບຄວາມເຊື່ອຂອງພວກເຂົາ ແລະ ຄວາມຄິດເຫັນຕ່າງໆທີ່ພວກເຂົາມີຕໍ່ຢາເສບຕິດ.



**ສະຫຼຸບບົດຮຽນ**

- ຢາເສບຕິດພາໃຫ້ເຈົ້າມີຄວາມຮູ້ສຶກເຫັນ ແລະ ຄິດຢ່າງແຕກຕ່າງ.
- ຢາເສບຕິດທຳລາຍສຸຂະພາບກາຍ ແລະ ຈິດໃຈຂອງເຈົ້າຢ່າງຮ້າຍແຮງ.
- ເມື່ອຄົນເຮົາຫາກຕິດຢາແລ້ວ, ຮ່າງກາຍ ແລະ ຈິດໃຈຂອງພວກເຂົາຈະສັ່ນເມື່ອບໍ່ໄດ້ເສບຢາ.
- ການເສບຢາເສບຕິດນີ້ພາໃຫ້ເຈົ້າຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດ ແລະ ເປັນສາເຫດເຮັດໃຫ້ເຈົ້າກະທຳໃນສິ່ງທີ່ສ່ຽງໄພໂດຍການຄິດທີ່ບໍ່ຖີ່ຖ້ວນ.
- ນາຍຈ້າງ ແລະ ຜູ້ຄ້າມະນຸດບັງຄັບໃຫ້ລູກຈ້າງເສບຢາເພື່ອເປັນການງ່າຍໃນການຄວບຄຸມລູກຈ້າງ.

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈທຸກໆຄົນທີ່ມາຮ່ວມໃນການຝຶກອົບຮົມຄັ້ງນີ້. ບອກກັບທຸກຄົນວ່າ, ທຸກໆຄົນມາຮ່ວມໄດ້ດາວຜູ້ລະ 1 ດາວ, ພົບກັນໃນອາທິດໜ້າ.

ໃຫ້ສະມາຊິກກຸ່ມຕອບຄຳຖາມດັ່ງຕໍ່ໄປນີ້ :

- ອະທິບາຍໄດ້ບໍ່ວ່າຕອນທີ່ເຈົ້າເຮັດສິ່ງໃດສິ່ງໜຶ່ງ ໂດຍການບັງຄັບຈາກເພື່ອນຂອງເຈົ້ານັ້ນວ່າເປັນແນວໃດ?

ບັນດາຄູຝຶກສາມາດບອກໃຫ້ຜູ້ເຂົ້າຮ່ວມຂຽນຄຳຖາມເຫຼົ່ານີ້ໃສ່ເຈ້ຍ ແລ້ວຖືກັບບ້ານ.

# ເອກະສານອ້າງອີງ 6 ກ: ຢາເສບຕິດຕ່າງໆ



### ກັນຊາ

ກັນຊາ ຫຼື ພືດຊະນິດໜຶ່ງ ( Marijuana ) ເປັນຢາກະຕຸ້ນຊະນິດໜຶ່ງທີ່ໃຊ້ໃນການສູບ ຫຼື ກິນເອົາຄືກັນກັບອາຫານພື້ນເມືອງ. ຜູ້ໃຊ້ຢາດັ່ງກ່າວມີຄວາມຮູ້ສຶກຢາກນອນຫຼືເປັນຄ້າຍຄືກັບວ່າຄົນໂງ່, ກັນຊາກໍ່ເປັນຢາເສບຕິດຊະນິດໜຶ່ງ..



### ເຄຕາມີນ

ຢາເຄຕາມີນ ( K ) ເປັນຢາລະງັບຊະນິດໜຶ່ງທີ່ໃຊ້ກິນເອົາຄືກັນກັບຢາເມັດຊະນິດອື່ນ, ຖ້າຫາກຜູ້ໃດຫາກໃຊ້ຢາດັ່ງກ່າວມີຄວາມຮູ້ສຶກຢາກນອນ. ຢາເຄຕາມີນກໍ່ເປັນຢາເສບຕິດຊະນິດໜຶ່ງ.




### ສານລະເຫີຍ

ສານລະເຫີຍ ( Glue ) ເປັນຢາກະຕຸ້ນຊະນິດໜຶ່ງທີ່ໃຊ້ໃນການສູດດົມ. ຜູ້ທີ່ໃຊ້ສານດັ່ງກ່າວມັກຈະມີອາການວິນຫົວ, ມຶນງົງ ແລະ ເມົາ. ໃນບາງກໍລະນີເດັກຜູ້ທີ່ຖືກບັງຄັບໃຫ້ໄປຂໍທານຕາມຖະໜົນ, ໂດຍອີງຈອນຂອງການຄ້າມະນຸດ ກໍ່ມີການລາຍງານວ່າ ໃຊ້ສານດັ່ງກ່າວກໍ່ຊ່ວຍໃຫ້ພວກເຂົາຫຼຸດພົ້ນອອກຈາກຄວາມເປັນຈິງ.ສານລະເຫີຍກໍ່ແມ່ນຢາເສບຕິດຊະນິດໜຶ່ງ



# ເອກະສານອ້າງອີງ 6 ກ: ຢາເສບຕິດຕ່າງໆ



### ສຸລາ

ເຫຼົ້າຕ່າງໆແມ່ນເປັນສານກະຕຸ້ນຊະນິດໜຶ່ງ ທີ່ໃຊ້ໃນການດື່ມ. ບັນດາຜູ້ທີ່ດື່ມເຫຼົ້າຈະເຮັດໃຫ້ຕົນເອງມີປະຕິກິຍາໂຕ້ຕອບທີ່ຊັກຊ້າ. ການເວົ້າຈາບໍ່ຊັດເຈນ, ຖ້າຜູ້ໃດຫາກເມົາແລ້ວກໍ່ມັກເຮັດໃນສິ່ງທີ່ມີຄວາມສ່ຽງໄພອັນຕະລາຍເຊັ່ນວ່າ:ການມີເພດສຳພັນທີ່ບໍ່ໄດ້ປ້ອງກັນ ຫຼື ການໄປນຳຄົນແປກໜ້າເລື້ອຍໆ.




### ໂຄເຄນ

ໂຄເຄນ Cocaine ( Coke, Crack or Snow ) ເປັນຢາກະຕຸ້ນຊະນິດໜຶ່ງທີ່ເປັນຜົງສູບດົມເອົາ ຜູ້ໃຊ້ຢາດັ່ງກ່າວມີຈຸດປະສົງເພື່ອເຮັດໃຫ້ຕົນເອງແຂງແຮງ, ເພີ່ມຄວາມສ່ຽງ, ເຮັດໃຫ້ບໍ່ຢາກອາຫານ, ເຮັດໃຫ້ຮ່າງກາຍຄືກະຄະນອງຢູ່ຕະຫຼອດເວລາ. Cocaine ກໍ່ເປັນຢາເສບຕິດຊະນິດໜຶ່ງ.



### ເຮໂລອິນ

ເຮໂລອິນ Heroine ເປັນສານກະຕຸ້ນຊະນິດໜຶ່ງ ເຊິ່ງ ວ່າໃຊ້ສູດດົມ ຫຼື ສັກເອົາກໍ່ໄດ້ຜູ້ໃຊ້ຢາດັ່ງກ່າວຢາກໃຫ້ຕົນເອງມີການສຳພັດ ກັບຄວາມປາບປື້ມຍິນດີເພີ່ມຄວາມສາມາດໃນການຄິດ ແລະ ຄ້າຍຄືກັບວ່າພວກເຂົາເຫງົານອນ, ທັງທີ່ຕື່ນຢູ່, ໃນບາງກໍລະນີພົບເຫັນຈຳພວກນີ້ຢູ່ໃນງານເໝືອງ ຫຼື ຮ້ານຂາຍບໍລິການທີ່ໄດ້ຮັບລາຍງານມາວ່າມີການເອົາຢາເຮໂລອິນ Heroine ໃຫ້ຄົນງານກິນ ເພື່ອງ່າຍໃນການຄວບຄຸມ ແລະ ມີໜ້ອຍທີ່ສຸດທີ່ພວກເຂົາຈະລາອອກຈາກງານ. ນີ້ກໍ່ເປັນຢາເສບຕິດຊະນິດໜຶ່ງ.



### ຢາອີ

ຢາອີ Ecstacy ( Sky or X ) ເປັນຢາທີ່ໃຊ້ກິນຄືກັບຢາເມັດຊະນິດອື່ນໆ. ບັນດາຜູ້ໃຊ້ຢາແມ່ນຢາກໃຫ້ຕົນເອງມີຄວາມຄຶກຄະນອງທາງຮ່າງກາຍ ແລະ ເພີ່ມຄວາມສົດຊື່ນຢູ່ຕະຫຼອດເວລາ. ຢາອີ Ecstacy ກໍ່ເປັນຢາເສບຕິດຊະນິດໜຶ່ງ.



### ຢາບ້າ / ຢາມ້າ / ຢາໄອ໋

ຢາບ້າ / ຢາມ້າ / ຢາໄອ໋ (ແມັດທຳເພັດຕາມີນ). ຢາດັ່ງກ່າວແມ່ນໃຊ້ກິນ ຫຼື ສູບເອົາກໍ່ໄດ້.ຜູ້ເສບຢາທັງຫຼາຍແມ່ນຕ້ອງການຢາກໃຫ້ຕົນເອງມີພະລັງງານ ແລະ ເພີ່ມຄວາມຕ້ອງການໃນການສ່ຽງໄພ ແລະ ກໍ່ເຮັດໃຫ້ຮ່າງກາຍຂອງເຂົາເຄື່ອນຍ້າຍຢູ່ຕະຫຼອດເວລາຄື: ບາງກໍລະນີທີ່ວ່າຜູ້ທີ່ເຮັດວຽກຢູ່ໃນສະຖານທີ່ກໍ່ສ້າງ, ໃນເຮືອຫາປາກໍ່ເຄີຍມີລາຍງານມາວ່າ ນາຍຈ້າງໄດ້ເຄີຍເອົາ ຢາບ້າ / ຢາມ້າ / ຢາໄອ໋ ໃຫ້ຄົນງານກິນເພື່ອເຮັດໃຫ້ເຂົາເຮັດວຽກຫຼາຍຂຶ້ນ.



### ຢາສະຫຼົບ

ຢາສະຫຼົບ ( Rohypnol ) ສາມາດໃຊ້ກິນເອົາຄືກັບຢາເມັດຊະນິດອື່ນໆ ສູດດົມ ຫຼື ບາງຄັ້ງ ກໍ່ປະສົມກັບນ້ຳ ຜູ້ໃຊ້ຢາດັ່ງກ່າວຢາກໃຫ້ຕົນເອງເວົ້າໄດ້ຢ່າງລຽນໄຫຼ, ຍ່າງຍາກ ແລະ ຄິດບໍ່ຊັດເຈນ, ເປັນລືມສິ້ນສະຕິ, ໜົດຄວາມຮູ້ສຶກ. ໃນບາງກໍລະນີຖ້າຜູ້ໃດຫາກຖືກຫລອກລວງໃຫ້ກິນຢາ Rohypnol ທີ່ປະສົມໃສ່ເຄື່ອງດື່ມ. ຜູ້ໃຊ້ຢາດັ່ງກ່າວອາດໜົດສະຕິການເຄື່ອນໄຫວ ແລະ ບໍ່ມີການໂຕ້








### ສານລະເຫີຍ

ສານລະເຫີຍ ( Steroids) : ເປັນຢາທີ່ອະນຸຍາດໃຫ້ໃຊ້ໄດ້ ເຊິ່ງວ່າສາມາດເອົານຳໃຊ້ໃນທາງທີ່ຜິດກົດໝາຍໄດ້. ບັນດາຜູ້ໃຊ້ຢາດັ່ງກ່າວຕ້ອງການຝຶກຕົນເອງໃຫ້ມີພະລັງງານ, ຖ້າວ່າໃຊ້ຢາດັ່ງກ່າວເປັນເວລາຍາວນານ, ຢາດັ່ງກ່າວກໍ່ຈະເປັນສາຍເຫດເຮັດໃຫ້ຄົນຜູ້ນັ້ນຕຸ້ຍ, ກ້າມໃຫຍ່ ໃນບາງກໍ່ລະນີກໍ່ໄດ້ພົບເຫັນການໃຊ້ຢາດັ່ງກ່າວ ຈາກຮ້ານຂາຍບໍລິການ ເພື່ອເຮັດໃຫ້ຜູ້ຂາຍບໍລິການມີສຸຂະພາບແຂງແຮງ...

# ເອກະສານອ້າງອີງ 6 ຂ: ຢາເສບຕິດ ແລະ ການຄ້າມະນຸດ

## ເລື່ອງທີ 1

ນ. ເອັກ ເປັນສາວເສີບຢູ່ໃນຮ້ານອາຫານແຫ່ງໜຶ່ງ. ມີບັນດາຜູ້ຊາຍໄດ້ເຂົ້າມາທີ່ຮ້ານອາຫານແຫ່ງນັ້ນ ເພື່ອຊອກຫາສາວບໍລິການແຕ່ວ່າ ນ ເອັກ ເປັນພຽງແຕ່ເດັກເສີບເທົ່ານັ້ນ ມີລູກຄ້າຄົນໜຶ່ງໄດ້ບອກໃຫ້ ນ ເອັກ ນັ່ງ ແລະ ດື່ມກັບພວກເຂົາ ແລະ ນ ເອັກ ກໍ່ຕົກລົງ...

ໃນການເລົ່າເລື່ອງດັ່ງກ່າວໃຫ້ຈົບນີ້ໃຫ້ອະທິບາຍເຖິງວ່າ: ເຫຼົ້າຈະພາໃຫ້ນາງເອັກຕົກຢູ່ໃນຄວາມສ່ຽງຕໍ່ການຄ້າມະນຸດແນວໃດ?

## ເລື່ອງທີ 2

ທ. ເອັດສ ເຮັດວຽກຢູ່ສະຖານທີ່ກໍ່ສ້າງແຫ່ງໜຶ່ງ, ເຈົ້າຂອງບໍລິສັດດັ່ງກ່າວໄດ້ເອົາຢາມ້າໃຫ້ບັນດາຄົນງານກິນເພື່ອເຮັດໃຫ້ພວກເຂົາເຮັດວຽກໜັກ ແລະ ໄດ້ຫຼາຍຊົ່ວໂມງ ເມື່ອ ທ ເອັດໄດ້ລາອອກຈາກວຽກດັ່ງກ່າວລາວກໍ່ກາຍເປັນຄົນຕິດຢາ.

ເພື່ອສືບຕໍ່ເລື່ອງດັ່ງກ່າວນີ້ໃຫ້ຈົບ, ຈົ່ງອະທິບາຍວ່າ: ການຕິດຢານີ້ພາໃຫ້ ທ ເອັດ ຕິດຢູ່ໃນຄວາມສ່ຽງຂອງການຄ້າມະນຸດແນວໃດ.

## ເລື່ອງທີ 3

ທ. ແອວ ເຮັດວຽກຢູ່ທີ່ໂຮງງານແຫ່ງໜຶ່ງ ທ້າຍອາທິດຂອງວັນໜຶ່ງລາວໄດ້ອອກໄປຫຼິ້ນກັບເພື່ອນຂອງລາວຄືນໜຶ່ງ ແອວໄດ້ພົບຊາຍຄົນໜຶ່ງທີ່ລາວບໍ່ເຄີຍຮູ້ຈັກມາກ່ອນ. ຊາຍຜູ້ນັ້ນກໍ່ແນະນຳໃຫ້ ແອວ ເສບຢາເຊິ່ງລາວບອກວ່າ ແອວຈະມີຄວາມຮູ້ສຶກວິເສດທີ່ສຸດ. ແອວກໍ່ບໍ່ຮູ້ວ່າເປັນຢາຫຍັງ?. ເມື່ອແອວເຫັນເພື່ອນຂອງລາວເສບ ແອວກໍ່ມີຄວາມຮູ້ສຶກຢາກເສບຄືກັນ.

ເພື່ອເລົ່າເລື່ອງດັ່ງກ່າວນີ້ໃຫ້ມັນຈົບຈົ່ງອະທິບາຍວ່າຢາເສບຕິດຈະພາໃຫ້ ແອວ ຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດແນວໃດ?.

## ເລື່ອງທີ 4

ນ. ເຄ ແມ່ນແຮງງານເຄື່ອນຍ້າຍຄົນໜຶ່ງ. ຜູ້ເຊິ່ງເຮັດວຽກໃນໂຮງງານແຫ່ງໜຶ່ງໃນຕົວເມືອງ. ລາວມີແຟນຄົນໜຶ່ງທີ່ຫາກໍ່ຮູ້ຈັກກັນປະມານໜຶ່ງເດືອນ. ເບິ່ງຄືວ່າແຟນຂອງລາວເປັນຄົນຮັ່ງມີ. ເຄກໍ່ໄດ້ຫຼົງຮັກກັບຊາຍຄົນນັ້ນ, ໃນຕອນແລງຂອງຄືນໜຶ່ງ, ແຟນຂອງລາວກໍ່ໄດ້ເອົາຢາໃຫ້ລາວກິນ, ລາວກໍ່ບໍ່ຮູ້ວ່າຈະກິນ ຫຼື ບໍ່ແຕ່ວ່າແຟນຂອງລາວເວົ້າວ່າ ຖ້າລາວກິນຢາດັ່ງກ່າວຈະເຮັດໃຫ້ຄວາມຮັກຂອງພວກເຮົາແໜ້ນແຟ້ນຂຶ້ນ.

ເພື່ອເລົ່າເລື່ອງດັ່ງກ່າວໃຫ້ມັນຈົບຈົ່ງອະທິບາຍວ່າຢາເສບຕິດຈະພາໃຫ້ ເຄ ຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດແນວໃດ?



# ເອກະສານ 6 ຄ: ຄຳຖາມກ່ຽວກັບຢາເສບຕິດ



ຂ້ອຍເຮັດວຽກຢູ່ທີ່ເຮືອຫາກຸ້ງແຫ່ງໜຶ່ງ. ພວກເຮົາໄດ້ອອກທະເລຄັ້ງໜຶ່ງເປັນເວລາຫຼາຍເດືອນ. ເຈົ້າຂອງເຮືອເອົາຢາໃຫ້ພວກເຮົາກິນທຸກໆເຊົ້າ. ຢາເມັດເຮັດໃຫ້ພວກເຮົາມີຄວາມຮູ້ສຶກແຂງແຮງ ແລະ ພວກເຮົາກໍ່ເຮັດວຽກໜັກ, ແຕ່ວ່າຕື່ນເຊົ້າມາພວກເຮົາກໍ່ມີຄວາມຮູ້ສຶກເຈັບຫົວຢ່າງແຮງ (ຢານັ້ນເປັນຢາມ້າ)

.................................................................................................................................................

ຂ້ອຍເຮັດວຽກຢູ່ທີ່ເໝືອງແຫ່ງໜຶ່ງ. ເຊິ່ງເປັນວຽກງານທີ່ຫຍຸ້ງຍາກຫຼາຍ, ພວກເຮົາເຮັດວຽກຢູ່ພື້ນດິນໝົດມື້. ດັ່ງນັ້ນມີຜູ້ຊາຍຫຼາຍຄົນທີ່ເຮັດວຽກຢູ່ທີ່ນັ້ນຕິດເຮໂຣອິນ. ເພາະວ່າມີເຈົ້າຂອງເໝືອງຫຼາຍຄົນທີ່ມັກແບບນີ້, ແລະ ບາງຄັ້ງເຂົາກໍ່ເອົາຢາໃຫ້, ນີ້ກໍ່ໝາຍຄວາມວ່າພວກເຂົາບໍ່ຕ້ອງການໃຫ້ຄົນງານລາອອກການເພາະວ່າພວກເຮົາທັງໝົດຕິດຢາ. ເພາະວ່າພວກເຮົາເມື່ອຍທີ່ຈະຮຽກຮ້ອງຍ້ອນຢາເສບຕິດ.

.................................................................................................................................................

ຂ້ອຍເຮັດວຽກຢູ່ສະຖານທີ່ກໍ່ສ້າງແຫ່ງໜຶ່ງ ແລະ ຄົນງານຢູ່ທີ່ນັ້ນກໍ່ໄດ້ບອກກັບຂ້ອຍວ່າມັນເປັນການງ່າຍທີ່ເຈົ້າຈະໄດ້ກິນຢາມ້າທຸກວັນ, ແລະສາມາດເຮັດໜັກກໍ່ໄດ້. ເບື້ອງຕົ້ນກໍ່ມີຄວາມຮູ້ສຶກແຂງແຮງ, ຕໍ່ມາກໍ່ເລີ່ມຮູ້ສຶກເຈັບປ່ວຍ, ເຫື່ອອອກ ແລະ ສັ່ນຕະຫຼອດເວລາ.

.................................................................................................................................................

ຂ້ອຍຖືກຂາຍໃຫ້ຮ້ານບໍລິການຕັ້ງແຕ່ຂ້ອຍອາຍຸ 15ປີ. ຂ້ອຍມີຄວາມໂສກເສົ້າທຸກໆມື້ ແລະ ຂ້ອຍກໍ່ຕ້ອງການຢາກຂ້າຕົວຕາຍ. ເຈົ້າຂອງຮ້ານບໍລິການເອົາຢາມາບັງຄັບໃຫ້ຂ້ອຍກິນ. ເມື່ອຂ້ອຍກິນຢາໄປແລ້ວ, ຂ້ອຍມີຄວາມຮູ້ສຶກກັບວ່າຂ້ອຍບໍ່ຢູ່ໃນຮ່າງກາຍ ແລະ ບໍ່ສົນເລີຍວ່າຈະຢູ່ ຫຼື ຈະຕາຍ. ຕໍ່ມາ ຂ້ອຍກໍ່ໄດ້ຖືກຊ່ວຍເຫຼືອອອກມາຈາກຮ້ານດັ່ງກ່າວ ແລະ ຂ້ອຍກໍ່ລົ້ມປ່ວຍເພາະລິດຂອງຢາເສບຕິດ.

# 7 ບົດທີ 7: ການຄ້າເດັກ ແລະ ການຄ້າຂູດຮີດແຮງງານເດັກ

**ຈຸດປະສົງ:** **ໃຫ້ບັນດາຜູ້ເຂົ້າຮ່ວມມີຄວາມສາມາດໃນການອະທິບາຍກ່ຽວກັບແຮງງານເດັກ ແລະ ໃຫ້ສົນທະນາກ່ຽວກັບເລື່ອງດັ່ງກ່າວວ່າມີຜົນກະທົບຕໍ່ກັບການດຳລົງຊີວິດຂອງເດັກໃນທ້ອງຖິ່ນນັ້ນແນວໃດ ແລະ ກໍ່ຍັງໃຫ້ຜູ້ເຂົ້າຮ່ວມອະທິບາຍເຖິງຄວາມແຕກຕ່າງລະຫວ່າງການຄ້າເດັກ ແລະ ການຂູດຮີດແຮງງານຂອງພວກເຂົາ.**

## ເວລາ:

75 ນາທີ

**ອຸປະກອນ**

❖ ສຳເນົາເອົາພາບຈາກ IS7ກ: ພາບຕ່າງໆທີ່ບົ່ງບອກເຖິງການຂູດຮີດແຮງງານເດັກ (ສຳເນົາໃຫ້ພຽງພໍທີ່ຈະແບ່ງປັນໃຫ້ຄູ່ສົນທະນາເບິ່ງນຳ)

## ການກະກຽມ

ຫຼັງຈາກບົດຮຽນໃນອາທິດນີ້, ບົດຮຽນໃນອາທິດຕໍ່ໄປແມ່ນຈະໄດ້ເວົ້າເຖິງການຂູດຮີດທາງເພດເດັກ ແລະ ຜູ້ໃຫຍ່.

ຖ້າເຮົາຄິດວ່າມີຜູ້ໃດຜູ້ໜຶ່ງໃນຫ້ອງ, ທີ່ເຄີຍຕົກເປັນກໍລະນີດັ່ງກ່າວໃຫ້ເຮົາຊອກຫາເວລາ ຫຼື ບອກພວກເຂົາວ່າອາທິດຕໍ່ໄປແມ່ນຈະໄດ້ເວົ້າເຖິງເລື່ອງດັ່ງກ່າວ, ຖ້າພວກເຂົາບໍ່ຕ້ອງການມາບໍ່ເຂົ້າມາຮ່ວມກະໄດ້. ຖ້າຕ້ອງການຟັງກໍ່ມາບໍ່ເປັນຫຍັງ.

## ການແນະນຳບົດຮຽນ:

**ຍິນດີຕ້ອນຮັບ:**

ຍິນດີຕ້ອນຮັບຜູ້ເຂົ້າຮ່ວມໂດຍການຮ້ອງຊື່

**ອົບອຸ່ນຮ່າງກາຍ:**

ໃຫ້ເລືອກເກມຈາກລາຍການ.

**ທວນຄືນບົດຮຽນ:**

ມີໃຜສາມາດຈະອະທິບາຍໄດ້ວ່າຜູ້ຄ້າມະນຸດໄດ້ໃຊ້ຢາເສບຕິດເພື່ອຄວບຄຸມຄົນງານດັ່ງກ່າວແນວໃດ?

## ການໃຊ້ແຮງງານເດັກ

ໃຫ້ຖາມຄົນໃດໜຶ່ງຜູ້ທີ່ຈື່ໄດ້ວ່າ ມີໃຜແດ່ທີ່ຍັງຈື່ສາມອົງປະກອບຂອງການຄ້າມະນຸດມີຫັຍງແດ່? ໃຫ້ຜູ້ເຂົ້າຮ່ວມອີງໃສ່ຂໍ້ຄວາມຈາກປື້ມນ້ອຍ ການເຄື່ອນຍ້າຍແຮງງານທີ່ປອດໄພ. ຕໍ່ໄປແມ່ນໃຫ້ຄົນໃດໜຶ່ງອະທິບາຍເຖິງນິຍາມຄວາມແຕກຕ່າງລະຫ່ວາງການຄ້າເດັກ ແລະ ຜູ້ໃຫຍ່ມີຄວາມແຕກຕ່າງກັນແນວໃດ?.

ອະທິບາຍເຖິງການຂູດຮີດແຮງງານເດັກ, ຂູດຮີດທາງເພດ ຫຼື ຂູດຮີດທາງຮ່າງກາຍ, ກໍລະນີດັ່ງນີ້ແມ່ນການຄ້າມະນຸດ. ເພື່ອໃຫ້ເດັກຮູ້ເຖິງການຄ້າມະນຸດບໍ່ຈຳເປັນຕ້ອງພິສູດວ່າພວກເຂົານັ້ນຖືກຫລອກ, ຖືກບັງຄັບ, ຖືກຄຸມຕົວ. ການກະທຳຂອງຄົນໃດໜຶ່ງທີ່ສະແດງເຖິງກໍລະນີດັ່ງກ່າວກໍ່ພຽງພໍແລ້ວວ່າເດັກຕົກຢູ່ໃນສະຖານະການຂູດຮີດ.



ບອກໃຫ້ຜູ້ເຂົ້າຮ່ວມໃນຊຸມຊົນຂອງພວກເຂົາ, ໃຫ້ເດັກນ້ອຍມີສະຕິກ່ຽວກັບວຽກງານດັ່ງກ່າວເພາະມັນເປັນສິ່ງທີ່ສຳຄັນຫຼາຍສຳລັບເດັກນ້ອຍທີ່ຍົກເອົາເລື່ອງດັ່ງກ່າວມາໂອ້ລົມກັນໃນຄອບຄົວຂອງເຂົາ, ເລື່ອງດັ່ງກ່າວເປັນສິ່ງທີ່ດີທີ່ສຸດ.

ອະທິບາຍຕື່ມອີກວ່າມັນເປັນເລື່ອງທຳມະດາທີ່ເດັກນ້ອຍໄດ້ຖືກຈ້າງໃຫ້ເຮັດວຽກເພື່ອຄົນອື່ນ. ເລື່ອງດັ່ງກ່າວພວກເຮົາເອີ້ນວ່າ: ການໃຊ້ແຮງງານເດັກ. ການໃຊ້ແຮງງານເດັກສາມາດເຮັດໃຫ້ເດັກມີຄວາມອັນຕະລາຍໂດຍສະເພາະກໍລະນີດັ່ງຕໍ່ໄປນີ້:

- ກະທົບຕໍ່ຮ່າງກາຍ ແລະ ຈິດໃຈຂອງເດັກ.
- ເຮັດໃຫ້ເດັກບໍ່ມີໝູ່ເພື່ອນ.
- ເຮັດໃຫ້ເດັກບໍ່ເຂົ້າໂຮງຮຽນ.
- ເຮັດໃຫ້ເດັກບໍ່ສາມາດເຮັດວຽກບ້ານຂອງໂຮງຮຽນໄດ້.
- ເຮັດໃຫ້ຮ່າງກາຍຂອງເດັກມີຄວາມອິດເມື່ອຍເມື່ອພວກເຂົາໄປໂຮງຮຽນ.
- ກະທົບຕໍ່ອະນາຄົດຂອງພວກເຂົາ.

ເຖິງຢ່າງໃດກໍ່ຕາມຄວາມຈິງແລ້ວການໃຊ້ແຮງງານເດັກສາມາດສົ່ງຜົນກະທົບຕໍ່ເດັກນ້ອຍ, ສິ່ງດັ່ງກ່າວກໍ່ບໍ່ໄດ້ຈຳເປັນວ່າການໃຊ້ແຮງງານເດັກຈະແມ່ນການຄ້າມະນຸດ. (ຈະໄດ້ສົນທະນາເພີ່ມເຕີມໃນຂັ້ນຕອນຕໍ່ໄປ).

## ກິດຈະກຳ

ໃຫ້ຜູ້ເຂົ້າຮ່ວມແບ່ງເປັນ 2 ກຸ່ມ. ຢາຍຮູບພາບກ່ຽວກັບການໃຊ້ແຮງງານເດັກຈາກ IS 7 ກ : ຮູບພາບຂອງການໃຊ້ແຮງງານເດັກ.

ໃຫ້ຜູ້ເຂົ້າຮ່ວມຂຽນໃສ່ 4 ກັບໃຫ້ມີການອະທິບາຍເຖິງວ່າເດັກຢູ່ໃນຮູບພາບນັ້ນມີຄວາມຮູ້ສຶກແນວໃດ, ເມື່ອໄດ້ເຫັນ, ເມື່ອໄດ້ຟັງ ແລະ ເມື່ອໄດ້ດົມກິ່ນ, ບໍ່ໃຫ້ຜູ້ເຂົ້າຮ່ວມເວົ້າອອກມາກ່ຽວກັບພາບດັ່ງກ່າວເພາະເວລາມີບໍ່ພຽງພໍ.

## ຈັດກຸ່ມ

ເມື່ອພວກເຂົາຈັດກຸ່ມສຳເລັດແລ້ວໃຫ້ອ່ານຊື່ໜ້າວຽກຕ່າງໆທີ່ເດັກໄດ້ປະຕິບັດຢູ່ໃນຊຸມຊົນ, ໃຫ້ຍົກຕົວຢ່າງທັງໝົດໃສ່ເຈ້ຍແຜ່ນໃຫ່ຍ. ຈົ່ງຫວ່າງເບື້ອງຂວາມືຂອງເຈ້ຍໄວ້, ໃສ່ IS 7 ຂ :ຕົວຢ່າງການໃຊ້ແຮງງານເດັກຢູ່ໃນເຈ້ຍແຜ່ນໃຫ່ຍ.

ບາດນີ້ໃຫ້ຜູ້ເຂົ້າຮ່ວມແຕ້ມ 4 ຖັນໃສ່ເຈ້ຍແຜ່ນໃຫຍ່ ແຕ່ລະຖັນໃຫ້ຜູ້ເຂົ້າຮ່ວມຍົກຕົວຢ່າງຂອງຜູ້ເຂົ້າຮ່ວມທັງໝົດເພື່ອໃຫ້ກວດເບິ່ງເຄື່ອງໝາຍຢູ່ໃນຖັນນັ້ນວ່າມັນເໝາະກັບໜ້າວຽກດັ່ງກ່າວນັ້ນ ຫຼື ບໍ?

- ໜ້າວຽກທີ່ກະທົບຕໍ່ຮ່າງກາຍຂອງເດັກ.
- ໜ້າວຽກທີ່ກະທົບຕໍ່ຈິດໃຈຂອງເດັກ.

- ໜ້າວຽກທີ່ກະທົບຕໍ່ການສຶກສາຂອງເດັກ.
- ໜ້າວຽກທີ່ກະທົບຕໍ່ອະນາຄົດຂອງເດັກ.

## ຄວາມແຕກຕ່າງລະຫວ່າງການຂູດຮີດແຮງງານເດັກ ແລະ ການຄ້າເດັກ

ໃຫ້ຜູ້ເຂົ້າຮ່ວມອະທິບາຍກ່ຽວກັບການຂູດຮີດແຮງງານເດັກຈະກະທົບຕໍ່ເດັກແນວໃດ, ເລື່ອງດັ່ງກ່າວນີ້ກໍ່ບໍ່ໄດ້ໝາຍຄວາມວ່າເປັນຮູບແບບການຄ້າມະນຸດ. ການໃຊ້ແຮງງານເດັກແມ່ນເປັນການຄ້າມະນຸດຖ້າຫາກວ່າເດັກໄດ້ຖືກຂູດຮີດແຮງງານ,ໃຊ້ແຮງງານເດັກຄືກັບຂ້າທາດ, ບັງຄັບໃຫ້ເປັນໂສເພນີ, ຖືກຂົ່ມຂືນທາງເພດ, ການກະທໍາທີ່ສໍ່ເຖິງການລາມົກອານາຈານ, ບັງຄັບໃຫ້ເດັກເຂົ້າຮ່ວມສູ້ຮົບໃນສົງຄາມ, ບັງຄັບໃຫ້ພົວພັນກັບສານເສບຕິດ, ບັງຄັບໃຫ້ເປັນເດັກຂໍທານ ຫຼື ບັງຄັບຕັດເອົາອະໄວຍະວະຮ່າງກາຍ.

**ຕົວຢ່າງ:** ວຽກງານຕໍ່ໄປນີ້ແມ່ນອະທິບາຍເຖິງການຄ້າມະນຸດ.

- ໃຫ້ເດັກເປັນຂ້າທາດ.
- ໃຫ້ເດັກເຮັດວຽກໃນຮ້ານບໍລິການເພື່ອຂາຍບໍລິການທາງເພດ.
- ໃຫ້ເດັກເຮັດວຽກຮັບໃຊ້ຢູ່ໃນບ້ານໂດຍບໍ່ຈ່າຍເງິນເດືອນ.

ວຽກດັ່ງກ່າວນີ້ທີ່ພົວພັນເຖິງການໃຊ້ແຮງງານເດັກ, ແຕ່ບໍ່ແມ່ນເປັນການຄ້າມະນຸດ:

- ເດັກທີ່ເຮັດວຽກຢູ່ໃນຮ້າຍຂາຍເຄື່ອງ, ທີ່ມີສິດລາອອກ ແລະ ໄດ້ຮັບເງິນເດືອນປະຈໍາ.
- ເດັກຮັບຈ້າງກ່ຽວເຂົ້າ ແລະ ອາໄສຢູ່ເຮືອນ.

## ຜູ້ໃຫຍ່ ແລະ ການຂູດຮີດແຮງງານ

ອະທິບາຍເດັກນ້ອຍທີ່ຖືກຂູດຮີດແຮງງານເຊັ່ນກັນ. ແຕ່ວ່າຜູ້ໃຫຍ່ກໍ່ຖືກຄ້າມະນຸດຄືກັນ. ໃນລະຫວ່າງການຝຶກອົບຮົມນີ້ພວກເຮົາເຄີຍໄດ້ຍິນຫຼາຍກ່ຽວກັບຜູ້ໃຫຍ່ຖືກຄ້າມະນຸດທີ່ຢູ່ໃນວຽກງານທີ່ອັນຕະລາຍ. ໃຫ້ຜູ້ໃດຜູ້ໜຶ່ງຍົກຕົວຢ່າງກ່ຽວກັບຜູ້ໃຫ່ຍຖືກຄ້າໄດ້ບໍ?.

ໃຫ້ຂຽນຕົວຢ່າງ: ວຽກງານດັ່ງກ່າວໃສ່ເຈ້ຍແຜ່ນໃຫຍ່ເພີ່ມຂໍ້ຄວາມດັ່ງຕໍ່ໄປນີ້:

- ວຽກງານທີ່ບໍ່ໄດ້ຈ່າຍເງິນເດືອນໃຫ້ກັບຄົນງານ
- ວຽກງານທີ່ເຮັດໃຫ້ຄົນງານບໍ່ສາມາດລາອອກຈາກງານໄດ້. (ຕົວຢ່າງ: ວຽກງານຮັບໃຊ້ໃນເຮືອນ, ເປັນຄົນຫາປາຜູ້ເຊິ່ງບໍ່ໄດ້ຮັບອະນຸຍາດອອກແຕ່ເຮືອ.)
- ວຽກງານທີ່ນາຍໜ້າເອົາເອກະສານເດີນທາງໄວ້,ເຊັ່ນ: ໜັງສືເດີນທາງ ຫຼື ເອກະສານອະນຸຍາດຈາກລັດຖະບານ, (ຕົວຢ່າງ : ເຈົ້າຂອງໂຮງງານໄດ້ຮັກສາເອກະສານເຫຼົ່ານັ້ນໄວ້).
- ວຽກງານທີ່ນາຍໜ້າທໍາຮ້າຍຮ່າງກາຍເພື່ອບໍ່ໃຫ້ຄົນງານນັ້ນລາອອກຈາກງານ. (ຕົວຢ່າງ: ມີຊາວນາຄົນໜຶ່ງຜູ້ເຊິ່ງຕີຄົນຍາມເມື່ອລາວຢາກອອກຈາກວຽກ.)
- ວຽກງານໜຶ່ງເຊິ່ງວ່າຄົນງານຕິດໜີ້ເຈົ້າຂອງໂຮງງານບໍ່ສາມາດລາອອກຈາກງານໄດ້ (ຕົວຢ່າງ : ຄົນຜູ້ໜຶ່ງ ເຊິ່ງໄດ້ຖືກສົ່ງໄປເຮັດວຽກຢູ່ທີ່ຟາມແຫ່ງໜຶ່ງ ເມື່ອໄປເຖິງທີ່ນັ້ນພວກເຂົາໄດ້ຖືກລາຍງານວ່າ,



ພວກເຂົາໄດ້ຕິດໜີ້ເຈົ້າຂອງໂຮງງານຄ່າທີ່ພັກອາໄສ, ຄ່າອາຫານ, ຄ່າເດີນທາງ, ແລະ ພວກເຂົາຈໍາເປັນຕ້ອງໄດ້ເຮັດວຽກໃຊ້ໜີ້ເປັນເວລາຫຼາຍປີ.)

- ເປັນວຽກງານໜຶ່ງເຊິ່ງຄົນງານໄດ້ຖືກຂົ່ມຂືນທາງເພດ (ຕົວຢ່າງ: ວຽກຮັບໃຊ້ຢູ່ໃນບ້ານ, ເຊິ່ງຄົນງານໄດ້ຖືກບັງຄັບໃຫ້ມີເພດສໍາພັນກັບນາຍຈ້າງ ແລະ ບໍ່ສາມາດລັກໜີໄດ້.)
- ວຽກງານອັນໜຶ່ງເຊິ່ງວ່າຄົນງານໄດ້ຖືກຂົ່ມຂູ່ຖ້າເຂົາລັກໜີຈະຈັບເຂົ້າຄຸກ (ຕົວຢ່າງ: ເຈົ້າຂອງຂອງໂຮງງານຖ້າໃຜລັກໜີຈະໂທຫາຕໍາຫຼວດມາຈັບເຂົ້າຄຸກ.)

ບອກໃຫ້ຜູ້ເຂົ້າຮ່ວມທັງເດັກ ແລະ ຜູ້ໃຫຍ່ບໍ່ໃຫ້ຄິດວ່າວຽກດັ່ງກ່າວພຽງແຕ່ເປັນວຽກບໍ່ດີເທົ່ານັ້ນ, ຄວາມຈິງແລ້ວມັນເປັນຕົວຢ່າງຂອງການຄ້າມະນຸດຢ່າງໜຶ່ງ ແລະ ພວກເຮົາກໍ່ເຄີຍຮູ້ໃນວຽກງານທີ່ຜິດກົດໝາຍທົ່ວໆໄປ.ໃນບົດຮຽນຕໍ່ໄປຂອງປຶ້ມດັ່ງກ່າວນີ້ຈະໄດ້ມີການເວົ້າເຖິງກົດໝາຍ ແລະ ການຄ້າມະນຸດ.

### ສະຫຼຸບບົດຮຽນ

- ການໃຊ້ແຮງງານເດັກຈະກະທົບຕໍ່ເດັກເມື່ອພວກເຂົາເຮັດວຽກເຊັ່ນ :
  - ວຽກງານທີ່ກະທົບຕໍ່ຮ່າງກາຍ.
  - ວຽກງານທີ່ກະທົບຕໍ່ຈິດໃຈ.
  - ວຽກງານທີ່ກະທົບຕໍ່ການສຶກສາ.
  - ວຽກງານທີ່ກະທົບຕໍ່ອະນາຄົດ.
- ການຄ້າເດັກ ອະທິບາຍເຖິງກໍ່ຕໍ່ເມື່ອເດັກໄດ້ຖືກຂູດຮີດແຮງງານ, ຂູດຮີດທາງເພດ ແລະ ຂູດຮີດຮ່າງກາຍ ຕົວຢ່າງ: ເດັກຜູ້ທີ່ຖືກຄ້າມະນຸດນັ້ນບໍ່ຈໍາເປັນຈະໃຫ້ພວກເຂົາບອກວ່າພວກເຂົາຖືກບັງຄັບ ຫຼື ຖືກຄຸມຕົວ.
- ຜູ້ໃຫ່ຍກໍ່ຖືກຂາຍເພື່ອຂູດຮີດແຮງງານເຊັ່ນກັນ. ພວກເຂົາຖືກຂາຍກໍ່ຕໍ່ເມື່ອເປັນວຽກດັ່ງຕໍ່ໄປນີ້:

o ເຮັດວຽກບໍ່ໄດ້ຮັບເງິນເດືອນ.
o ລູກຈ້າງຖືກຂົ່ມຂືນທາງເພດ
o ລູກຈ້າງບໍ່ສາມາດລາອອກຈາກງານໄດ້.
o ລູກຈ້າງໄດ້ຖືກຂົ່ມຂູ່ໂດຍການບັງຄັບຖ້າພວກເຂົາຄິດຈະໜີ
o ລູກຈ້າງຖືກຂົ່ມຂູ່ກັກຕົວຖ້າໃຜຄິດຈະລາອອກ.
o ລູກຈ້າງທີ່ຕິດໜີ້ນາຍຈ້າງ ແລະ ດັ່ງນັ້ນເຂົາຈຶ່ງບໍ່ສາມາດລາອອກໄດ້.

## ສະຫຼຸບບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈທຸກໆຄົນທີ່ມາເຂົ້າຮ່ວມ, ພົບກັນໃນເທື່ອໜ້າ, ທຸກຄົນທີ່ມາເຂົ້າຮ່ວມໄດ້ຮັບດາວຄົນລະໜຶ່ງດວງ.

ໃຫ້ສະມາຊິກຜູ້ເຂົ້າຮ່ວມເບິ່ງເລື່ອງໃນຊຸມຊົນຂອງພວກເຂົາ ແລະ ຄໍາຕອບດັ່ງຕໍ່ໄປນີ້.

- ວຽກຫຍັງທີ່ເດັກນ້ອຍໃນຊຸມຊົນຂອງພວກເຈົ້າເຮັດ?
- ວຽກງານເຫຼົ່ານັ້ນເປັນອັນຕະລາຍຕໍ່ເດັກນ້ອຍບໍ່? ຖ້າເປັນ, ເປັນແນວໃດ?

ບັນດາຄູຝຶກໃຫ້ຜູ້ເຂົ້າຮ່ວມຂຽນຄໍາຖາມດັ່ງກ່າວແລ້ວຖືເມື່ອເຮືອນເພື່ອທວນຄວາມຈໍາ.

# ເອກະສານອ້າງອີງ 7 ກ: ພາບການໃຊ້ແຮງງານເດັກ



1. ເດັກທີ່ເຮັດວຽກໃນໂຮງງານແຫ່ງໜຶ່ງ



2. ເອົາເດັກໄປເປັນທະຫານ



3. ເດັກທີ່ເຮັດວຽກໜັກຢູ່ທີ່ຟາມແຫ່ງໜຶ່ງ





4. ເດັກທີ່ເຮັດວຽກອະນາໄມຫ້ອງນ້ຳ



5. ເດັກທີ່ເຮັດວຽກຢູ່ໂຮງງານຕັດຫຍິບແຫ່ງໜຶ່ງ



# ເອກະສານອ້າງອີງ 7 ຂ: ຕົວຢ່າງຂອງການໃຊ້ແຮງງານເດັກ

7

| ຮ່າງກາຍ | ຈິດໃຈ | ການສຶກສາ | ອະນາຄົດ | ສະຖານທີ່ |
|---|---|---|---|---|
| ✓ | ✓ | ✓ | ✓ | ຮ້ານອາຫານ |
| ✓ | ✓ | ✓ | ✓ | ໂຮງງານຕັດຫຍິບ |
| ✓ | ✓ | ✓ | ✓ | ໂຮງງານດິນຈີ່ |
| ✓ | ✓ | ✓ | ✓ | ໂຮງງານເຂົ້າໜົມ |
| ✓ | ✓ | ✓ | ✓ | ຂາຍດອກໄມ້ຂ້າງທາງ |
| ✓ | ✓ | ✓ | ✓ | ເຮືອຫາປາ |
| ✓ | ✓ | ✓ | ✓ | ເດັກຖືຄັນຍູ |
| ✓ | ✓ | ✓ | ✓ | ເກັບຂີ້ເຫຍື້ອ |
| ✓ | ✓ | ✓ | ✓ | ຊາວນາ |
| ✓ | ✓ | ✓ | ✓ | ໂສເພນີ |
| ✓ | ✓ | ✓ | ✓ | ໂຮງງານໄມ້ທີ່ນ |
| ✓ | ✓ | ✓ | ✓ | ບໍ່ແຮ່ |

# 8 ບົດທີ 8: ການຄ້າເດັກເພື່ອການທຳຊຳເລົາ

**ຈຸດປະສົງ: ໃຫ້ຜູ້ເຂົ້າຮ່ວມໄດ້ພັດທະນາຄວາມຮູ້ກ່ຽວກັບການຄ້າເດັກນ້ອຍ, ເພື່ອຫາລຸນ ທາງເພດ (CSEC) ແລະ ຟື້ນຟູຜູ້ທີ່ຕົກເປັນເຫຍື່ອດັ່ງກ່າວ.**

## ເວລາ:

75 ນາທີ

### ອຸປະກອນ

❖ ສຳເນົາ 4-5 ຊຸດຂອງ IS 8 ກ: ກ່ຽວກັບກໍລະນີສຶກສາການຄ້າທາງເພດຂອງເດັກນ້ອຍ (໑ນຶ່ງສຳເນົາໃຫ້ໃຫ້ກຸ່ມ4-5ຄົນ).

❖ ສຳເນົາ IS 8 ຂ: ແມ່ນໃຜເປັນຜູ້ຮັບຜິດຊອບ? (ສຳລັບຄູຝຶກພຽງຢ່າງດຽວ).

## ການກະກຽມ

ໃນຊຸມຊົນບາງແຫ່ງເຊັ່ນວ່າ: (ໂຮງຮຽນກິນນອນທີ່ປະເທດຈີນ) ນັກຮຽນບໍ່ຮູ້ວ່າເພດສຳພັນແມ່ນຫຍັງ. ຖ້າມີກໍລະນີແບບນີ້ກໍ່ໃຫ້ຊອກຫາອົງການທີ່ເຮັດວຽກກ່ຽວກັບສຸຂະພາບຈະເລີນພັນ ແລະ ໂຄງການທີ່ເຮັດວຽກກ່ຽວກັບການປ້ອງກັນພະຍາດຕິດຕໍ່ທາງເພດສຳພັນ ແລະ ພະຍາດເອດສ. ໃຫ້ພວກເຂົາຊອກຄູຝຶກທີ່ມີປະສົບການ ເພື່ອນຳພາໃນການສອນບົດຮຽນດັ່ງກ່າວກ່ຽວກັບການສິດສອນການມີເພດສຳພັນໃຫ້ເໝາະກັບເດັກ ແລະ ຮັບປະກັນວ່າທ່ານໄດ້ຖືກຮັບອະນຸຍາດຈາກຜູ້ປົກຄອງຂອງເດັກກ່ອນທີ່ຈະສອນບົດຮຽນດັ່ງກ່າວ.

ແລະ ຈຳເປັນຕ້ອງໄດ້ບອກພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກກ່ອນໜ້າສະໄໝສອນເດັກຈະເລີ່ມຝຶກ ຈະມີຫົວຂໍ້ກ່ຽວກັບການຂົ່ມຂືນທາງເພດເດັກ. ຖ້າຜູ້ເຂົ້າຮ່ວມຜູ້ໃດທີ່ເຄີຍຖືກຂົ່ມຂືນໃນອາດີດບອກໃຫ້ນັກຮຽນວ່າຈະມີຫົວຂໍ້ດັ່ງກ່າວທີ່ຈະສອນໃນຂັ້ນຕໍ່ໄປ, ໃນນາມສ່ວນຕົວຂອງພວກເຂົາອາດຈະມາ ຫຼື ບໍ່ມາກໍ່ໄດ້. ກ່ອນຈະເລີ່ມສອນບົດຮຽນ, ແຈ້ງຜູ້ເຂົ້າຮ່ວມບົດຮຽນດັ່ງກ່າວຈະຕ້ອງໄດ້ປຶກສາຫາລືຫົວຂໍ້ທີ່ສະເທືອນໃຈ. ເພາະສະນັ້ນກໍ່ອະນຸຍາດໃຫ້ຜູ້ເຂົ້າຮ່ວມຢຸດ. ກໍ່ໃຫ້ຜູ້ເຂົ້າຮ່ວມຍ່າງອອກຢ່າງງຽບໆຖ້າບໍ່ສະບາຍໃຈ.

## ການແນະນຳບົດຮຽນ:

**ຍິນດີຕ້ອນຮັບ:**

ຜູ້ເຂົ້າຮ່ວມດ້ວຍການເອີ້ນຊື່, ຍື່ນໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ.

**ອົບອຸ່ນຮ່າງກາຍ:**

ໃຫ້ຄູຝຶກເດັກເລືອກເອົາເກມອົບອຸ່ນຮ່າງກາຍໃນລາຍການ,

**ທວນຄືນບົດຮຽນ:**

ວຽກງານອັນໃດແດ່ທີ່ເຫັນເດັກນ້ອຍເຮັດໃນຊຸມຊົນຂອງພວກເຮົາ ?

ວຽກງານດັ່ງກ່າວເປັນອັນຕະລາຍຕໍ່ເດັກບໍ? ຖ້າເປັນດ້ວຍເຫດໃດ?



## ການສົນທະນາ

ອະທິບາຍວ່າບົດຮຽນດັ່ງກ່າວແມ່ນເວົ້າກ່ຽວກັບຫົວຂໍ້ທີ່ຍາກທີ່ຈະເວົ້າ. ບາງເທື່ອເມື່ອຜູ້ເຂົ້າຮ່ວມເວົ້າກ່ຽວກັບຫົວຂໍ້ນີ້ອາດເຮັດໃຫ້ອາລົມບໍ່ດີ. ອະທິບາຍໃຫ້ຜູ້ເຂົ້າຮ່ວມສາມາດເສີຍຢູ່ກໍ່ໄດ້ ຫຼື ຖ້າມີຄວາມຫຍຸ້ງຍາກບໍ່ຢາກເຂົ້າຮ່ວມບົດຮຽນດັ່ງກ່າວກໍ່ໄດ້. ຖ້າພວກເຂົາອາລົມບໍ່ດີ ແລະ ຕ້ອງການຢາກຈະເວົ້າໃນຕໍ່ໜ້າ, ຄູຝຶກກໍ່ຈະຍ້າຍບົດຮຽນດັ່ງກ່າວໄປໂອລົມກັນໃນມື້ໜ້າ.

ອະທິບາຍວ່າຜົນຂອງການຖືກຄ້າມະນຸດ, ຄົນເຮົາອາດຈະຈົບລົງໃນການເຮັດວຽກທີ່ເປັນອັນຕະລາຍ.

ການຄ້າມະນຸດເພື່ອຂູດຮີດແຮງງານຕ້ອງໄດ້ນຳເອົາມາສົນທະນາກັນເຊິ່ງວ່າເມື່ອຜູ້ໃດຖືກຄ້າມະນຸດ ຫຼື ເຮັດວຽກທີ່ເປັນການໃຊ້ແຮງງານ (ຕົວຢ່າງ: ເຮັດວຽກໃນໂຮງງານແຫ່ງໜຶ່ງ, ເຮັດວຽກໃນເຮືອຫາກຸ້ງ, ເປັນຄົນຮັບໃຊ້ໃນບ້ານ). ເຖິງແນວໃດກໍ່ຕາມຄົນເຮົາຍັງສາມາດຖືກຄ້າມະນຸດເພື່ອຂາຍບໍລິການທາງເພດ.

**ການຄ້າເພື່ອການຂູດຮີດທາງເພດຂອງເດັກ: CSEC**

ອະທິບາຍວ່າ: (Commercial Sexual Exploitation of Children) CSEC (ການຄ້າເພື່ອການຂູດຮີດທາງເພດຂອງເດັກ) ອະທິບາຍເຖິງຄົນໃດໜຶ່ງ (ຕາມປົກກະຕິແມ່ນຜູ້ໃຫຍ່ ແຕ່ບາງຄັ້ງກໍ່ມີເດັກນ້ອຍທີ່ຖືກຂົ່ມຂືນທາງເພດ ຫຼື ຈ່າຍເງິນເພື່ອຈຸດປະສົງດັ່ງກ່າວ.)

ອະທິບາຍວ່າ: ບາງຄັ້ງຜູ້ໃຫຍ່ອາດຈ້າງເງິນ ຫຼື ບາງກໍລະນີອາດເປັນການລ້ຽງອາຫານ ຫຼື ຊື້ຂອງຂ້ວນໃຫ້.

ມີຫຼາຍຄັ້ງທີ່ເດັກນ້ອຍບໍ່ໄດ້ຮັບຄ່າຈ້າງ,ແຕ່ວ່າພວກເຂົາຖືກນຳພາໄປໂດຍຜູ້ໃຫຍ່, ເຈົ້າຂອງຮ້ານບໍລິການ ຫຼື ພີ່ນ້ອງ.

ອະທິບາຍຕື່ມອີກວ່າ: ການຄ້າເພື່ອການຂູດຮີດທາງເພດຂອງເດັກສາມາດເກີດຂຶ້ນໄດ້ທັງກັບເດັກຊາຍ ແລະ ເດັກຍິງ.

ບອກໃຫ້ຜູ້ເຂົ້າຮ່ວມວ່າປະເທດທີ່ແຕກຕ່າງກັນອາດນິຍາມຄຳວ່າເດັກກໍ່ແຕກຕ່າງກັນ ແຕ່ວ່າໃນເອກະສານດັ່ງກ່າວນີ້ຄຳວ່າເດັກແມ່ນມີອາຍຸຕ່ຳກວ່າ 18 ປີ .

ການຄ້າເພື່ອການຂູດຮີດທາງເພດຂອງເດັກມີຫຼາຍຊະນິດທີ່ແຕກຕ່າງກັນ, ສ່ວນໃຫຍ່ແມ່ນ:

- ເມື່ອເດັກນ້ອຍເປັນໂສເພນີ (ການບໍລິການທາງເພດແບບເຄື່ອນຍ້າຍ)
- ເມື່ອເດັກໄປພົວພັນກັບສື່ລາມົກ

ອະທິບາຍວ່າ **ສາກົນນິຍາມການເປັນໂສເພນີແມ່ນເມື່ອບຸກຄົນໃດໜຶ່ງຫາກຮັບເງິນ ເພື່ອມີເພດສຳພັນກັບຄົນອື່ນ.** ເດັກນ້ອຍຖືກບັງຄັບໃຫ້ກາຍເປັນໂສເພນີ, ຜູ້ໃຫຍ່ຜູ້ເຊິ່ງຄວບຄຸມເດັກຕາມປົກກະຕິໄດ້ຮັບເງິນຈາກ ຕົວເດັກ.

ສື່ລາມົກໝາຍຄວາມວ່າ ເລື່ອງພາບຕ່າງໆ ແລະ ຮູບເງົາທີ່ກ່ຽວກັບເພດສຳພັນ. ບາງຄັ້ງຄົນເຮົາອາດເບິ່ງສື່ລາມົກຈາກອິນເຕີເນັດ ຫຼື ຈາກໂທລະສັບມືຖື ບັນດາສື່ດັ່ງກ່າວອາດເຮັດໃຫ້ເດັກນ້ອຍເກີດມີອາລົມທາງເພດສຳພັນ.

ບອກຜູ້ເຂົ້າຮ່ວມວ່າເມື່ອເດັກນ້ອຍຫາກຕົກເປັນເຫຍື່ອຂອງການຄ້າເພື່ອການຂູດຮີດທາງເພດ ບັນດາຜູ້ໃຫຍ່ຜູ້ທີ່ຄວບຄຸມເດັກຈະພະຍາຍາມທຳຮ້າຍເດັກ. ກໍລະນີກ່ຽວຂ້ອງກັບການຂົ່ມຂູ່, ທຸບຕີ, ບໍ່ໃຫ້ອາຫານ, ບັງຄັບໃຫ້ເສບຢາ, ບັງຄັບໃຫ້ເດັກປະຕິບັດຕາມຜູ້ໃຫຍ່ເວົ້າ ແລະ ບັງຄັບໃຫ້ຍິ້ມແຍ້ມແຈ່ມໃສກັບລູກຄ້າ.

ອະທິບາຍ ການຄ້າເພື່ອການຂູດຮີດທາງເພດແມ່ນຮູບແບບຂອງການຄ້າມະນຸດເພາະວ່າເດັກຖືກຂູດຮີດເພື່ອແລກກັບການຈ່າຍເງິນ.

## ກໍລະນີສຶກສາ

ໃຫ້ຜູ້ເຂົ້າຮ່ວມແບ່ງເປັນກຸ່ມ 4-5 ຄົນ. ຢາຍກໍລະນີສຶກສາຈາກ IS 8 ກ: CSEC ໃຫ້ແຕ່ລະກຸ່ມ ແລະ ໃຫ້ພວກເຂົາຕອບຄໍາຖາມເປັນກຸ່ມ:

## ການແນະນໍາກ່ຽວກັບຮ້ານຂາຍບໍລິການ

ອະທິບາຍວ່າຫົວຂໍ້ດັ່ງກ່າວນີ້ແມ່ນເປັນຫົວຂໍ້ທີ່ຍາກອີກຫົວຂໍ້ໜຶ່ງ. ຮ້ານຂາຍບໍລິການເປັນສະຖານທີ່ທີ່ຜູ້ຊາຍໄປຈ່າຍເງິນເພື່ອມີເພດສໍາພັນກັບຜູ້ຍິງ (ບາງກໍລະນີກໍ່ມີການຂາຍເພດສໍາພັນຕາມຫ້ອງຖະໜົນ, ຕາມຮ້ານອາຫານ, ຕາມຮ້ານຄາລາໂອເກະ ຫຼື ໃນເຮືອນ). ຮ້ານຂາຍບໍລິການດັ່ງກ່າວມັກພົບເຫັນຢູ່ທີ່ຊຸມຊົນຕ່າງໆ, ຫຼາຍຄົນກໍ່ຮັບຮູ້ວ່າຮ້ານດັ່ງກ່າວມີຢູ່ບ່ອນໃດແດ່ ແລະ ພວກເຂົາກໍ່ຮູ້ດີວ່າພວກເຂົາເຮັດຫຍັງຢູ່ຂ້າງໃນນັ້ນ, ບາງບ່ອນກໍ່ເປັນບ່ອນລັບລີ້ ແຕ່ວ່າບາງຄົນກໍ່ໄປຊອກຫາເພື່ອໄປໃຊ້ບໍລິການ.

ບັນດາຜູ້ຍິງ ແລະ ເດັກນ້ອຍກໍ່ສາມາດຖືກຫລອກເຂົ້າໄປຂາຍທີ່ຮ້ານບໍລິການເພື່ອຂາຍບໍລິການທາງເພດໃຫ້ແກ່ລູກຄ້າ.

ບອກຜູ້ເຂົ້າຮ່ວມອີກວ່າຮ້ານຂາຍບໍລິການທາງເພດເປັນຊ່ອງທາງໃຫ້ຄົນເຮົາຖືກຄ້າມະນຸດ. ເມື່ອມີຜູ້ຊາຍມາທີ່ຮ້ານບໍລິການກໍ່ມີໂອກາດວ່າໂສເພນີຜູ້ທີ່ພວກເຂົາໃຊ້ບໍລິການນັ້ນອາດເປັນເດັກ ແລະ ຜູ້ທີ່ຖືກຫລອກມາ. ມີການຄາດຄະເນວ່າ10-35% ຂອງຜູ້ທີ່ຂາຍບໍລິການທາງເພດທັງໝົດຈາກປະເທດລຸ່ມແມ່ນໍ້າຂອງ (ກໍາປູເຈຍ, ຫວຽດນາມ ແລະ ໄທ) ແມ່ນມີອາຍຸໃນລະຫ່ວາງ 12-17 ປີ. ຈໍານວນດັ່ງກ່າວນັ້ນອາດມີຄືກັນຈາກປະເທດພະມ້າ, ຈີນ ແລະ ລາວເພາະວ່າຍັງບໍ່ມີການລາຍງານຈາກປະເທດດັ່ງກ່າວ.

ເຖິງແມ່ນວ່າຖ້າຜູ້ຍິງ ຫຼື ຜູ້ຊາຍທີ່ມີເພດສໍາພັນໂດຍບໍ່ແມ່ນເດັກກໍ່ຕາມກໍລະນີດັ່ງກ່າວກໍ່ເປັນໂອກາດໃຫ້ພວກເຂົາຖືກຂາຍເຂົ້າຮ້ານບໍລິການ ແລະ ກໍ່ເປັນການຍາກທີ່ຈະສາມາດອອກຈາກວຽກດັ່ງກ່າວ.

ແລະ ເຖິງແມ່ນວ່າຜູ້ທີ່ເຮັດວຽກຂາຍບໍລິການເລືອກຢູ່ທີ່ຮ້ານບໍລິການກໍ່ຕາມຊີວິດຂອງພວກເຂົາອາດພົວພັນກັບການຖືກຂົ່ມເຫງທາງກາຍ ແລະ ຈິດໃຈ.

## ແມ່ນໃຜເປັນຜູ້ຮັບຜິດຊອບ?

ຫຼັງຈາກນັ້ນເຈົ້າຕ້ອງອ່ານເລື່ອງດັ່ງກ່າວເຊິ່ງວ່າຜູ້ເຂົ້າຮ່ວມອາດຈະງຽບ. ນີ້ກໍ່ແມ່ນສັນຍານທໍາມະດາ.

## ການປະນາມ

ຖາມຜູ້ເຂົ້າຮ່ວມຖ້າໃຜເຄີຍໄດ້ຍິນວ່າຜູ້ຂາຍບໍລິການເປັນກໍລະນີດັ່ງຕໍ່ໄປນີ້ (ລາວເປັນລູກສາວທີ່ດີແຕ່ເປັນຍິງຊົ່ວ).

ເມື່ອມີຄົນເວົ້າແບບນີ້ພວກເຂົາກໍາລັງຕໍານິຜູ້ຍິງຜູ້ທີ່ໄປຂາຍບໍລິການເພື່ອຊ່ວຍຄອບຄົວຂອງເຂົາ.

ເຊັ່ນນີ້ກໍ່ແມ່ນຄວາມເຈັບຊໍ້າອັນທີສອງ. ອັນທີໜຶ່ງແມ່ນພວກເຂົາຕົກເປັນເຫຍື່ອຂອງການຄ້າມະນຸດ ແລະ ຕໍ່ມາກໍ່ເປັນຄວາມເຈັບຊໍ້າອີກຄັ້ງທີສອງກໍ່ຄືການຈໍາແນກຈາກຊຸມຊົນ.

*ການປົກປ້ອງເດັກ: ການຄ້າມະນຸດ ແລະ ການຂູດຮີດທາງເພດ* ***http://www.unicef.org/***



ໃຫ້ບອກຜູ້ເຂົ້າຮ່ວມວ່າຖ້າຜູ້ໃດຫາກຖືກຂູດຮີດທາງເພດ, ມັນເປັນສິ່ງສໍາຄັນທີ່ພວກເຮົາຈະຮັບຮູ້ ແລະ ເຂົ້າໃຈຄວາມເຈັບປວດຂອງພວກເຂົາ, ສິ່ງທີ່ເກີດຂຶ້ນບໍ່ແມ່ນຄວາມຜິດຂອງພວກເຂົາ, ແລະ ພວກເຂົາກໍ່ຕ້ອງການຄວາມຊ່ວຍເຫຼືອ ແລະ ການຍອມຮັບຈາກສັງຄົມໃນສິ່ງທີ່ເກີດຂຶ້ນກັບພວກເຂົາ.

ໃຫ້ບອກຜູ້ເຂົ້າຮ່ວມອີກວ່າຫ້າມບໍ່ໃຫ້ມີການຕໍານິຕິຕຽນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ຜູ້ຖືກເຄາະຮ້າຍຕ່າງໆຄວນຈະໄດ້ຮັບການຮັກສາ ແລະ ຍອມຮັບກັບຄືນສູ່ສັງຄົມຂອງພວກເຂົາ.

## ການຂຽນບັນທຶກລາຍວັນ

ໃຫ້ຜູ້ເຂົ້າຮ່ວມຂຽນ ແລະ ແຕ້ມເຖິງຄວາມຮູ້ສຶກຫຼັງຈາກທີ່ໄດ້ຍິນເລື່ອງດັ່ງກ່າວ.

### ສະຫຼຸບບົດຮຽນ

- CSEC (ການຄ້າເດັກເພື່ອຂູດຮີດທາງເພດ) ເກີດຂຶ້ນກໍ່ຕໍ່ເມື່ອບຸກຄົນໜຶ່ງປົກກະຕິແມ່ນຜູ້ໃຫຍ່ (ບາງຄັ້ງກໍ່ເປັນເດັກ) ຜູ້ທີ່ລ່ວງລະເມີດທາງເພດກັບເດັກ ຫຼື ຈ່າຍເງິນໃຫ້ເພື່ອໃຫ້ເຂົາຂາຍບໍລິການທາງເພດ.
- ຮ້ານຂາຍບໍລິການຕ່າງໆກໍໃຫ້ເກີດມີການຄ້າມະນຸດເພື່ອຂູດຮີດທາງເພດ.
- ຜູ້ທີ່ຕົກເປັນເຫຍື່ອຂອງການຄ້າມະນຸດບໍ່ຄວນຖືກປະນາມ.
- ຜູ້ທີ່ຕົກເປັນເຫຍື່ອຂອງການຄ້າມະນຸດທັງໝົດນັ້ນຄວນໄດ້ຮັບການຮັກສາ, ຍອມຮັບພວກເຂົາກັບຄືນສູ່ສັງຄົມ.

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈທຸກໆທີ່ມາເຂົ້າຮ່ວມ, ພົບກັນໃນເທື່ອໜ້າ, ທຸກຄົນທີ່ມາເຂົ້າຮ່ວມໄດ້ຮັບດາວຄົນລະ 1 ດາວ.

ໃຫ້ສະມາຊິກຜູ້ເຂົ້າຮ່ວມເບິ່ງເລື່ອງໃນຊຸມຊົນຂອງພວກເຂົາ ແລະ ຄໍາຕອບດັ່ງຕໍ່ໄປນີ້.

ການໂອ້ລົມກ່ຽວກັບການຄ້າ CESC ແລະ ຮ້ານບໍລິການນີ້ສາມາດເຮັດໃຫ້ຜູ້ເຂົ້າຮ່ວມບໍ່ສະບາຍໃຈ ແລະ ເຈົ້າສາມາດນັ່ງຢູ່ຫຼັງສຸດຂອງຫ້ອງປະມານ 10 ນາທີ. ໃນກໍລະນີບາງຄັ້ງອາດມີຜູ້ຕ້ອງການຢາກຈະເວົ້າເລື່ອງດັ່ງກ່າວ.

# 8 ເອກະສານອ້າງອີງ 8 ກ: ກໍລະນີສຶກສາການຄ້າ ເດັກ ເພື່ອຜົນປະໂຫຍດທາງເພດ

*ບັນດາກໍລະນີສຶກສາດັ່ງກ່າວແມ່ນໄດ້ຄັດຈ້ອນມາຈາກເລື່ອງຈິງ*

## ເລື່ອງທີ 1

ທ ອາ ອາໄສຢູ່ບ້ານນ້ອຍແຫ່ງໜຶ່ງທີ່ຢູ່ໃກ້ເມືອງ. ທີ່ເປັນຫາດຊາຍຂອງແຫຼ່ງນັກທ່ອງທ່ຽວ, ທ.ອາມີອາຍຸ 10 ປີ ລາວມີເອື້ອຍອ້າຍນ້ອງຫຼາຍຄົນ ແລະ ພໍ່ຂອງລາວໄດ້ຈາກພວກເຂົາໄດ້ຫຼາຍປີແລ້ວ. ເພື່ອນບ້ານຂອງລາວຄົນໜຶ່ງໄດ້ພາລາວໄປຢູ່ທີ່ເມືອງທ່ອງທ່ຽວດັ່ງກ່າວ,ເພື່ອນບ້ານຄົນດັ່ງກ່າວໄດ້ບອກກັບລາວວ່າລາວຈະຫາເງິນໄດ້ຫຼາຍໂດຍການໄປຂໍທານຈາກນັກທ່ອງທ່ຽວຄົນທີ່ຮັ່ງມີ. ເມື່ອ ທ. ອາ ໄປເຖິງທີ່ນັ້ນລາວກໍ່ໄດ້ພົບກັບເພື່ອນບ້ານທີ່ໂຫດຫ້ຽມຕໍ່ລາວຫຼາຍ ລາວໄດ້ນອນຢູ່ຕາມຊາຍຫາດ ແລະ ອອກຂໍທານໃນເວລາກາງເວັນ, ແຕ່ຫາກມື້ໃດລາວຂໍເງິນບໍ່ໄດ້ຫຼາຍເພື່ອນບ້ານຂອງລາວກໍ່ຈະຕີລາວໃນເວລາກາງຄືນ.

ບາງຄັ້ງກໍ່ມີນັກທ່ອງທ່ຽວມາສະເໜີເງິນໃຫ້ລາວເພື່ອມີເພດສຳພັນ ລາວກໍ່ບໍ່ຕ້ອງການ ແຕ່ວ່າລາວບໍ່ມີເງິນພຽງພໍທີ່ຈະຊື້ເຂົ້າກິນ ຫຼື ບໍ່ມີເງິນທີ່ຈະຈ່າຍໃຫ້ເພື່ອນບ້ານຂອງລາວເພາະສະນັ້ນບາງຄັ້ງລາວຈຶ່ງຈຳເປັນຕ້ອງຍອມ.

ມື້ໜຶ່ງ ທ. ອາ ໄດ້ພົບກັບພະນັກງານໂຄງການຄົນໜຶ່ງ, ຜູ້ທີ່ໄດ້ຍິນກ່ຽວກັບບັນຫາຂອງລາວ ພະນັກງານໂຄງການໄດ້ຊ່ວຍລາວອອກຈາກເມືອງແຫ່ງນັ້ນ ແລະ ສົ່ງລາວກັບບ້ານ ຫຼັງຈາກນັ້ນພະນັກງານໂຄງການກໍ່ຕິດຕໍ່ກັບຕຳຫຼວດເພື່ອລາຍງານກ່ຽວກັບເພື່ອນບ້ານຂອງລາວ. ທ້າວ ອາ ກໍ່ໄດ້ກັບຄືນເມື່ອບ້ານຢູ່ກັບຄອບຄົວຂອງລາວ ແລະ ໂຄງການກໍ່ໄດ້ສືບຕໍ່ສະໜັບສະໜູນລາວ.

- ອັນໃດເຮັດໃຫ້ ທ ອາ ຕົກເປັນເຫຍື່ອຂອງການຂູດຮີດ?
- ໃຜເປັນຜູ້ຫລອກຂາຍ ທ . ອາ ?
- ການຄ້າມະນຸດນີ້ເປັນຄວາມຜິດຂອງ ອາ ບໍ?
- ການຊ່ວຍເຫຼືອແບບໃດທີ່ຊາວບ້ານຊ່ວຍລາວເພື່ອໃຫ້ລາວມີຊີວິດໃໝ່?.

## ເລື່ອງທີ 2

ນ.ເອັດ ອາຍຸ 15 ປີ ເຊິ່ງເປັນຄົນມາຈາກຊົນເຜົ່າແຫ່ງໜຶ່ງ, ລາວບໍ່ເຄີຍໄດ້ເຂົ້າໂຮງຮຽນເລີຍ ມີມື້ໜຶ່ງລາວກັບມາແຕ່ນາກໍ່ພົບວ່າພໍ່ຂອງລາວນັ້ນປ່ວຍ, ລາວໄດ້ພາພໍ່ຂອງລາວໄປທີ່ສຸກສາລາປະຈຳບ້ານເພື່ອປິ່ນປົວ, ແຕ່ວ່າລາວຈຳຕ້ອງໄດ້ຢືມເງິນເພື່ອປິ່ນປົວພໍ່ຂອງລາວ, ພໍ່ຂອງລາວໄດ້ໃຊ້ເວລາຫຼາຍວັນເພື່ອພັກຟື້ນ ແລະ ບໍ່ສາມາດເຮັດວຽກໄດ້. ມື້ໜຶ່ງເຈົ້າໜີ້ມາຢ້ຽມເຮືອນຂອງລາວເພື່ອຖາມໜີ້ ແຕ່ລາວບໍ່ມີເງິນຈ່າຍໃຫ້ເຈົ້າໜີ້.

ມື້ໜຶ່ງເຈົ້າໜີ້ມາສະເໜີເອົານ. ເອັດ ເພື່ອແລກກັບໜີ້, ຄອບຄົວລາວກໍ່ໄດ້ຕົກລົງ ແລະ ນ. ເອັດກໍ່ໄດ້ຖືກຂາຍໃຫ້ຮ້ານບໍລິການເພື່ອເຮັດວຽກຢູ່ທີ່ນັ້ນ, ນ.ເອັດ ໄດ້ຖືກບັງຄັບໃຫ້ເຮັດວຽກຢູ່ທີ່ນັ້ນເປັນເວລາສອງປີ, ລາວໄດ້ຮັບແຂກຫຼາຍຄົນຕໍ່ວັນ ແລະ ບໍ່ໄດ້ຮັບເງິນເດືອນຈັກເທື່ອ, ລາວເສຍໃຈຫຼາຍ ແລະ ຕ້ອງການຢາກຂ້າຕົວຕາຍ.



ພາຍຫຼັງສອງປີຜ່ານໄປຮ້ານຂາຍບໍລິການດັ່ງກ່າວກໍ່ໄດ້ຖືກກວດລ້າງໂດຍເຈົ້າໜ້າທີ່ ແລະ ນ ເອັດກໍ່ໄດ້ກັບຄືນສູ່ຄອບຄົວຂອງລາວ.

- ອັນໃດເປັນສາຍເຫດທີ່ເຮັດໃຫ້ ນ ເອັດ ຕົກເປັນເຫຍື່ອຂອງການຄ້າມະນຸດ?
- ໃຜເປັນຜູ້ຫລອກຂາຍ ນ ເອັດ?
- ເປັນຄວາມຜິດຂອງ ນ ເອັດ ບໍທີ່ລາວຖືກຄ້າມະນຸດ?
- ການຊ່ວຍເຫຼືອແບບໃດທີ່ ນ ເອັດຕ້ອງການຢາກໃຫ້ພື້ນຟູຊີວິດຂອງລາວ?

# ເອກະສານອ້າງອີງ 8 ຂ: ໃຜເປັນຜູ້ຮັບຜິດຊອບ

8

*ໃຊ້ເປັນຂໍ້ອ້າງອີງສຳລັບຄູຝຶກເທົ່ານັ້ນ. ບໍ່ຕ້ອງສຳເນົາຂໍ້ຄວາມດັ່ງລຸ່ມນີ້ໃຫ້ຜູ້ເຂົ້າຮ່ວມ.*

ມີຮ້ານຂາຍບໍລິການແຫ່ງໜຶ່ງຢູ່ໃຈກາງເມືອງ. ທຸກຄົນໃນຊຸມຊົນນີ້ກໍ່ຮູ້ດີວ່າ. ມີຫັຍງເກີດຂຶ້ນຢູ່ຮ້ານບໍລິການດັ່ງກ່າວ. ພວກເຂົາກໍ່ເຫັນຍິງສາວໜຸ່ມນ້ອຍນັ່ງຢູ່ໃຕ້ແສງໄຟ ເມື່ອເວລາພວກເຂົາຂີ່ລົດກາຍໃນຍາມກາງຄືນ, ບາງຄັ້ງກໍ່ເບິ່ງຄືວ່າມີແຕ່ຜູ້ນ້ອຍໆ. ຄົນທີ່ຢູ່ໃນເມືອງດັ່ງກ່າວກໍ່ເຫັນບັນດາຜູ້ຊາຍຈາກຊຸມຊົນມາດື່ມກັບຜູ້ຍິງຢູ່ທີ່ຮ້ານ, ທຸກໆຄົນກໍ່ຍັງສາມາດຄາດຄະເນອີກວ່າພວກເຂົາເຫັນບັນດາຜູ້ຊາຍເຂົ້າໄປໃນຫ້ອງຢູ່ຊັ້ນເທິງ. ມີຂ່າວລືຢູ່ໃນເມືອງກ່ຽວກັບຮ້ານດັ່ງກ່າວ, ມີຫຼາຍຄົນເວົ້າວ່າຮ້ານຂາຍບໍລິການນີ້ແມ່ນອະນຸຍາດໃຫ້ຄອບຄົວຜູ້ທີ່ທຸກຍາກໃຊ້ໜີ້ໂດຍການສົ່ງລູກສາວຂອງພວກເຂົາມາທີ່ຮ້ານດັ່ງກ່າວ ແລະ ກໍ່ມີຫຼາຍໆຄົນກໍ່ຍັງເວົ້າອີກວ່າພວກເຂົາໄດ້ພົບເຫັນເດັກນ້ອຍຕ່ຳກວ່າ 18 ປີ, ຍິ່ງໄປກວ່ານັ້ນພວກເຂົາເວົ້າວ່າ: ຖ້າເຈົ້າຫາກມີເງິນພຽງພໍເຈົ້າກໍ່ສາມາດມີເພດສຳພັນກັບສາວບໍລິສຸດໄດ້.

ໃນຄ່ຳຄືນຂອງວັນໜຶ່ງ ເຈົ້າຂອງຮ້ານຂາຍເຄື່ອງທີ່ຢູ່ກົງກັນຂ້າມກັບຮ້ານບໍລິການດັ່ງກ່າວໄດ້ເຫັນຜູ້ສາວທີ່ມາໃໝ່, ເບິ່ງຄືປະມານ 16 ປີນັ່ງຢູ່ທີ່ໂຕະ, ສາວດັ່ງກ່າວເບິ່ງຄືລາວມີລັກສະນະຢ້ານກົວ, ຫງ່ອມເຫງົາ.

ເດັກເສີບເບຍຜູ້ຊາຍ ຜູ້ທີ່ມາເສີບເບຍໃນຄືນນັ້ນກໍ່ໄດ້ເຫັນຜູ້ສາວນ້ອຍດັ່ງກ່າວ, ລາວກໍ່ຄິດເປັນຫ່ວງເພາະວ່າຜູ້ສາວຄົນນັ້ນຍັງນ້ອຍຫຼາຍ. ແນວໂຮມບ້ານຄົນໜຶ່ງກໍ່ຄິດເຊັ່ນດຽວກັນວ່າເລື່ອງດັ່ງກ່າວມັນເປັນສິ່ງທີ່ໜ້າອັບອາຍທີ່ເກີດຂຶ້ນໃນຊຸມຊົນຂອງລາວ, ແຕ່ລາວກໍ່ຄິດຄືນດຽວວ່າ:ຂ້ອຍຈະເຮັດແນວໃດ, ຍ້ອນສະພາບບ້ານເຮົາເປັນແບບນີ້. ໃນຄືນນັ້ນມີນັກຮຽນກຸ່ມໜຶ່ງມາທີ່ຮ້ານບໍລິການດັ່ງກ່າວພວກເຂົາກໍ່ຮູ້ສຶກບໍ່ສະບາຍໃຈເມື່ອເຫັນຍິງຄົນນັ້ນ, ແຕ່ພວກເຂົາກໍ່ໄປຫຼິ້ນນຳຜູ້ຍິງທີ່ມີອາຍຸແກ່ກວ່າ.

ໃນຄືນນັ້ນ, ມີຜູ້ໜຶ່ງທີ່ຈ່າຍເງິນໃຫ້ເຈົ້າຂອງຮ້ານບໍລິການເພື່ອແລກກັບຄວາມບໍລິສຸດຂອງຍິງສາວດັ່ງກ່າວ. ລາວໄດ້ພານາງເຂົ້າຫ້ອງແຕ່ວ່ານາງຄົນນັ້ນກໍ່ຕົກໃຈຢ້ານກົວຫຼາຍ. ລາວຈຶ່ງຕໍ່ສູ້ຄືນໃນຂະນະທີ່ພະຍາຍາມກຸມກັນຢູ່ນັ້ນຜູ້ຊາຍຄົນນັ້ນກໍ່ໄດ້ຍູ້ນາງໃສ່ກຳແພງລາວກໍ່ເລີຍເສຍຊີວິດ.

ຕຳຫຼວດກໍ່ເຂົ້າມາ ແລະ ກໍ່ພົບວ່ານາງສາວຄົນນັ້ນອາຍຸພຽງ 15 ປີ ແລະ ລາວໄດ້ຖືກຂາຍຍ້ອນວ່າ ຄອບຄົວຍາກຈົນ. ທຸກໆຄົນກໍ່ໄດ້ເວົ້າເລື່ອງດັ່ງກ່າວດັງໄປທົ່ວເມືອງ.

"ເຈົ້າຂອງຮ້ານຂາຍເຄື່ອງໄດ້ເວົ້າວ່າ: ມັນບໍ່ແມ່ນຄວາມຜິດຂອງຂ້ອຍ" "ມັນບໍ່ແມ່ນວຽກຂອງຂ້ອຍ".

"ເດັກເສີບເບຍຜູ້ຊາຍກໍ່ໄດ້ເວົ້າວ່າ: ມັນບໍ່ແມ່ນຄວາມຜິດຂອງຂ້ອຍ" "ມັນບໍ່ມີຫຍັງທີ່ຂ້ອຍຈະສາມາດເຮັດໄດ້".

"ນາຍບ້ານກໍ່ເວົ້າວ່າ:ມັນບໍ່ແມ່ນຄວາມຜິດຂອງຂ້ອຍ, ຂ້ອຍບໍ່ມີອຳນາດທີ່ຈະຍົກເລີກຮ້ານດັ່ງກ່າວນັ້ນໄດ້"

"ບັນດານັກຮຽນກໍ່ເວົ້າວ່າ: ມັນບໍ່ແມ່ນຄວາມຜິດຂອງຂ້ອຍ" "ພວກເຮົາບໍ່ໄດ້ຮ່ວມເພດກັບລາວ".

ເຈົ້າຂອງຮ້ານບໍລິການເວົ້າວ່າ: "ມັນບໍ່ແມ່ນຄວາມຜິດຂອງຂ້ອຍ, ຂ້ອຍບໍ່ຄິດເລີຍວ່າຜູ້ຊາຍຄົນນັ້ນຈະຂ້າລາວ".

ແຕ່ວ່າໃນຄືນນັ້ນບໍ່ມີໃຜນອນຫລັບເລີຍ, ເມື່ອພວກເຂົາລົ້ມນອນລົງເທື່ອໃດ,ກໍ່ເຫັນແຕ່ພາບນາງມາຫລອກຫຼອນມີລົມພັດແຮງ ແລະ ພວກເຂົາກໍ່ຝັນໄດ້ຍິນສຽງຂອງນາງທີ່ຮ້ອງສຽງດັງກ້ອງໄປຕາມສາຍລົມວ່າ: "ພວກເຈົ້າເຫັນຂ້ອຍແລ້ວເປັນຫຍັງພວກເຈົ້າບໍ່ຊ່ວຍຂ້ອຍ".



ໃນເຊົ້າຕໍ່ມາພວກເຂົາກໍ່ຕື່ນນອນດ້ວຍຄວາມຮູ້ສຶກຜິດຢ່າງຮ້າຍແຮງພວກເຂົາສຳນຶກໃນໃຈວ່າ, ພວກເຂົາມີຄວາມຮູ້ສຶກຜິດທີ່ບໍ່ໄດ້ຊ່ວຍລາວ.

"ເຈົ້າຂອງຮ້ານຂາຍເຄື່ອງບອກວ່າມັນແມ່ນຄວາມຜິດຂອງຂ້ອຍ, ທີ່ຂ້ອຍບໍ່ໄດ້ໂທຫາໜ່ວຍງານທີ່ກ່ຽວຂ້ອງມາຊ່ວຍ" "ບັນດາເດັກເສີບຜູ້ຊາຍກໍ່ເວົ້າວ່າມັນເປັນຄວາມຜິດຂອງຂ້ອຍທີ່ຂ້ອຍບໍ່ໄດ້ໂທຫາຕຳຫຼວດ".

"ນາຍບ້ານເວົ້າວ່າ: ມັນເປັນຄວາມຜິດຂອງຂ້ອຍທີ່ຂ້ອຍບໍ່ໄດ້ຂັດຄ້ານສະຖານທີ່ດັ່ງກ່າວ".

ບັນດານັກຮຽນເວົ້າວ່າ: "ມັນເປັນຄວາມຜິດຂອງພວກເຮົາທີ່ພວກເຮົາກໍ່ຮູ້ວ່າຮ້ານດັ່ງກ່າວຂົ່ມເຫງສາວບໍລິການ, ພວກເຮົາບໍ່ຄວນມາໃຊ້ບໍລິການເລີຍ".

ເຈົ້າຂອງຮ້ານບໍລິການເວົ້າວ່າ:"ມັນເປັນຄວາມຜິດຂອງຂ້ອຍ, ຂ້ອຍບໍ່ຄວນເຫັນແຕ່ແກ່ເງິນເລີຍ".

ຄົນທັງເມືອງກໍ່ເວົ້າວ່າ: "ມັນເປັນຄວາມຜິດຂອງພວກເຮົາທັງໆທີ່ພວກເຮົາກໍ່ຮູ້ແຕ່ກໍ່ຍັງປ່ອຍໃຫ້ຮ້ານບໍລິການດັ່ງກ່າວດຳເນີນຢູ່".

## ຄຳຖາມທີ່ໃຊ້ສົນທະນາ

- ເຈົ້າຄິດແນວໃດກ່ຽວກັບເລື່ອງນີ້? ມັນເກີດຂຶ້ນຈິງບໍ ?
- ເຈົ້າຄິດວ່າໃຜຈະເປັນຜູ້ຮັບຜິດຊອບໃນການເສຍຊີວິດຂອງຍິງຄົນນີ້?
- ເຈົ້າຄິດວ່າຮ້ານບໍລິການຈະເປັນສາເຫດທີ່ນຳໄປສູ່ການຄ້າມະນຸດບໍ?

# 9 ບົດທີ 9: ວິທີການຫຼອກລວງຂອງຜູ້ຄ້າມະນຸດ

**ຈຸດປະສົງ: ໃຫ້ຜູ້ເຂົ້າຮ່ວມຮຽນຮູ້ກ່ຽວກັບເລ່ກົນຂອງຜູ້ຄ້າມະນຸດທີ່ຈະເອົາໄປນຳໃຊ້ກັບແຮງງານເຄື່ອນຍ້າຍ ດັ່ງນັ້ນພວກເຂົາສາມາດປົກປ້ອງຕົວຂອງພວກເຂົາຈາກການຄ້າມະນຸດໃນເມື່ອພວກເຂົາປະເຊີນກັບບັນຫາດັ່ງກ່າວ.**

## ເວລາ:

75 ນາທີ

### ອຸປະກອນ

- ❖ ອັດສຳເນົາເອກະສານອ້າງອີງ 9 ກ: ເກມຜູ້ຄ້າມະນຸດໃຫ້ພຽງພໍກັບແຕ່ລະກຸ່ມ.
- ❖ ຢາຍເຈ້ຍແຜ່ນໃຫຍ່ໃຫ້ພ້ອມທັງບິກ.
- ❖ ສຳເນົາ 4ກ: ຂໍ້ມູນການເດີນທາງ (ບົດຮຽນທີ 4)
- ❖ ເຈ້ຍສີນ້ອຍ
- ❖ ປື້ມຄູ່ມືຜູ້ນຳທີ່ສະຫຼາດ

## ການແນະນຳບົດຮຽນ:

**ຍິນດີຕ້ອນຮັບ:**

ໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ.

**ອົບອຸ່ນຮ່າງກາຍ:**

ນຳໃຊ້ເກມຕ່າງໆຈາກລາຍການ.

**ທວນຄືນບົດຮຽນ:**

ມີໃຜສາມາດໃຫ້ນິຍາມໄດ້ວ່າການຄ້າມະນຸດແມ່ນຫຍັງ? (SNB ໃຫ້ຜູ້ເຂົ້າຮ່ວມເບິ່ງເອກະສານປື້ມຄູ່ມືນຳໃຊ້ເຂົ້າໃນການເຄື່ອນຍ້າຍແຮງງານທີ່ປອດໄພຖ້າຍັງສັບສົນຢູ່).

ກິດຈະກຳດັ່ງກ່າວແມ່ນອີງໃສ່ເກມ (ຈົ່ງລະວັງຜູ້ທີ່ເອົາຄົນໄປຂາຍເພື່ອໄປເປັນທາດຮັບໃຊ້) ຈາກຫຼັກສູດການເປັນຂ້າທາດ ແລະ ສິດທິມະນຸດ, ພາກທີ 3 ໜ້າທີ 6, ສາມາດເບິ່ງເພີ່ມຕື່ມທີ່

## ສົນທະນາບົດຮຽນ

ແບ່ງຜູ້ເຂົ້າຮ່ວມເປັນກຸ່ມ 4-5 ຄົນ. ຢາຍເອກະສານຂໍ້ມູນການເດີນທາງໃຫ້ແຕ່ລະກຸ່ມທີ່ເອົາມາຈາກບົດຮຽນໃນຄັ້ງກ່ອນ, ດັ່ງນັ້ນແຕ່ລະກຸ່ມກໍ່ຈະມີຢູ່ 5 ເລື່ອງ. ໃຫ້ພວກເຂົາອ່ານເລື່ອງດັ່ງກ່າວຄືນໃໝ່ ແລະ ໃຫ້ພວກເຂົາຂຽນລົງກ່ຽວກັບຜູ້ຄ້າມະນຸດ ແລະ ຫລອກລວງຜູ້ເຄື່ອນຍ້າຍແຮງງານ. ຕົວຢ່າງ: "ການມາຕີສະນິດເພື່ອເປັນເພື່ອນກັບເຮົາ" ເມື່ອພວກເຂົາຂຽນໝົດແລ້ວກໍ່ໃຫ້ພວກເຂົາອ່ານລາຍການດັ່ງກ່າວສູ່ຟັງ ແລະ ເຈົ້າກໍ່ສາມາດຂຽນໃສ່ເຈ້ຍແຜ່ນໃຫຍ່ກໍ່ໄດ້.



ຈົ່ງຕື່ມຕົວຢ່າງດັ່ງກ່າວນີ້ໃສ່ເຈ້ຍແຜ່ນໃຫຍ່ເລື່ອງທີ່ຍັງບໍ່ທັນໄດ້ກ່າວເຖິງ:

- ຜູ້ຄ້າມະນຸດມາຕີສະນິດເພື່ອເປັນເພື່ອນ ຫຼື ມາໃຫ້ຄວາມຊ່ວຍເຫຼືອ.
- ຜູ້ຄ້າມະນຸດອາດມາສະເໜີເງິນເດືອນສູງໆໃຫ້, ປົກກະຕິມັກຈະເວົ້າເງິນເດືອນສູງໆກວ່າທີ່ເຄີຍໄດ້ຍິນມາ.
- ຜູ້ຄ້າມະນຸດອາດຈ່າຍເງິນຄ່າເດີນທາງໃຫ້ຜູ້ເຄື່ອນຍ້າຍແຮງງານຈ່າຍຄ່າຂົນສົ່ງ ຫຼື ໃຫ້ຢືມເງິນເພື່ອຮັບປະກັນວ່າໃຫ້ຜູ້ເຄື່ອນຍ້າຍແຮງງານເຮັດວຽກ, ຜູ້ຄ້າມະນຸດອາດເຮັດໃຫ້ແນ່ໃຈວ່າຜູ້ເຄື່ອນຍ້າຍແຮງງານຕິດໜີ້ຕົນເອງ, ຜູ້ຄ້າມະນຸດມັກຈະຖືເອກະສານຜູ້ເຄື່ອນຍ້າຍແຮງງານໄວ້.
- ຜູ້ຄ້າມະນຸດມັກຈະຕົວະຜູ້ເຄື່ອນຍ້າຍແຮງງານໄປທີ່ໂຮງງານ.

ຍັງມີເລື່ອງເດັ່ນຫຼາຍເລື່ອງທີ່ຜູ້ເຄື່ອນຍ້າຍແຮງງານຍັງບໍ່ໄດ້ກຽມຕົວ. ເມື່ອຜູ້ເຄື່ອນຍ້າຍແຮງງານຮູ້ສຶກວ່າຕົນເອງຕົກຢູ່ໃນຄວາມລຳບາກແລ້ວ ທ້າວ/ນາງ ບໍ່ມີເງິນຈັກກີບ ຫຼື ບໍ່ມີຄວາມຮູ້ທີ່ຈະກັບບ້ານ. ໃນຕອນທ້າຍຂອງຄູ່ມືສະບັບນີ້ ຈະມີບົດຮຽນທີ່ເວົ້າເຖິງການກຽມຕົວເພື່ອເຮັດໃຫ້ຜູ້ເຄື່ອນຍ້າຍແຮງງານມີຄວາມປອດໄພ, ດັ່ງນັ້ນບັນດາຜູ້ເຂົ້າຮ່ວມກໍ່ຈະບໍ່ໄດ້ຮຽນຮູ້ແຕ່ພຽງເລື່ອງດຽວ.

ສິ່ງເຫຼົ່ານີ້ບໍ່ແມ່ນວິທີທາງດຽວທີ່ຜູ້ຄ້າມະນຸດໃຊ້ຫລອກຜູ້ເຄື່ອນຍ້າຍແຮງງານ, ແຕ່ພວກເຂົາກໍ່ຮູ້ມັນເປັນເລື່ອງທີ່ສຳຄັນ, ຖ້າບຸກຄົນໃດໜຶ່ງຫາກກະທຳສິ່ງໃດໜຶ່ງໃນເລື່ອງດັ່ງກ່າວນີ້, ພວກເຂົາກໍ່ຈະເປັນຄົນທີ່ຖືກຫລອກໄດ້.

## ເກມກ່ຽວກັບຜູ້ຄ້າມະນຸດ

ໃຫ້ຜູ້ເຂົ້າຮ່ວມແບ່ງເປັນກຸ່ມລະ 10 ຄົນ, ໃຫ້ຄົນໃດໜຶ່ງໃນກຸ່ມນັ້ນເປັນຜູ້ຄ້າມະນຸດ, ໃຫ້ແຕ່ລະກຸ່ມສ້າງເລື່ອງເປັນຜູ້ຄ້າມະນຸດຈາກເອກະສານແຫຼ່ງຂໍ້ມູນ 9 ກ: ເກມຜູ້ຄ້າມະນຸດ ແລະ ໃຫ້ພວກເຂົາຢາຍເກມຜູ້ຄ້າມະນຸດໃຫ້ແຕ່ລະຄົນຕ້ອງມີ 1 ໃບ.

ໃນແຕ່ລະກຸ່ມຕ້ອງມີຂໍ້ຄວາມທີ່ໃຊ້ໄວ້ອ່ານ ແລະ ຜູ້ຄ້າມະນຸດພະຍາຍາມຈະຈັບຜູ້ເຂົ້າຮ່ວມ, ຖ້າຜູ້ເຂົ້າຮ່ວມຫາກຖືກຈັບ, ຜູ້ຄ້າມະນຸດກໍ່ຈະຖາມຜູ້ເຂົ້າຮ່ວມວ່າ:

- ເຈົ້າສາມາດລອດບໍ່?

ແຕ່ລະໃບມີເຫດຜົນທີ່ພວກເຂົາສາມາດເອົາຕົວລອດຈາກ ........

ຜູ້ທີ່ມີສະຕິກເກີ້ຕິດຢູ່ໃນໃບເຈ້ຍຂອງເຂົາແມ່ນໃຫ້ຜູ້ນັ້ນອ່ານກ່ອນ, ໃນໃບກ່ຽວກັບ (ຜູ້ຄ້າມະນຸດ), ຜູ້ທີ່ຕິດໃສ່ສະຕິກເກີ້ດັ່ງກ່າວ, ຜູ້ທີ່ມີເຈ້ຍສະຕິກເກີ້ຕິດຢູ່ນັ້ນກໍ່ຈະໄດ້ຍ່າງໜີ.

ເມື່ອບ່ອນໝາຍ..........ຂອງຜູ້ເຂົ້າຮ່ວມນັ້ນທີ່ປົກຄຸມດ້ວຍສະຕິກເກີ້, ສະແດງວ່າຜູ້ນັ້ນຖືກຄ້າມະນຸດແລ້ວ ແລະ ໃຫ້ເຂົາໄປນັ່ງກັບຜູ້ຖືກເຄາະຮ້າຍຄົນອື່ນລໍ້ຖ້າຈົນກວ່າເກມຈະຈົບລົງ.

ຂ້າງລຸ່ມນີ້ແມ່ນຕົວຢ່າງຂອງເກມຜູ້ຄ້າມະນຸດທີ່ສົມບູນ.

### ເກມຜູ້ຄ້າມະນຸດ 2

ເຈົ້າເປັນຊາຍໜຸ່ມຜູ້ທີ່ທຸກຍາກຄົນໜຶ່ງ, ຜູ້ເຊິ່ງບໍ່ສາມາດອ່ານໜັງສືໄດ້. ມີຜູ້ຄ້າມະນຸດຄົນໜຶ່ງໄດ້ເຂົ້າມາຫາເຈົ້າຜູ້ເຊິ່ງຕ້ອງການສະເໜີວຽກມາໃຫ້ເຈົ້າ, ທີ່ສະຖານທີ່ກໍ່ສ້າງທີ່ປະເທດໄທ.

- ຂ້ອຍສາມາດເອົາຕົວລອດໄດ້ເພາະວ່າລາວສະເໜີເງິນເດືອນສູງໂພດ ແລະ ເຮັດໃຫ້ຂ້ອຍສົງໃສ.
- ຂ້ອຍຖືກຈັບກໍ່ເພາະວ່າລາວເອົາເງິນໃຫ້ຢືມ, ເພື່ອໃຫ້ຄອບຄົວຂອງຂ້ອຍ 3.000 ບາດ ແລະ ແລ້ວລາວກໍ່ໃຫ້ຂ້ອຍເຮັດວຽກປະມານສອງປີໂດຍບໍ່ໄດ້ຮັບເງິນເດືອນ, ລາວໄດ້ຕົວະຂ້ອຍວ່າມັນເປັນກົດໝາຍ ແລະ ຂ້ອຍບໍ່ສາມາດຮູ້.

## ການສົນທະນາ

ຫຼັງຈາກນັ້ນໃຫ້ຜູ້ເຂົ້າຮ່ວມນັ່ງເປັນວົງມົນ ແລະ ຖາມຄຳຖາມດັ່ງຕໍ່ໄປນີ້:

- ມີຄວາມຮູ້ສຶກແນວໃດທີ່ໄດ້ຫຼິ້ນເກມດັ່ງກ່າວ?
- ອັນໃດທີ່ຊ່ວຍໃຫ້ຄົນເອົາຕົວລອດໄດ້? (ຄຳຕອບດັ່ງກ່າວລວມມີ, ການສຶກສາ, ເປັນເຈົ້າຂອງທີ່ດິນ, ຮູ້ກົດໝາຍ, ປະຕິເສດທີ່ຈະເອົາເອກະສານໃຫ້ຄົນຜູ້ຄ້າມະນຸດ, ປະຕິເສດທີ່ຈະຂຶ້ນລົດໄປນຳຄົນອື່ນ.)
- ອັນໃດທີ່ເຮັດໃຫ້ຄົນເຮົາມັກຖືກຈັບໄດ້ງ່າຍ? (ຄຳຕອບລວມມີເປັນຄົນອ່ານໜັງສືບໍ່ໄດ້, ຫຼົງເຊື່ອຄົນແປກໜ້າ, ເອົາເອກະສານໃຫ້ຄົນອື່ນ, ຢືມເງິນ, ລໍຖ້າໃຊ້ໜີ້, ເຮັດວຽກລໍຖ້າໃຊ້ໜີ້, ມັກຢູ່ຄົນດຽວ, ເປັນເດັກນ້ອຍ, ເປັນຜູ້ທີ່ທຸກຍາກ).
- ແມ່ນແຕ່ເຈົ້າບໍ່ໄດ້ຕົກຢູ່ໃນອຳນາດການຫຼອກລວງຂອງຜູ້ຄ້າມະນຸດແຕ່ເຈົ້າຍັງຕົກຢູ່ໃນຄວາມທຸກຍາກ, ໃຜຈະເປັນຜູ້ທີ່ຈະຊ່ວຍເຈົ້າ?
- ເຈົ້າຈະຊ່ວຍເຫຼືອເຊິ່ງກັນແລະກັນແນວໃດຖ້າຕົກຢູ່ໃນກໍລະນີນັ້ນ?

## ສະແດງບົດບາດສົມມຸດ

ໃຫ້ຜູ້ເຂົ້າຮ່ວມແບ່ງເປັນກຸ່ມ 8 - 12 ຄົນ. ໃຫ້ແຕ່ລະກຸ່ມກະກຽມການຫຼິ້ນບົດບາດສົ້ມມຸດເປັນຜູ້ຊັກຊວນ. (ຖ້າມີຫຼາຍກ່ວາສອງກຸ່ມ, ເຈົ້າສາມາດໃຊ້ເລື່ອງຂ້າງລຸ່ມນີ້ຫຼິ້ນສອງເທື່ອ.)

**ກຸ່ມທີ 1**. ຕົວລະຄອນຫຼັກຍິງສາວອາຍຸ 15 ປີ ຜູ້ເຊິ່ງມາສະໝັກງານ. ເຈົ້າຂອງໂຮງງານຕ້ອງການຖືເອກະສານຂອງລາວໄວ້.ລາວຈະຫຼີກລ້ຽງແນວໃດເພື່ອບໍ່ໃຫ້ຖືກຫລອກ.

**ກຸ່ມທີ 2**. ເປັນຕົວລະຄອນຫຼັກ, ຜູ້ຊາຍຄົນໜຶ່ງລຸງຂອງລາວບອກກັບລາວວ່າຈະຫາວຽກໃຫ້ລາວທີ່ມີເງິນເດືອນສູງໆຢູ່ຕ່າງປະເທດ,ຄອບຄົວຂອງລາວກໍ່ຕື່ນເຕັ້ນກ່ຽວກັບເງິນເດືອນດັ່ງກ່າວ, ເດັກຊາຍຄົນນັ້ນກໍ່ເກີດຄວາມສົງໃສ, ລາວຈະເຮັດແນວໃດເພື່ອໃຫ້ພໍ່ແມ່ຂອງລາວຮູ້ວ່າເລື່ອງນີ້ເປັນເລື່ອງທີ່ຫລອກລວງ?.



ບອກໃຫ້ແຕ່ລະກຸ່ມກຽມການສະແດງບົດບາດສົມມຸດ 5 ນາທີ ຫຼັງຈາກນັ້ນກໍ່ສະແດງໃຫ້ກັນເບິ່ງ.

### ສະຫຼຸບບົດຮຽນ

ບັນດາຜູ້ຄ້າມະນຸດທັງຫຼາຍມັກໃຊ້ເລ່ກົນດັ່ງລຸ່ມນີ້ເພື່ອເປັນເຄື່ອງມືໃນການດັກຈັບຜູ້ເຄື່ອນຍ້າຍແຮງງານ.

- ບັນດາຜູ້ຄ້າມະນຸດມັກຈະມາຕີສະນິດເປັນເພື່ອນ ແລະ ສະເໜີການຊ່ວຍເຫຼືອ.
- ຜູ້ຄ້າມະນຸດມັກສະເໜີເງິນເດືອນສູງໆ.
- ຜູ້ຄ້າມະນຸດມັກຈະໃຊ້ໜີ້ໃຫ້ຜູ້ເຄື່ອນຍ້າຍແຮງງານ.
- ຜູ້ຄ້າມະນຸດຈ່າຍຄ່າເດີນທາງໃຫ້ຜູ້ເຄື່ອນຍ້າຍແຮງງານ
- ຜູ້ຄ້າມະນຸດມັກໃຫ້ຜູ້ເຄື່ອນຍ້າຍຢືມເງິນ.
- ຜູ້ຄ້າມະນຸດມັກເອົາເອກະສານໄວ້.
- ຜູ້ຄ້າມະນຸດມັກຕົວະຜູ້ເຄື່ອນຍ້າຍແຮງງານໄປທີ່ໂຮງງານ

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈນຳທຸກໆຄົນທີ່ເຂົ້າຮ່ວມໃນມື້ນີ້ ພົບກັນໃນອາທິດໜ້າ, ທຸກໆຄົນໄດ້ຮັບດາວຄົນລະ 1 ດາວໃນມື້ນີ້ ໃຫ້ສຳມະຊິກກຸ່ມຖາມພໍ່ແມ່ຂອງພວກເຂົາວ່າ:

- ພໍ່ແມ່ເອີຍເຈົ້າເຄີຍໄດ້ຍິນບໍວ່າມີຄົນຖືກຄ້າມະນຸດ?
- ຄຳຫລອກລວງແບບໃດທີ່ຜູ້ຄ້າມະນຸດມັກເຄີຍໃຊ້ໃນການຫລອກລວງແຮງງານເຄື່ອນຍ້າຍ?

ບັນດາຄູຝຶກກໍ່ສາມາດບອກໃຫ້ຜູ້ເຂົ້າຮ່ວມຂຽນຄຳຖາມດັ່ງກ່າວຖືເມືອເຮືອນ.

## ເກມຜູ້ຄ້າມະນຸດ 1

ເຈົ້າເປັນ ບີ ມາຈາກປະເທດຈີນນາຍໜ້າຜູ້ໜຶ່ງມາສະເໜີໃຫ້ເຈົ້າເພື່ອໄປແຕ່ງງານກັບຄົນໄຕ້ຫວັນ.

ນາຍໜ້າເປັນຜູ້ຄ້າມະນຸດຄົນໜຶ່ງ, ລາວຕ້ອງການທີ່ຈະຂາຍເຈົ້າເພື່ອເອົາເງິນຄ່າສິນສອດ.

- ຂ້ອຍລອດໄດ້ກໍ່ເພາະວ່າຂ້ອຍໄດ້ໄປຫຼີ້ນນຳຄອບຄົວອື່ນໆຜູ້ທີ່ພວກເຂົາໄດ້ສົ່ງລູກຂອງພວກເຂົາໃຫ້ກັບຊາຍດັ່ງກ່າວ, ພວກເຂົາເວົ້າວ່ານາງບໍ່ໄດ້ໂທລະສັບ ຫຼື ບໍ່ໄດ້ສົ່ງເງິນມາໃຫ້ຄອບຄົວເປັນປີແລ້ວດັ່ງນັ້ນຂ້ອຍຈຶ່ງບໍ່ໄປ.
- ຂ້ອຍລອດໄດ້ກໍ່ເພາະວ່າ, ເມື່ອຊາຍຄົນນັ້ນຖາມເອກະສານນຳຂ້ອຍ, ຂ້ອຍກໍ່ເລີຍປະຕິເສດທີ່ຈະເອົາໃຫ້ເຂົາ.
- ຂ້ອຍຖືກຈັບ ຂ້ອຍຕົກລົງໄປເພາະວ່າຄອບຄົວຂອງຂ້ອຍກົດດັນໃຫ້ຂ້ອຍໄປແຕ່ງງານກັບຄົນຕ່າງປະເທດ.

## ເກມຜູ້ຄ້າມະນຸດ 2

ເຈົ້າເປັນຊາຍໜຸ່ມຜູ້ທີ່ທຸກຍາກ, ອ່ານໜັງສືກໍ່ບໍ່ເປັນ, ມີນາຍໜ້າຄົນໜຶ່ງເຂົ້າມາຫາເຈົ້າ. ຜູ້ເຊິ່ງມາສະເໜີວຽກໃຫ້ເຈົ້າເພື່ອໄປເຮັດວຽກກໍ່ສ້າງທີ່ປະເທດໄທ.

- ຂ້ອຍລອດໄດ້ກໍ່ເພາະວ່າ: ເງິນເດືອນທີ່ລາວສະເໜີນັ້ນສູງໂພດເຮັດໃຫ້ຂ້ອຍສົງໃສ.
- ຂ້ອຍຖືກຈັບກໍ່ເພາະວ່າລາວເອົາເງິນໃຫ້ຄອບຄົວຂອງຂ້ອຍຢືມ 10.000 ບາດ ແລະ ແລ້ວນາຍໜ້າກໍ່ໃຫ້ຂ້ອຍເຮັດວຽກສອງປີໂດຍບໍ່ໄດ້ຮັບຄ່າຈ້າງ. ລາວຕົວະຂ້ອຍ ແລະ ເວົ້າວ່ານີ້ແມ່ນກົດໝາຍ, ລາວອ່ານບໍ່ໄດ້ດັ່ງນັ້ນລາວຈຶ່ງບໍ່ຮູ້.

## ເກມຜູ້ຄ້າມະນຸດ 3

ບີເປັນຍິງສາວຄົນໜຶ່ງ, ທີ່ອາໄສຢູ່ແຂວງໜຶ່ງ, ນາຍໜ້າຜູ້ໜຶ່ງມາສະເໜີທີ່ຈະຊ່ວຍລາວຫາວຽກຄື: ເປັນສາວຮັບໃຊ້ຢູ່ປະເທດອິນໂດເນເຊຍ.

- ຂ້ອຍເອົາຕົວລອດໄດ້ກໍ່ເພາະວ່າຂ້ອຍສາມາດອ່ານໜັງສືໄດ້. ຂ້ອຍຖາມເພື່ອເບິ່ງສັນຍາ, ເມື່ອຂ້ອຍອ່ານເບິ່ງແລ້ວ ຂ້ອຍກໍ່ຮູ້ວ່າສັນຍາດັ່ງກ່າວ ບໍ່ສາມາດໃຫ້ຂ້ອຍອອກເຮືອນນາຍຈ້າງໄດ້ ແລະ ຂ້ອຍກໍ່ຮູ້ວ່າຂ້ອຍຕ້ອງຖືກຫລອກແນ່ນອນ.
- ຂ້ອຍເອົາຕົວລອດໄດ້ກໍ່ເພາະວ່າຂ້ອຍໄປເບິ່ງທີ່ຢູ່ເຊິ່ງນາຍໜ້າເອົາໃຫ້ຂ້ອຍ, ມັນບໍ່ມີຈິງ, ນີ້ຈຶ່ງເຮັດໃຫ້ຂ້ອຍເກີດຂໍ້ສົງໃສ.
- ຂ້ອຍຖືກຈັບກໍ່ເພາະວ່າແມ່ຂອງຂ້ອຍປ່ວຍ ແລະ ຂ້ອຍກໍ່ຕັດສິນໃຈສົ່ງເພື່ອລາວ.



















## ເກມຜູ້ຄ້າມະນຸດ 4

ເຈົ້າເປັນເດັກສາວນ້ອຍຄົນໜຶ່ງທີ່ອ່ານໜັງສືບໍ່ໄດ້ ແລະ ອາໄສຢູ່ຕອນເໜືອຂອງປະເທດໄທ, ເຈົ້າຕັດສິນໃຈໄປຫາເງິນຢູ່ທີ່ກຸງເທບເພື່ອຫາເງິນຊ່ວຍຄອບຄົວ. ເຈົ້າພົບກັບນາຍໜ້າຢູ່ທີ່ລົດເມ.

- ◯ ຂ້ອຍລອດໄດ້ກໍ່ເພາະວ່າຂ້ອຍປະຕິເສດບໍ່ເວົ້າກັບຄົນແປກໜ້າ.
- ◯ ຂ້ອຍຖືກຈັບກໍ່ເພາະວ່າຂ້ອຍໄປກຸງເທບ ແລະ ຂ້ອຍຫຼົງທາງ, ຂ້ອຍບໍ່ຮູ້ໃຜຈັກຄົນ ແລະ ບໍ່ມີເງິນທີ່ຈະເດີນທາງກັບບ້ານ.

## ເກມຜູ້ຄ້າມະນຸດ 5

ເຈົ້າແມ່ນຊາຍໜຸ່ມຜູ້ໜຶ່ງມາຈາກບ້ານແຫ່ງໜຶ່ງຂອງປະເທດພະມ້າ. ເຈົ້າຕັດສິນໃຈໄປປະເທດໄທເພື່ອຊອກຫາວຽກເຮັດຢູ່ໂຮງງານປາກະປ໋ອງ, ເຈົ້າພົບກັບນາຍໜ້າທີ່ຢູ່ທ່າເຮືອ, ຜູ້ເຊິ່ງເວົ້າວ່າຈະພາເຈົ້າໄປທີ່ໂຮງງານ.

- ◯ ເຈົ້າເອົາຕົວລອດໄດ້ກໍ່ເພາະວ່າເຈົ້າເດີນທາງໄປເປັນກຸ່ມ, ເຈົ້າປະຕິເສດທີ່ຈະແຍກຕົວອອກຈາກໝູ່.
- ◯ ເຈົ້າເອົາຕົວລອດໄດ້ ກໍ່ເພາະວ່າເຈົ້າປະຕິເສດທີ່ຈະໄປຂຶ້ນລົດສ່ວນຕົວກັບນາຍໜ້າ. ເຈົ້າຖາມທິດທາງໄປໂຮງງານແທນທີ່ຈະໄປກັບລາວ. ດັ່ງນັ້ນເຈົ້າຈຶ່ງສາມາດເຫັນໂຮງງານດ້ວຍຕົວຂອງເຈົ້າເອງ.
- ◯ ເຈົ້າຕົກລົງທີ່ຈະເຮັດວຽກແຕ່ວ່າເຈົ້າຖືກຫຼອກໄປເຮັດວຽກທີ່ເຮືອຫາປາແທນ

## ເກມຜູ້ຄ້າມະນຸດ 6

ເຈົ້າມາຈາກຄອບຄົວທຸກຍາກຄອບຄົວໜຶ່ງ, ພໍ່ຂອງເຈົ້າເປັນຄົນທີ່ດື່ມເຫຼົ້າຫຼາຍ ແລະ ລາວກໍ່ໄດ້ຕີແມ່ຂອງເຈົ້າທຸກໆວັນ. ເຈົ້າບໍ່ເຄີຍເຂົ້າໂຮງຮຽນຈັກເທື່ອ, ມີຜູ້ຄ້າມະນຸດຄົນໜຶ່ງມາເອົາເງິນໃຫ້ພໍ່ຂອງເຈົ້າເພື່ອຂາຍເຈົ້າໃຫ້ຮ້ານບໍລິການ.

- ◯ ເຈົ້າບໍ່ສາມາດລອດໄດ້ເພາະເຈົ້າບໍ່ມີເງິນ, ບໍ່ມີອຳນາດ ແລະ ບໍ່ມີການສຶກສາ.

## ເກມຜູ້ຄ້າມະນຸດ 7

ເຈົ້າເປັນຄົນຮຽນຈົບມະຫາວິທະຍາໄລແຫ່ງໜຶ່ງ. ມີນາຍໜ້າເຂົ້າມາຫາເຈົ້າເພື່ອສະເໜີວຽກໃຫ້ເຈົ້າໄປເຮັດວຽກໂຮງງານທີ່ປະເທດມາເລເຊຍ.

- ◯ ເຈົ້າເອົາຕົວລອດໄດ້ກໍ່ເພາະວ່າເຈົ້າເບິ່ງຂໍ້ມູນໂຮງານຈາກອິນເຕີເນັດ ແລະ ກໍ່ພົບວ່າມັນບໍ່ມີຈິງ.
- ◯ ເຈົ້າເອົາຕົວລອດໄດ້ກໍ່ເພາະວ່າຄອບຄົວຂອງເຈົ້າຈະຊ່ວຍເຈົ້າຊອກວຽກເຮັດງານທຳ.
- ◯ ເຈົ້າຈະເອົາຕົວລອດຢູ່ສະເໝີເພາະວ່າເຈົ້າເກີດຢູ່ໃນຄອບຄົວທີ່ມີຖານະ ແລະ ເຈົ້າບໍ່ໄດ້ເຄີຍອອກຈາກຄອບຄົວເພື່ອໄປທຳງານທີ່ສ່ຽງໄພຈັກເທື່ອ.

## ເກມຜູ້ຄ້າມະນຸດ 8

ເຈົ້າເປັນເດັກຊາຍຜູ້ທີ່ທຸກຍາກຄົນໜຶ່ງຈາກປະເທດພະມ້າ, ພໍ່ຂອງເຈົ້າໄດຢືມເງິນຈາກເພື່ອນບ້ານເປັນເວລາ 10 ປີ ເພື່ອໄປຈ່າຍຄ່າປິ່ນປົວ, ລາວບໍ່ມີຄວາມສາມາດທີ່ຈະຈ່າຍຄືນເງິນດັ່ງກ່າວ, ຜູ້ຄ້າມະນຸດຄົນໜຶ່ງຕ້ອງການຢາກໃຫ້ເຈົ້າໄປເຮັດວຽກທີ່ໂຮງງານຜະລິດດິນຈີ່. ໂດຍບໍ່ໄດ້ຮັບຄ່າຈ້າງຫຍັງເລີຍ, ເພື່ອເປັນການໃຊ້ໜີ້ແທນພໍ່ຂອງເຈົ້າ.

- ◯ ເຈົ້າບໍ່ສາມາດເອົາຕົວລອດໄດ້ເພາະເຈົ້າບໍ່ມີເງິນ, ບໍ່ມີອຳນາດ, ບໍ່ມີທາງເລືອກ, ບໍ່ມີການສຶກສາ.

## ເກມຜູ້ຄ້າມະນຸດ 9

ເຈົ້າເປັນເດັກຍິງຄົນໜຶ່ງມີອາຍຸ 16 ປີ ເຊິ່ງວ່າເຈົ້າໄດ້ຖືກສົ່ງເຂົ້າມາອາໄສຢູ່ໃນເມືອງກັບຄອບຄົວທີ່ຮັ່ງມີຄອບຄົວໜຶ່ງ ດັ່ງນັ້ນ ເຈົ້າຈຶ່ງສາມາດໄປເຂົ້າໂຮງຮຽນປະຖົມໄດ້. ເຈົ້າກໍ່ໄດ້ຕົກລົງເຮັດວຽກເປັນການອະນາໄມເຮືອນ ແລະ ເຈົ້າກໍ່ອາໄສຢູ່ທີ່ນັ້ນເລີຍ, ໃນຄ່ຳຄືນໜຶ່ງຊາຍເຈົ້າຂອງເຮືອນນັ້ນໄດ້ມາບອກກັບເຈົ້າວ່າ: ເຈົ້າຕ້ອງມີເພດສຳພັນກັບຂ້ອຍ ຂ້ອຍຈຶ່ງຈະອະນຸຍາດໃຫ້ເຈົ້າຢູ່.

- ◯ ເຈົ້າລອດໄດ້ຖ້າເຈົ້າຮ້ອງຂຶ້ນແຮງໆ ແລະ ເຈົ້າຂອງເຮືອນກໍ່ຢ້ານເມຍຂອງລາວໄດ້ຍິນ,ລາວຈຶ່ງຢຸດ.
- ◯ ເຈົ້າລອດໄດ້ກໍ່ເພາະວ່າເມື່ອເຈົ້າຈາກບ້ານໄປໂດຍການຖືເງິນພຽງພໍທີ່ຈະຈ້າງລົດກັບບ້ານ ແລະ ກໍ່ຮູ້ທາງເມືອບ້ານ ແລະ ເຈົ້າກໍ່ຍັງຮູ້ເບີຕິດຕໍ່ຂອງເພື່ອນບ້ານ, ຜູ້ທີ່ເຊົາເຄີຍໂທ, ດັ່ງນັ້ນໃນເຊົ້າມື້ຕໍ່ມາເຈົ້າກໍ່ໄດ້ໂທຫາພໍ່ແມ່ ແລະ ກໍ່ກັບເມື່ອບ້ານ.

## ເກມຜູ້ຄ້າມະນຸດ 10

ຫຼິ້ນລະຄອນສ້າງຂຶ້ນເອງ





# ບົດທີ 10: ສົນທິສັນຍາວ່າດ້ວຍສິດທິເດັກ 10

**ຈຸດປະສົງ: ຜູ້ເຂົ້າຮ່ວມຈະເຂົ້າໃຈສິດທິຂອງເດັກພາຍໃຕ້ກົດໝາຍ ແລະ ສາມາດນຳໃຊ້ເຂົ້າໃນຊີວິດປະຈຳວັນຂອງພວກເຂົາ.**

**ເວລາ:**

75 ນາທີ

**ອຸປະກອນ**

- ❖ ເຈ້ຍແຜ່ນໃຫຍ່ 8–10
- ❖ ພ້ອມທັງສໍສີ.

## ການແນະນຳ:

**ຍິນດີຕ້ອນຮັບ:**

ຍິນດີຕ້ອນຮັບໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ ແລະ ໃຫ້ຜູ້ເຂົ້າຮ່ວມເຊັນລົງທະບຽນ.

**ອົບອຸ່ນຮ່າງກາຍ:**

ໃຫ້ຄູຝຶກເດັກເລືອກເອົາເກມຈາກລາຍການ.

**ທວນຄືນບົດຮຽນ:**

ຖາມຜູ້ເຂົ້າຮ່ວມວ່າ: ມີໃຜໄດ້ຖາມພໍ່ແມ່ຂອງພວກເຂົາວ່າການຄ້າມະນຸດແມ່ນຫຍັງ?

ພໍ່ແມ່ຂອງພວກເຈົ້າຮູ້ບໍ່ວ່າກົນອຸບາຍຂອງຜູ້ຄ້າມະນຸດແນວໃດ?

## ສິດທິເດັກ:

**ສົນທິສັນຍາວ່າດ້ວຍສິດທິເດັກ (CRC).**

ຈົ່ງອະທິບາຍວ່າບົດຮຽນດັ່ງກ່າວນີ້ຈະໄດ້ກ່າວເຖິງກ່ຽວກັບສິດທິຂອງເດັກນ້ອຍ. ຖາມຜູ້ເຂົ້າຮ່ວມວ່າພວກເຂົາຮູ້ຫຍັງແດ່ກ່ຽວກັບສິດທິດັ່ງກ່າວ ແລະ ຖ້າພວກເຂົາຮູ້, ກໍ່ໃຫ້ພວກເຂົາເລົ່າສູ່ກຸ່ມຟັງ.

ຕະຫຼອດ 20 ປີທີ່ຜ່ານມາ ສປຊUN ໄດ້ສ້າງສົນທິສັນຍາວ່າດ້ວຍສິດທິເດັກ CRC (ສົນທິສັນຍາວ່າດ້ວຍສິດທິເດັກ) ສສດ ແມ່ນຂໍ້ຕົກລົງສະບັບໜຶ່ງຂອງບັນດາປະເທດຕ່າງໆ. ເຊິ່ງວ່າປະເທດເຫລົ່ານັ້ນໄດ້ຕົກລົງເຫັນດີກັນເພື່ອປະຕິບັດຕາມກົດໝາຍສະບັບອັນດຽວກັນກ່ຽວກັບສິດທິຂອງເດັກທົ່ວໂລກ.

ບອກໃຫ້ຜູ້ເຂົ້າຮ່ວມທັງໝົດຮູ້ເຖິງສິດທິຕ່າງໆຂອງເດັກທີ່ມີອາຍຸຕ່ຳກວ່າ 18 ປີ ນັ້ນຄວນຈະມີມີສິດຫຍັງແດ່. ມີຫຼາຍປະເທດທີ່ໄດ້ລົງລາຍເຊັນຢູ່ໃນ ສສດ ຫຼາຍກວ່າສົນທິສັນຍາ ສປຊ ອື່ນໆໃນໂລກ. ອະທິບາຍວ່າປະເທດຂອງພວກເຂົາກໍ່ໄດ້ເຊັນສັນຍາຄືກັນ ເຊິ່ງໝາຍຄວາມວ່າພວກເຂົາໄດ້ຕົກລົງ. ບັນດາເດັກນ້ອຍໃນປະເທດຂອງພວກເຂົາຄວນຈະໄດ້ຮັບສິດທີ່ໄດ້ກ່າວໄວ້ໃນສົນທິສັນຍາດັ່ງກ່າວ.



ໃນມາດຕາ 54 ຂອງ ສສດ ໄດ້ກ່າວເຖິງສິດທິທີ່ແຕກຕ່າງກັນເຊິ່ງວ່າເດັກຄວນຈະມີ ເພາະວ່າມີຫຼາຍຢ່າງທີ່ໄດ້ອະທິບາຍກ່ຽວກັບສິດທິເດັກ, ພວກເຂົາກໍ່ໄດ້ນຳເອົາສິດທິດັ່ງກ່າວມາລວມເຂົ້າເປັນ 4 ກຸ່ມ ຫຼື ຮຽກວ່າ (ສິດທິຂັ້ນພື້ນຖານຂອງເດັກ), ເພື່ອໃຫ້ຈື່ງ່າຍຂຶ້ນ. ຈົ່ງຂຽນຊື່ຂອງ 4 ສິດທິຂັ້ນພື້ນຖານໃສ່ 4 ວົງມົນຢູ່ທີ່ເຈ້ຍແຜ່ນໃຫຍ່ຂໍ້ຄວາມດັ່ງກ່າວປະກອບມີ:

**ສິດທິໃນການຢູ່ລອດ.**

ສິດທິດັ່ງກ່າວນີ້ປະກອບມີ: ສິດທິໃນການກິນໃຫ້ພຽງພໍ,ສິດທິທີ່ຈະໄດ້ຮັບການດູແລດ້ານສຸຂະພາບ, ສິດທິທີ່ຈະມີທີ່ຢູ່ອັນຖາວອນ, ສິດທິທີ່ຈະມີຊື່ ແລະ ສັນຊາດທີ່ຖືກຕ້ອງຕາມກົດໝາຍ.

**ສິດທິທີ່ຈະໄດ້ຮັບການປົກປ້ອງ.**

ສິດດັ່ງກ່າວປະກອບມີ: ສິດທິຈະໄດ້ຮັບການປົກປ້ອງຈາກການທາລຸນທາງກາຍ ແລະ ຈິດໃຈ ສິດທິທີ່ຈະໄດ້ຮັບການປົກປ້ອງຈາກການຖືກປະລະ ແລະ ການຖືກຂູດຮີດ, ສິດທິທີ່ຈະໄດ້ຮັບການປົກປ້ອງຈາກການທາລຸນທາງເພດ, ສິດທິທີ່ຈະໄດ້ຮັບການປົກປ້ອງຈາກການຂູດຮີດແຮງງານ ແລະ ຢາເສບຕິດ.

**ສິດທິທີ່ຈະໄດ້ຮັບການພັດທະນາ:**

ເຊິ່ງປະກອບມີສິດທິທີ່ຈະໄດ້ຫຼິ້ນກັບໝູ່ເພື່ອນ, ສິດທິທີ່ຈະໄດ້ຮັບການສຶກສາ ແລະ ສິດທິທີ່ຈະໄດ້ຮັບຄວາມອົບອຸ່ນຈາກພໍ່ແມ່.

**ສິດທິໃນການປະກອບສ່ວນ:**

ບອກໃຫ້ຜູ້ເຂົ້າຮ່ວມຮູ້ອີກວ່າສິດດັ່ງກ່າວປະກອບມີ: ສິດທິໃນການສະແດງຄວາມຄິດເຫັນ ແລະ ເວົ້າອອກມາ, ສິດທີ່ຈະໄດ້ຮັບຟັງ, ສິດທີ່ຈະໄດ້ຮັບຂໍ້ມູນຂ່າວສານອັນຖືກຕ້ອງເຊິ່ງວ່າຂໍ້ມູນດັ່ງກ່າວຈະບໍ່ເປັນຜົນອັນຕະລາຍຕໍ່ພວກເຂົາ ແລະ ກໍ່ຍັງມີສິດຕື່ມອີກວ່າ, ສິດທິໃນການມາຮ່ວມກຸ່ມ (ຄືທີ່ເຮົາໄດ້ມາຮ່ວມສະໂມສອນເດັກ) ແລະ ສິດທີ່ຈະມາພົບກັບບັນດາເພື່ອນໆ.

## ການແຕ້ມຮູບ

ໃຫ້ແບ່ງກຸ່ມໆລະ 4-5 ຄົນ ເພື່ອແຕ້ມຮູບພາບຂອງຊຸມຊົນພວກເຂົາໃສ່ເຈ້ຍແຜ່ນໃຫຍ່. ບອກໃຫ້ຜູ້ເຂົ້າຮ່ວມວ່ານີ້ບໍ່ແມ່ນການຝຶກທັກສະໃນການແຕ້ມຮູບ. ມັນເປັນພຽງແຕ່ປະກອບຄຳຄິດເຫັນເທົ່ານັ້ນ, ໃຫ້ຜູ້ເຂົ້າຮ່ວມແຕ້ມແຜນທີ່ກ່ຽວກັບຊີວິດຂອງເດັກນ້ອຍໃນຊຸມຊົນ ແລະ ແຕ້ມສະຖານທີ່ຕ່າງໆບ່ອນທີ່ເດັກນ້ອຍໄດ້ຮັບສິດ ຫຼື ບໍ່ໄດ້ຮັບສິດທິ ຕົວຢ່າງ: ເດັກນ້ອຍມີສິດໃນການຮັບປະທານອາຫານເຊົ້າກໍ່ແມ່ນສິດທິອັນໜຶ່ງ, ເດັກນ້ອຍຜູ້ທີ່ຂາດອາຫານ, ສິ່ງດັ່ງກ່າວນີ້ແມ່ນການບໍ່ໄດ້ເຂົ້າເຖິງສິດທິຂອງພວກເຂົາ.

ໃນລະຫວ່າງທີ່ພວກເຂົາກຳລັງແຕ້ມຢູ່, ໃຫ້ຄູຝຶກຍ່າງສຳຫຼວດເບິ່ງ ແລະ ບອກໃຫ້ພວກເຂົາແຕ້ມສິ່ງຕ່າງໆທີ່ກະທົບຕໍ່ເດັກນ້ອຍ:

- ກະທົບຕໍ່ສຸຂະພາບ
- ຄວາມສາມາດໃນການໄປໂຮງຮຽນ
- ກະທົບຕໍ່ວຽກງານ

- ຄວາມຮຸນແຮງ
- ຄວາມສະໜຸກສະໜານ
- ຄວາມສາມາດໃນການເວົ້າອອກມາ.

## ກິດຈະກຳ

ເມື່ອພວກເຂົາແຕ້ມສຳເລັດແລ້ວ ໃຫ້ຜູ້ເຂົ້າຮ່ວມທັງໝົດມາລວມກັນ. ຂີດເສັ້ນເຄິ່ງກາງເຈ້ຍແຜ່ນໃຫຍ່ຂ້າງໜຶ່ງໃຫ້ຂຽນກ່ຽວກັບເດັກນ້ອຍມີຄວາມສາມາດເຂົ້າເຖິງສິດຂອງພວກເຂົາ ແລະ ອີກຂ້າງໜຶ່ງໃຫ້ຂຽນວ່າເດັກນ້ອຍບໍ່ສາມາດເຂົ້າເຖິງສິດຂອງພວກເຂົາ, ໃຫ້ຜູ້ເຂົ້າຮ່ວມຍົກຕົວຢ່າງຈາກຮູບພາບຕ່າງໆທີ່ພວກເຂົາແຕ້ມນັ້ນມາຂຽນໃສ່ທັງສອງຂ້າງ ເມື່ອພວກເຂົາຂຽນສຳເລັດແລ້ວກໍ່ໃຫ້ຕື່ມຂໍ້ຄວາມດັ່ງກ່າວ, ທີ່ຍັງບໍ່ໄດ້ກ່າວເຖິງ.

| ເດັກສາມາດເຂົ້າເຖິງສິດ | ເດັກບໍ່ສາມາດເຂົ້າເຖິງສິດ |
|---|---|
| ເດັກນ້ອຍໄດ້ເຂົ້າໂຮງຮຽນ | ເດັກບໍ່ໄດ້ເຂົ້າໂຮງຮຽນ |
| ເດັກນ້ອຍມີສິດໄດ້ຮັບການຮັກສາສຸຂະພາບ | ເດັກບໍ່ໄດ້ຮັບການດູແລຮັກສາສຸຂະພາບ. |
| ເດັກໄດ້ຮັບອະນຸຍາດໃຫ້ປະກອບຄຳຄິດເຫັນ | ເດັກບໍ່ໄດ້ຮັບອະນຸຍາດໃຫ້ປະກອບຄຳຄິດເຫັນ. |
| ເດັກໄດ້ຮັບອາຫານການກິນທີ່ພຽງພໍ. | ເດັກບໍ່ໄດ້ກິນອາຫານພຽງພໍ. |
| ເດັກມີສິດທິທີ່ຈະໄດ້ຫຼິ້ນກັບໝູ່ເພື່ອນ | ເດັກບໍ່ໄດ້ຖືກອະນຸຍາດຫຼິ້ນກັບໝູ່ເພື່ອນ |
| ເດັກມີໃບຢັ້ງຢືນການເກີດ | ເດັກບໍ່ມີໃບຢັ້ງຢືນການເກີດ |
| ເດັກມີເອກະສານຢັ້ງຢືນສັນຊາດ | ເດັກບໍ່ມີເອກະສານຢັ້ງຢືນສັນຊາດ |
| ເດັກມີສິດເວົ້າພາສາຂອງຕົນເອງ | ເດັກບໍ່ມີສິດເວົ້າພາສາຂອງຕົນເອງ |
| ເດັກມີສິດເວົ້າພາສາຂອງຕົນເອງ | ເດັກບໍ່ມີສິດເລືອກສາດສະໜາຂອງຕົນເອງ |
| ເດັກມີສິດທີ່ຈະໄດ້ຮັບຂໍ້ມູນຂ່າວສານອັນແທ້ຈິງ. | ເດັກບໍ່ມີສິດທີ່ຈະໄດ້ຮັບຂໍ້ມູນຂ່າວສານອັນແທ້ຈິງ. |
| ເດັກມີສິດທີ່ຈະໄດ້ຮັບການປົກປ້ອງຈາກການຂູດຮີດທາງເພດ. | ເດັກເສບຢາ ຫຼື ເດັກດື່ມເຫຼົ້າຫຼາຍ.<br>ເດັກຖືກທຸບຕີຈາກຄົນອື່ນ.<br>ເດັກທີ່ເຮັດວຽກຫຍຸ້ງຍາກສັບສົນ.<br>ເດັກຖືກຂູດຮີດທາງເພດ<br>ເດັກເຮັດວຽກຢູ່ຮ້ານຂາຍບໍລິການ. |

## ການສົນທະນາ

ບັດນີ້ໃຫ້ຜູ້ເຂົ້າຮ່ວມຄິດກ່ຽວກັບເດັກຊາຍອາຍຸ 16 ປີ ຜູ້ທີ່ຖືກຂາຍໃຫ້ເຮືອຫາປາ. ລາວເຮັດວຽກເປັນເວລາຫຼາຍຊົ່ວໂມງ ແລະ ບໍ່ສາມາດໜີອອກຈາກເຮືອດັ່ງກ່າວ, ໃຫ້ຜູ້ເຂົ້າຮ່ວມອ່ານລາຍການຢູ່ທີ່ເບື້ອງຊ້າຍມືທີ່ຂຽນວ່າ: ເດັກນ້ອຍສາມາດມີສິດດັ່ງກ່າວ ແລະ ໃຫ້ຂຽນໂຕ ( X ) **ໃສ່ສິດທິຕ່າງໆທີ່ເດັກຊາຍດັ່ງກ່າວບໍ່ໄດ້ຮັບສິດທິນັ້ນ.**



ໃຫ້ຜູ້ເຂົ້າຮ່ວມຄິດກ່ຽວກັບເດັກຍິງອາຍຸ 11 ປີ ທີ່ເຮັດວຽກເປັນຄົນໃຊ້ຢູ່ໃນບ້ານ. ລາວບໍ່ມີເອກະສານຢັ້ງຢືນສັນຊາດເພາະວ່າພໍ່ແມ່ຂອງລາວເປັນແຮງງານເຄື່ອນຍ້າຍມາຈາກປະເທດອື່ນ ແລະ ລາວບໍ່ໄດ້ຖືກຈົດທະບຽນຢັ້ງຢືນການເກີດຕອນເວລາທີ່ລາວເກີດ. ລາວເຮັດວຽກໃຫ້ຄອບຄົວດັ່ງກ່າວໂດຍບໍ່ໄດ້ຮັບຄ່າຈ້າງ. ອີກເທື່ອໜຶ່ງໃຫ້ອ່ານທີ່ລາຍການເດັກໄດ້ຮັບສິດທິຕ່າງໆ ແລະ ໃຫ້ໝາຍໂຕ ( X ) **ໃສ່ສິດທິທີ່ລາວບໍ່ໄດ້ຮັບ.**

ບັນດາເດັກນ້ອຍຜູ້ທີ່ຖືກຂາຍນັ້ນ, ບໍ່ສາມາດເຂົ້າເຖິງສິດທິຂອງພວກເຂົາ. ໃນເວລາດຽວກັນເດັກຜູ້ເຊິ່ງບໍ່ມີສິດເຂົ້າເຖິງສິດທິຂອງພວກເຂົາແມ່ນຈະຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດຫຼາຍກວ່າ. ໃຫ້ຖາມບັນດາສະມະຊິກໃນກຸ່ມ:

**ເດັກຜູ້ທີ່ບໍ່ໄດ້ໄປໂຮງຮຽນມີໂອກາດທີ່ຈະຖືກຄ້າມະນຸດບໍ?**

ອະນຸຍາດໃຫ້ຜູ້ເຂົ້າຮ່ວມສະແດງຄຳຕອບຂອງຕົນເອງ ແລ້ວກໍ່ໃຫ້ອະທິບາຍໂຕທີ່ພວກເຂົາບໍ່ໄດ້ກ່າວເຖິງ: ເຈົ້າແມ່ນແລ້ວ, ນີ້ກໍ່ເພາະວ່າ :

- ຜູ້ທີ່ໄດ້ຮັບການສຶກສາ ສາມາດຊອກວຽກເຮັດງານທຳໄດ້ດີກວ່າຜູ້ທີ່ບໍ່ມີການສຶກສາ.
- ມີຄວາມສາມາດໃນການອ່ານສັນຍາແຮງງານອາດເປັນສິ່ງໜຶ່ງໃຫ້ເຈົ້າຢຸດຕິການເຊັນສັນຍາທີ່ຫລອກລວງ.
- ຄົນຜູ້ທີ່ໄດ້ຮັບການສຶກສາສູງຍິ່ງຮູ້ທັນສະພາບການຂອງໂລກ.

**ເດັກນ້ອຍຜູ້ທີ່ບໍ່ມີໃບຢັ້ງຢືນສັນຊາດມີຄວາມສ່ຽງຕໍ່ການຄ້າມະນຸດບໍ?**

ເຈົ້າແມ່ນແລ້ວ, ນີ້ກໍ່ເພາະວ່າ:

- ຖ້າເຈົ້າບໍ່ມີເອກະສານຢັ້ງຢືນສັນຊາດ ມີຫຼາຍວຽກງານທີ່ເຈົ້າບໍ່ສາມາດສະໝັກໄດ້ເພາະວ່າເຈົ້າບໍ່ມີເອກະສານທີ່ອະນຸຍາດຈາກລັດຖະບານ.
- ເຈົ້າບໍ່ມີເອກະສານຢັ້ງຢືນສັນຊາດ, ເຈົ້າອາດມີຄວາມຮູ້ສຶກຢ້ານທີ່ຈະໄປພົບກັບຕຳຫຼວດໃນເມື່ອຫາກເຈົ້າພົບກັບບັນຫາ.

**ເດັກນ້ອຍຜູ້ທີ່ບໍ່ສາມາດເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານມີຄວາມສ່ຽງຕໍ່ການຖືກຄ້າມະນຸດບໍ?**

ເຈົ້າແມ່ນແລ້ວ, ນີ້ກໍ່ເພາະວ່າ:

- ເຈົ້າມີຄວາມຮູ້ຫຼາຍເທົ່າໃດຍິ່ງເຮັດໃຫ້ເຈົ້າມີວຽກງານທີ່ປອດໄພຫຼາຍເທົ່ານັ້ນ ການເຄື່ອນຍ້າຍແຮງງານທີ່ປອດໄພ ແລະ ກົນອຸບາຍຂອງຜູ້ຄ້າມະນຸດສິ່ງດັ່ງກ່າວກໍ່ສາມາດປົກປ້ອງຕົວເຈົ້າເອງໄດ້.

ຫຼັງຈາກທີ່ພວກເຂົາຫາກຖາມກັນຮຽບຮ້ອຍແລ້ວ ກໍ່ໃຫ້ມານັ່ງເປັນກຸ່ມເພື່ອທີ່ຈະພິຈາລະນາກ່ຽວກັບຄຳຖາມດັ່ງຕໍ່ໄປນີ້. ຖາມມີການໂຕ້ວາທີກັນຢູ່ໃນກຸ່ມກໍ່ຢາກໃຫ້ທຸກຄົນສະແດງຄວາມຄິດເຫັນຂອງຕົນ ແລະ ກໍ່ຮັບຟັງຄຳຄິດເຫັນຂອງຄົນອື່ນ.

- ການຊ່ວຍເຫຼືອແບບໃດແນ່ທີ່ວ່າເດັກສາມາດຮັບຮູ້ສິດທິຂອງພວກເຂົາ?
- ສິ່ງໃດແດ່ທີ່ເຮັດໃຫ້ເດັກນ້ອຍບໍ່ໄດ້ຮັບສິດຂອງພວກເຂົາ? ຄວາມທຸກຍາກບໍ? ພໍ່ແມ່ຂອງພວກເຂົາບໍ? ແລະ ການຖືກຈຳແນກບໍ? ທີ່ກະທົບໃສ່ພວກເຂົາ?

- ເດັກນ້ອຍຜູ້ທີ່ມາຈາກຄອບຄົວຮັ່ງມີສາມາດເຂົ້າເຖິງສິດທິກວ່າເດັກຜູ້ທີ່ທຸກຍາກບໍ? ຍ້ອນຫຍັງ?
- ບັນດາເດັກຜູ້ຊາຍສາມາດເຂົ້າເຖິງສິດທິຫຼາຍກວ່າບັນດາເດັກຍິງບໍ?

**CRC ສສດ ແລະ ກົດໝາຍ.**

ໃນຕອນທ້າຍຂອງບົດຮຽນສະບັບນີ້ ໃຫ້ອະທິບາຍກ່ຽວກັບສິ່ງທີ່ໄດ້ເວົ້າໃນເບື້ອງຕົ້ນຂອງແຕ່ລະປະເທດທີ່ໄດ້ເຊັນກ່ຽວກັບ ສົນທິສັນຍາວ່າດ້ວຍສິດທິເດັກ ແລະ ການຕົກລົງທີ່ເປັນການຕົກລົງໃນການຍົກສູງສິດທິເດັກນ້ອຍ. ອະທິບາຍຕື່ມອີກວ່າມີເດັກນ້ອຍຫຼາຍຄົນຢູ່ໃນຊຸມຊົນຂອງພວກເຂົາທີ່ຍັງຖືກປະຕິເສດກ່ຽວກັບສິດທິຕ່າງໆໃນສົນທິສັນຍາວ່າດ້ວຍສິດທິເດັກ. ກົດໝາຍດັ່ງກ່າວຈະໄດ້ສົນທະນາເຖິງເລື່ອງນີ້ສະເພາະໃນບົດຮຽນຕໍ່ໄປ, ແຕ່ວ່າມັນເປັນສິ່ງສໍາຄັນຫຼາຍທີ່ຈະຈື່ໄວ້, ນີ້ກໍ່ເພາະວ່າມັນເປັນສິ່ງໜຶ່ງທີ່ຢູ່ໃນກົດໝາຍຂອງສາກົນ, ກໍ່ບໍ່ໄດ້ໝາຍຄວາມວ່າເປັນການບັງຄັບ ຫຼື ປະຕິບັດຕາມຕະຫຼອດເວລາ.

## ສະຫຼຸບບົດຮຽນ

- CRC ສົນທິສັນຍາວ່າດ້ວຍສິດທິເດັກ ກໍ່ແມ່ນເອກະສານສາກົນສະບັບໜຶ່ງທີ່ຂຽນເຖິງກ່ຽວກັບສິດທິຕ່າງໆຂອງເດັກນ້ອຍທີ່ພວກເຂົາຄວນຈະໄດ້ຮັບ.
- ມີສີ່ໝວດຂອງສິດທິຂັ້ນພື້ນຖານທີ່ກ່າວໃນສົນທິສັນຍາວ່າດ້ວຍສິດທິເດັກ ສິດທິດັ່ງກ່າວແມ່ນ.
  - ສິດທິທີ່ຈະໄດ້ຮັບການປົກປ້ອງ
  - ສິດທິທີ່ຈະໄດ້ຮັບການພັດທະນາ
  - ສິດທິທີ່ຈະໄດ້ຮັບການຢູ່ລອດ
  - ສິດທິທີ່ຈະໄດ້ຮັບການມີສ່ວນຮ່ວມ.
- ເມື່ອເດັກນ້ອຍຫາກຖືກຂາຍແລ້ວພວກເຂົາບໍ່ສາມາດເຂົ້າເຖິງສິດທິຂອງພວກເຂົາ.
- ເມື່ອເດັກນ້ອຍບໍ່ສາມາດເຂົ້າເຖິງສິດທິຂອງພວກເຂົາ, ພວກເຂົາມີໂອກາດທີ່ຈະຖືກຫລອກ, ຖືກຄ້າມະນຸດ.
- ມີເດັກນ້ອຍຫຼາຍຄົນຢູ່ໃນປະເທດເຮົາ ແລະ ຢູ່ໃນໂລກທີ່ຍັງບໍ່ໄດ້ຮັບສິດທິຂອງພວກເຂົາທີ່ກ່າວໄວ້ໃນ CRC ສົນທິສັນຍາວ່າດ້ວຍສິດທິເດັກ.

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ມື້ນີ້ບໍ່ມີການສະແດງບົດບາດສົມມຸດ ແລະ ບໍ່ມີການບັນທຶກເພາະວ່າເຮົາໄດ້ຮັບຮູ້ຂໍ້ມູນຫຼາຍຢ່າງໃນ CRC ສົນທິສັນຍາວ່າດ້ວຍສິດທິເດັກ..

ຂອບໃຈທຸກຄົນທີ່ມາຮ່ວມພົບກັນໃນອາທິດຕໍ່ໄປ ທຸກຄົນທີ່ມາຮ່ວມແມ່ນໄດ້ຮັບດາວຄົນລະ 1 ດາວ.

ໃຫ້ຜູ້ເຂົ້າຮ່ວມສັງເກດເບິ່ງສະຖານທີ່ຢູ່ໃນຊຸມຊົນຂອງຕົນເອງ ວ່າເດັກນ້ອຍມີຄວາມສາມາດເຂົ້າເຖິງສິດຂອງພວກເຂົາ ຫຼື ວ່າເດັກນ້ອຍຍັງຖືກປະຕິເສດຈາກສິດທິຂອງພວກເຂົາ.

ບັນດາຄູຝຶກສາມາດບອກຜູ້ເຂົ້າຮ່ວມຂຽນຄໍາຖາມດັ່ງກ່າວໃສ່ເຈ້ຍແຜ່ນໃຫຍ່ເພື່ອເຕືອນຄວາມຊົງຈໍາ ແລະ ຖືເມືອເຮືອນ.



# 11 ບົດທີ 11: ກົດໝາຍສະກັດກັ້ນການຄ້າມະນຸດ ແລະ ສິດທິຂອງເດັກ

**ຈຸດປະສົງ: ຜູ້ເຂົ້າຮ່ວມຈະໄດ້ເຂົ້າໃຈກ່ຽວກັບກົດໝາຍ ແລະ ສາມາດເຂົ້າເຖິງຂະບວນການຍຸດຕິທໍາພາຍໃຕ້ກອບຂອງກົດໝາຍ.**

### ເວລາ:

75 ນາທີ

### ອຸປະກອນ

- ❖ ປຶ້ມນ້ອຍຜູ້ນ້ອຍຜູ້ນໍາທີ່ສະຫຼາດ
- ❖ ສໍາເນົາເອກະສານ 11 ຂ: ໃຫ້ພຽງພໍ: ພາຍຫຼັງທີ່ໄດ້ຮຽນຮູ້ເລື່ອງການຄ້າມະນຸດສໍາລັບຜູ້ເຂົ້າຮ່ວມແຕ່ລະຄົນ.

### ການແນະນໍາ:

**ຍິນດີຕ້ອນຮັບ:**

ໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ.

**ອົບອຸ່ນຮ່າງກາຍ:**

ໂດຍການນໍາໃຊ້ເກມຈາກລາຍການ.

**ທວນຄືນບົດຮຽນ:**

ໃຫ້ຖາມຜູ້ເຂົ້າຮ່ວມທັງໝົດວ່າ ມີໃຜໄດ້ສັງເກດເຫັນແດ່ວ່າໃນຊຸມຊົນຂອງພວກເຮົານັ້ນເຊິ່ງວ່າເດັກນ້ອຍທີ່ສາມາດເຂົ້າເຖິງສິດທິຂອງພວກເຂົາ ຫຼື ເດັກນ້ອຍຖືກປະຕິເສດຈາກສິດທິຂອງພວກເຂົາໃຫ້ເຈົ້າອະທິບາຍໄດ້ບໍ່?

ພວກເຮົາສາມາດຊ່ວຍໃຫ້ເດັກນ້ອຍເຂົ້າເຖິງສິດທິຂອງພວກເຂົາໄດ້ບໍໃນອານາຄົດ? ຖ້າໄດ້ເຮັດແນວໃດ?

### ການສົນທະນາ:

ອະທິບາຍຕື່ມອີກວ່າ ມີຫຼາຍຊາດທີ່ມີກົດໝາຍເຫຼົ່ານີ້ເຊິ່ງນໍາໃຊ້ເຂົ້າໃນການປົກຄອງສິ່ງທີ່ເກີດຂຶ້ນພາຍໃນຊາດນັ້ນ

ມີຫຼາຍຊາດຍັງໄດ້ເຊັນສັນຍາຂໍ້ຕົກລົງສາກົນທີ່ມີການນໍາໃຊ້ຢູ່ໃນຫຼາຍປະເທດ. ໃນເມື່ອໄດ້ມີການເຊັນສັນຍາສາກົນແລ້ວ ກໍ່ໝາຍຄວາມວ່າເປັນພາລະກິດອັນໜຶ່ງທີ່ນໍາເອົາມາດຕາຕ່າງໆຈາກຂໍ້ຕົກລົງຂອງສາກົນເຂົ້າມານໍາໃຊ້ໃນປະເທດຂອງຕົນ.

ບອກໃຫ້ຜູ້ເຂົ້າຮ່ວມຮູ້ກ່ຽວກັບຂໍ້ຕົກລົງສາກົນສອງຢ່າງ:

- ສົນທິສັນຍາວ່າດ້ວຍສິດທິເດັກ ສສດ ຫຼື CRC (ທີ່ໄດ້ລົມກັນໃນບົດຮຽນທີ່ແລ້ວ).
- ສົນທິສັນຍາປາລາໂມ້. (ມີຊື່ເຕັມຢູ່ຂ້າງລຸ່ມນີ້) ແມ່ນສົນທິສັນຍາເພື່ອປ້ອງກັນ, ປາບປາມ, ລົງໂທດຜູ້ຄ້າມະນຸດ

ຢາຍເອກະສານຄູ່ມືທີ່ນຳໃຊ້ເຂົ້າໃນການເຄື່ອນຍ້າຍແຮງງານທີ່ປອດໄພ. ຄູ່ມືດັ່ງກ່າວປະກອບມີເນື້ອໃນທີ່ສຳຄັນສຳລັບຜູ້ເຂົ້າຮ່ວມ ຜູ້ເຂົ້າຮ່ວມແຕ່ລະຄົນຕ້ອງໃຫ້ມີຄູ່ມືສະບັບນີ້ຄົນລະອັນ ແລະ ໃຫ້ຜູ້ເຂົ້າຮ່ວມຂຽນຊື່ຂອງພວກເຂົາໃສ່ຄູ່ມືດັ່ງກ່າວ, ປຶ້ມຄູ່ມືດັ່ງກ່າວຈະໄດ້ຖືກນຳໃຊ້ ແລະ ຜູ້ເຂົ້າຮ່ວມກໍ່ຄວນຮັກສາໄວ້ໃຫ້ເປັນຢ່າງດີເພື່ອບໍ່ໃຫ້ສູນຫາຍ. ໃນຕອນທ້າຍຂອງເຄື່ອງມືດັ່ງກ່າວຜູ້ເຂົ້າຮ່ວມສາມາດຖືປຶ້ມເຄື່ອງມືດັ່ງກ່າວເມືອເຮືອນໄດ້.

ໃຫ້ຜູ້ເຂົ້າຮ່ວມເປີດປຶ້ມຄູ່ມືໄປໜ້າທີ່ກ່າວເຖິງກົດໝາຍ ແລະ ສົນທິສັນຍາກົດໝາຍກ່ຽວກັບການຄ້າມະນຸດ.

ໃຫ້ຜູ້ເຂົ້າຮ່ວມປ່ຽນກັນອ່ານດັງໆ.

ຈົ່ງອະທິບາຍເຖິງສົນທິສັນຍາປາລາໂມ້ ແລະ CRC ສສດ ທີ່ໄດ້ມີການລົງນາມກັນໂດຍຫຼາຍໆປະເທດ, ລວມທັງປະເທດຂອງພວກເຮົາ, ສິ່ງດັ່ງກ່າວແມ່ນເປັນການຫ້າມຄ້າມະນຸດ ແຕ່ວ່າວຽກງານການຄ້າມະນຸດຍັງເປັນບັນຫາໃຫຍ່ຕໍ່ກັບປະເທດດັ່ງກ່າວ.

- ການສຶກສາກ່ຽວກັບການຄ້າມະນຸດໄດ້ປະເມີນວ່າມີເດັກນ້ອຍຈຳນວນ 2 ລ້ານກວ່າຄົນທີ່ຖືກຂູດຮີດທາງເພດ ແລະ ຖືກຄຸກຄາມຈາກສື່ລະມົກຕ່າງໆໃນແຕ່ລະປີ.
- ອົງການສະຫະປະຊາຊາດ ສປຊ ໄດ້ມີການສຶກສາເລື່ອງດັ່ງກ່າວ ແລະ ຍັງໄດ້ປະເມີນວ່າມີເດັກນ້ອຍຈຳນວນ 1,2 ລ້ານຄົນທີ່ໄດ້ຖືກຄ້າມະນຸດໃນແຕ່ລະປີ
- ຍັງໄດ້ມີການປະເມີນຕື່ມອີກວ່າ 27 ລ້ານຄົນທີ່ໄດ້ຕົກເປັນເຫຍື່ອຂອງການຄ້າມະນຸດ.

ຖາມຜູ້ເຂົ້າຮ່ວມອີກວ່າການຄ້າມະນຸດຜິດກົດໝາຍບໍ? ເປັນຫຍັງເລື່ອງດັ່ງກ່າວຈຶ່ງເກີດຂຶ້ນແຜ່ຫຼາຍໃນທົ່ວໂລກ, ໃຫ້ທຸກຄົນຄິດເບິ່ງເຫດຜົນດັ່ງກ່າວວ່າເປັນຫຍັງການຄ້າມະນຸດຈຶ່ງນັບມື້ນັບເຕີບໃຫຍ່ຂະຫຍາຍຕົວ? ຫຼັງຈາກແຕ່ລະກຸ່ມສະແດງຄວາມຄິດເຫັນ ແລະ ໄດ້ກ່າວເຖິງເຫດຜົນດັ່ງຕໍ່ໄປນີ້ ຖ້າເລື່ອງດັ່ງກ່າວຍັງບໍ່ທັນຍົກມາໂອ້ລົມກັນ:

### 1. ບັນດາຜູ້ຄ້າມະນຸດຫາເງິນຈາກເລື່ອງດັ່ງກ່າວໄດ້ຫຼາຍທີ່ສຸດ.

ລາຄາຂອງການຊື້ຄົນແມ່ນມີລາຄາຖືກຖ້າທຽບໃສ່ກັບການຫາເງິນຂອງຄົນໃຫ້ຜູ້ຄ້າມະນຸດ. ຜູ້ບັງຄັບບັນຊາເຮືອຜູ້ໜຶ່ງເຊິ່ງເປັນຜູ້ຄ້າມະນຸດ ລາວພຽງແຕ່ຈ່າຍເງິນເພື່ອຊື້ເອົາຄົນມາເຮັດວຽກຢູ່ໃນເຮືອແຕ່ລາວບໍ່ຈ່າຍເງິນເດືອນໃຫ້ພວກເຂົາ.

### 2. ຂະບວນການຍຸດຕິທຳຍັງບໍ່ເຂັ້ມແຂງ

ໝາຍຄວາມວ່າທຸກໆປະເທດກໍ່ມີຂະບວນການຍຸດຕິທຳດັ່ງກ່າວຄືການຈັບຕົວຜູ້ຕ້ອງສົງໃສ ໃນການກໍ່ອາດສະຍາກຳ, ສືບສວນຄະດີອາຍາ ແລະ ສົ່ງຜູ້ຕ້ອງສົງໃສໃຫ້ສານເພື່ອພິຈາລະນາ ຖ້າວ່າພວກເຂົາມີຄວາມຜິດ ພວກເຂົາກໍ່ຖືກຈຳຄຸກ. ບັນດາຕຳຫຼວດ, ນັກກົດໝາຍ, ຜູ້ຕັດສິນຄະດີ, ສານຍຸຕິທຳ ຕ້ອງມີຄວາມເຂັ້ມແຂງຕໍ່ກັບການດຳເນີນວຽກງານດັ່ງກ່າວ. ຂະບວນການນີ້ເອີ້ນວ່າ: ຂະບວນການຍຸດຕິທຳ.

ບອກໃຫ້ຜູ້ເຂົ້າຮ່ວມຮູ້ວ່າບັນດາຂະບວນການຕັດສິນຄະດີຕ້ອງມີການລົງໂທດຫຼືການຕັດສິນຜູ້ຄ້າມະນຸດກໍ່ບໍ່ເປັນວຽກທີ່ຍາກເກີນໄປ ບັນດາສານຍຸດຕິທຳ ແລະ ເຈົ້າໜ້າທີ່ອາດບໍ່ຮູ້ການລະບຸຕົວຜູ້ຖືກເຄາະຮ້າຍແນວໃດ ແລະ ອາດລົງໂທດຜູ້ທີ່ຕົກເປັນເຫຍື່ອຂອງການຄ້າມະນຸດວ່າເປັນຜູ້ທີ່ເຄື່ອນຍ້າຍແຮງງານທີ່ຜິດກົດໝາຍ.



ບອກໃຫ້ຜູ້ເຂົ້າຮ່ວມຮູ້ຕື່ມອີກວ່າ: ຜູ້ທີ່ຕົກເປັນເຫຍື່ອຂອງການຄ້າມະນຸດອາດຖືກຕັດສິນຄະດີຕາມກໍລະນີຂອງແຕ່ລະຄົນເຊິ່ງສິ່ງຜົນກະທົບຕໍ່ພວກເຂົາ. ຕົວຢ່າງ: ເມື່ອຜູ້ທີ່ຕົກເປັນເຫຍື່ອຂອງການຄ້າມະນຸດຖືກບັງຄັບໃຫ້ອະທິບາຍເລື່ອງລາວອັນບໍ່ດີທີ່ເກີດຂຶ້ນກັບພວກເຂົາຕໍ່ໜ້າກຸ່ມຄົນທີ່ຢູ່ໃນສານ.

ບາງຄັ້ງບັນດາຜູ້ຄ້າມະນຸດພັດເປັນຄົນທີ່ຮັ່ງມີ ແລະ ມີອຳນາດເຈົ້າໜ້າທີ່ອາດຄິດເກງກົວທີ່ຈະໃສ່ໂທດພວກເຂົາ ຫຼື ຜູ້ຄ້າມະນຸດອາດຈ່າຍເງິນໃຫ້ເຈົ້າໜ້າທີ່ເພື່ອເຮັດໃຫ້ຄະດີຂອງພວກເຂົາຈົບລົງ.

ມີຫຼາຍຄັ້ງບັນດາເຈົ້າໜ້າທີ່ ຫຼື ນັກກົດໝາຍບໍ່ມີເງິນ ຫຼື ບໍ່ມີເຄື່ອງມື ຫຼື ພາຫະນະ ທີ່ຈະສືບສວນຜູ້ຄ້າມະນຸດ.

### 3. ຜູ້ຕົກເປັນເຫຍື່ອຈາກການຄ້າມະນຸດອາດບໍ່ໄດ້ຕັດສິນຄະດີ.

ບັນດາຜູ້ທີ່ຕົກເປັນເຫຍື່ອຈາກການຄ້າມະນຸດບໍ່ຕ້ອງການທີ່ຈະເອົາເລື່ອງຜູ້ຄ້າມະນຸດ ເພາະພວກເຂົາຢ້ານ ແລະ ບໍ່ເຂົ້າໃຈກ່ຽວກັບສິດທິຂອງພວກເຂົາ, ເຂົາອາດບໍ່ຮູ້ວ່າສິ່ງທີ່ເກີດຂຶ້ນກັບພວກເຂົານັ້ນເປັນສິ່ງທີ່ຜິດກົດໝາຍ.

## ກິດຈະກຳ

ຢາຍເອກະສານແຫຼ່ງຂໍ້ມູນຈາກ 11 ຂ: ພາຍຫຼັງທີ່ໄດ້ຮຽນຮູ້ເລື່ອງການຄ້າມະນຸດ.

ໃຫ້ຜູ້ເຂົາຮ່ວມແບ່ງເປັນກຸ່ມກຸ່ມລະ 3 ຄົນ. ໃຫ້ແຕ່ລະກຸ່ມເບິ່ງທີ່ຮູບພາບຕ່າງໆ ແລະ ອ່ານເລື່ອງດັ່ງກ່າວເລື່ອງໃດເລື່ອງໜຶ່ງກໍ່ໄດ້ແລ້ວໃຫ້ພວກເຂົາຂຽນຂໍ້ຄວາມໃສ່ວົງມົນທີ່ຂີດອ້ອມໄວ້ວ່າຜູ້ຖືກເຄາະຮ້າຍມີຄວາມຮູ້ສຶກແນວໃດ ດັ່ງທີ່ມັນໄດ້ພົວພັນກັບຄວາມຮູ້ຂອງເຂົາ ຫຼື ພວກເຂົາຖືກປະລະຈາກສິດທິຂອງພວກເຂົາ.

## ການສະແດງບົດບາດສົມມຸດ

ໃຫ້ຜູ້ເຂົ້າຮ່ວມແບ່ງເປັນກຸ່ມ 8-12 ຄົນ. ໃຫ້ແຕ່ລະກຸ່ມກະກຽມການສະແດງບົດບາດສົມມຸດເປັນຜູ້ຊັກຊວນ. (ຖ້າພວກເຂົາຫາກມີຫຼາຍກ່ວາ 2 ກຸ່ມ, ເຈົ້າກໍ່ສາມາດເລືອກເອົາເລື່ອງໜຶ່ງຈາກລຸ່ມນີ້ເພື່ອເປັນການຫຼິ້ນໄດ້ 2 ຄັ້ງ.)

ອະທິບາຍຕື່ມອີກວ່າແຕ່ລະກຸ່ມສາມາດສະແດງບົດບາດສົມມຸດທີ່ແຕກຕ່າງກັນ ທີ່ເລີ່ມຕົ້ນແບບດຽວກັນດັ່ງທີ່ໄດ້ອະທິບາຍຂ້າງລຸ່ມນີ້ແຕ່ວ່າໃຫ້ມັນຈົບລົງໃນວິທີການທີ່ແຕກຕ່າງກັນ ຫຼື ຜົນອອກມາທີ່ແຕກຕ່າງກັນ.

## ເລື່ອງ

ເອ ມີອາຍຸ 17 ປີ ເຊິ່ງເຄີຍເປັນແຮງງານເຄື່ອນຍ້າຍມາກ່ອນ, ລາວໄດ້ຖືກນຳພາໂດຍຜູ້ຈັດຫາງານໄປທີ່ໂຮງງານແຫ່ງໜຶ່ງ ເອ ບໍ່ໄດ້ມັກວຽກທີ່ໂຮງງານດັ່ງກ່າວນີ້ເລີຍ ແລະ ລາວເກີດຄວາມສົງໃສເບິ່ງໜ້າວຽກກໍ່ເປັນວຽກທີ່ອັນຕະລາຍ, ຄົນງານເຮັດວຽກທີ່ນັ້ນເບິ່ງຜູ້ໃດກໍ່ເປັນຕາຢ້ານ.ລາວຍິ່ງເກີດມີຂໍ້ສົງໃສຫຼາຍຂຶ້ນເມື່ອໄດ້ຍິນຜູ້ຈັດຫາງານຄົນນັ້ນໄດ້ເວົ້າອອກມາວ່າ: **ບັນດາຄົນງານຕ້ອງເຮັດວຽກຢູ່ທີ່ນີ້ເປັນເວລາ 3 ເດືອນໂດຍບໍ່ໄດ້ຮັບຄ່າຈ້າງ.**

ນຳໃຊ້ເອກະສານແຫຼ່ງຂໍ້ມູນ 11 ກ: ກົດໝາຍກ່ຽວກັບການຄ້າມະນຸດ ແລະ ສິດທິຕ່າງໆ ເພື່ອຊອກຫາກົດໝາຍມາປົກປ້ອງແຮງງານເຄື່ອນຍ້າຍ ແລະ ແລ້ວໃຫ້ສະແດງບົດບາດສົມມຸດເຊິ່ງວ່າແຮງງານເຄື່ອນຍ້າຍໄດ້ລັກໜີຈາກຜູ້ຈັດຫາງານໂດຍເປັນກະບອກສຽງໃນການສົ່ງເສີມສິດທິຂອງຄົນງານຕ່າງໆ. ໃຫ້ພິຈາລະນາວ່າພວກເຂົາໄດ້ຮູ້ຈັກກົດໝາຍເພື່ອຊ່ວຍເຫຼືອແຮງງານຜູ້ທີ່ລັກໜີດັ່ງກ່າວ.

ໃຫ້ແຕ່ລະກຸ່ມກະກຽມສະແດງບົດບາດສົມມຸດ 5 ນາທີແລ້ວມາສະແດງໃຫ້ກັນເບິ່ງ.

ຖ້າຄົນເຮົາກຽມທີ່ຈະຫລົບໜີໃນຄັ້ງທີໜຶ່ງແລ້ວແຕ່ວ່າໜີບໍ່ລອດ ພວກເຂົາກໍ່ຈະຖືກຄ້າມະນຸດອີກ ມີຫຼາຍຢ່າງທີ່ແຕກຕ່າງກັນທີ່ຈະເກີດຂຶ້ນກັບພວກເຂົາ:

- ມີບາງຄົນກໍ່ຮ້ອງຂໍຄວາມຊ່ວຍເຫຼືອຈາກໂຄງການ ຫຼື ທາງພາກລັດ.
- ມີບາງກໍລະນີກໍ່ໄດ້ຮັບການຊ່ວຍເຫຼືອເປັນທີ່ພັກພາອາໄສຈາກປະເທດດັ່ງກ່າວເປັນເວລາຫຼາຍເດືອນ, ຫຼັງຈາກນັ້ນກໍ່ສົ່ງພວກເຂົາກັບຄືນບ້ານ.
- ບາງກໍລະນີກໍ່ກັບຄືນບ້ານໂດຍບໍ່ໄດ້ລາຍງານຫຍັງໃຫ້ເຈົ້າໜ້າທີ່ຮູ້ເລື່ອງລາວເລີຍ.
- ມີບາງກໍລະນີທີ່ລັກໜີໄປໄດ້ແລ້ວ ກໍ່ໄດ້ໄປຊອກຫາວຽກໃໝ່ຢູ່ບ່ອນອື່ນ
- ມີບາງກໍລະນີກໍ່ໄດ້ຖືກຈັບຄືເປັນແຮງງານເຄື່ອນຍ້າຍທີ່ຜິດກົດໝາຍ, ຖ້າລັດຖະບານບໍ່ໄດ້ລະບຸວ່າພວກເຂົາເຫຼົ່ານັ້ນແມ່ນຕົກເປັນເຫຍື່ອຂອງການຄ້າມະນຸດ.

ຖ້າເຈົ້າຄິດທີ່ຈະເປັນແຮງງານເຄື່ອນຍ້າຍ, ມັນເປັນສິ່ງທີ່ສຳຄັນທີ່ເຈົ້າຕ້ອງຮູ້ວ່າ: ການຄ້າມະນຸດແມ່ນເປັນສິ່ງທີ່ຜິດກົດໝາຍ, ສິ່ງດັ່ງກ່າວກໍ່ບໍ່ໄດ້ໝາຍຄວາມວ່າເຈົ້າຈະອີງໃສ່ແຕ່ກົດໝາຍເພື່ອເປັນການປົກປ້ອງເຈົ້າໃນຕອນທີ່ເຈົ້າຖືກຄ້າມະນຸດ. ຕາມທີ່ລາຍການດັ່ງກ່າວທີ່ໄດ້ຂຽນໄວ້ ບັນດາຜູ້ຄ້າມະນຸດຕ່າງໆກໍ່ຖືກລົງໂທດຈາກກົດໝາຍສະເໝີໄປ.

## ສະຫຼຸບບົດຮຽນ

- ສົນທິສັນຍາປາລາໂມ້ ແລະ ກົດໝາຍຕ່າງໆ ໃນປະເທດຂອງພວກເຮົາແມ່ນກ່າວເຖິງການສະກັດກັ້ນການຄ້າມະນຸດ.
- ການຄ້າມະນຸດຍັງບໍ່ຍອມຮັບສິດທິຂອງເດັກນ້ອຍຢູ່ໃນ CRC ສສດ .
- ເຖິງແມ່ນວ່າການຄ້າມະນຸດເປັນສິ່ງທີ່ຜິດກົດໝາຍກໍ່ຕາມ ແຕ່ກໍ່ຍັງມີຜູ້ຖືກເຄາະຮ້າຍສູງເຖິງ 27 ລ້ານຄົນໃນທົ່ວໂລກ.
- ບັນດາຜູ້ຄ້າມະນຸດທັງຫຼາຍກໍ່ບໍ່ໄດ້ຖືກຕັດສິນຄະດີ ຫຼື ຖືກລົງໂທດເຂົ້າສະເໝີໄປນີ້ກໍ່ເນື່ອງຈາກວ່າ:
  - ຜູ້ຄ້າມະນຸດດັ່ງກ່າວພັດມີເງິນຫຼາຍ.
  - ຂະບວນການຍຸດຕິທຳທີ່ດຳເນີນຄະດີຍັງບໍ່ເຂັ້ມແຂງ, ບັນດາຜູ້ທີ່ຕົກເປັນເຫຍື່ອຂອງການຄ້າມະນຸດນັ້ນບໍ່ກ້າເອົາເລື່ອງກັບນາຍໜ້າຜູ້ຄ້າມະນຸດ.
  - ຖ້າເຈົ້າຄິດຈະເຄື່ອນຍ້າຍແຮງງານເຈົ້າບໍ່ຕ້ອງອີງໃສ່ແຕ່ກົດໝາຍທີ່ຈະປົກປ້ອງເຈົ້າໃນເມື່ອເຈົ້າຫາກພົບກັບບັນຫາ.



## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ໃຫ້ຜູ້ເຂົ້າຮ່ວມເມືອຖາມພໍ່ແມ່ ຫຼື ຜູ້ປົກຄອງຂອງພວກເຂົາວ່າ:

- ພໍ່ແມ່ເອີຍເຈົ້າເຄີຍໄດ້ຍິນບໍວ່າຜູ້ໃດຜູ້ໜຶ່ງທີ່ເຄີຍຖືກຫລອກລວງໄປຂາຍຈາກຊຸມຊົນຂອງພວກເຮົາ?
- ຜູ້ທີ່ຕົກເປັນເຫື່ຍອຈາກການຄ້າມະນຸດເລືອກທີ່ຈະເອົາຄວາມກັບນາຍໜ້າຜູ້ຄ້າມະນຸດບໍ? ເປັນຫຍັງຈຶ່ງບໍ່ເອົາຄວາມ? ແລະ ເປັນຫຍັງຈຶ່ງເອົາຄວາມ?

ຄູຝຶກຄວນບອກໃຫ້ຜູ້ເຂົ້າຮ່ວມຂຽນຄຳຖາມໃສ່ເຈ້ຍແລ້ວເອົາເມືອເຮືອນເພື່ອເຕືອນຄວາມຈຳຂອງພວກເຂົາ.

# ເອກະສານອ້າງອີງ 11 ກ: ພາບສະແດງຫຼັງຈາກ ຖືກຄ້າມະນຸດ



ທ້າວ ທີ ໄດ້ຫຼົບໜີຈາກການຄ້າມະນຸດແຕ່ລາວຍັງໄດ້ຕັດສິນໃຈຢູ່ທີ່ປະເທດໄທ. ລາວໄດ້ມີວຽກໃໝ່, ແຕ່ລາວກໍ່ຖືກຄ້າມະນຸດອີກ. ທ້າວທີ ກໍ່ຫຼົບໜີໄດ້ອີກ, ແຕ່ລາວຢ້ານທີ່ຈະລາຍງານຕຳຫຼວດ ເພາະວ່າລາວບໍ່ມີເອກະສານທີ່ຖືກຕ້ອງຕາມກົດໝາຍ, ໃນທີ່ສຸດລາວກໍ່ໄດ້ວຽກໃໝ່ຢູ່ທີ່ຟາມແຫ່ງໜຶ່ງ. ລາວບໍ່ໄດ້ເຂົ້າໃຈເລີຍວ່າລາວຖືກຄ້າມະນຸດ, ລາວພຽງແຕ່ຄິດວ່າ ລາວໄດ້ເຮັດວຽກທີ່ເປັນວຽກທີ່ບໍ່ດີ.





ນາງ ເອັມ ໄດ້ຫຼອດຕາຍຈາກການຄ້າມະນຸດ ໂດຍການເປັນແມ່ບ້ານທີ່ປະເທດ ມາເລເຊຍ. ລາວໄດ້ຖືກຈັບໂດຍເຈົ້າໜ້າທີ່ ຄືການລັກລອບເຂົ້າເມືອງຜິດກົດໝາຍ ແລະ ໄດ້ຖືກ ກັກຕົວເປັນເວລາສາມເດືອນກ່ອນທີ່ຈະໄດກັບບ້ານເກີດທີ່ປະເທດກຳປູເຈຍ. ລາວກໍ່ໄດ້ກັບຄືນສູ່ຄອບຄົວ ແລະ ກໍ່ໄດ້ເວົ້າເລີຍວ່າມີຫຍັງເກີດຂຶ້ນກັບລາວທີ່ຜ່ານມາ.



ນາງ ເອສ ໄດ້ຖືກຊ່ວຍເຫຼືອຈາກການກວດລ້າງຂອງເຈົ້າໜ້າທີ່. ເຈົ້າໜ້າທີ່ເວົ້າວ່າສີ ໄດ້ຖືກຄ້າມະນຸດ ແລະ ຕ້ອງການໃຫ້ລາວເອົາຜິດກັບເຈົ້າຂອງໂຮງງານ. ແຕ່ລາວກໍ່ເສຍໃຈກັບສິ່ງທີ່ເກີດຂຶ້ນກັບລາວ ແລະ ລາວອາຍທີ່ຈະເວົ້າເລື່ອງດັ່ງກ່າວ, ດັ່ງນັ້ນລາວຈຶ່ງໄດ້ຕັດສິນໃຈກັບຄອບຄົວຂອງລາວ.






ນາງ ເຄ ໄດ້ລອດຕາຍອອກຈາກໂຮງງານແຫ່ງໜຶ່ງບ່ອນທີ່ລາວໄດ້ຖືກບັງຄັບໃຫ້ເຮັດວຽກແຕ່ບໍ່ໄດ້ເງິນເດືອນ ແລະ ບໍ່ສາມາດໜີໄດ້. ລາວກໍ່ໄດ້ພົບກັບສູນແຮງງານເຄື່ອນຍ້າຍແຫ່ງໜຶ່ງ ແລະ ກໍ່ໄດ້ແນະນຳໃຫ້ລາວກ່ຽວກັບອົງການຊ່ວຍເຫຼືອຜູ້ທີ່ຖືກເຄາະຮ້າຍຈາກການຄ້າມະນຸດ. ໂຄງການ ແລະ ເຈົ້າໜ້າທີ່ກໍ່ໄດ້ສືບທົບກັນເພື່ອຈັບນາຍໜ້າ ແລະ ກໍ່ໄດ້ປິດໂຮງງານ ແລະ ນາງ ເຄກໍ່ໄດ້ເອົາຫຼັກຖານທັງໝົດໃຫ້ເຈົ້າໜ້າທີ່.




ນາງ ເອວ ໄດ້ລອດຕາຍອອກຈາກຮ້ານຂາຍບໍລິການທີ່ຕ່າງປະເທດ ແລະລາວກໍ່ໄດ້ໂທຫາພໍ່ແມ່ເພື່ອມາຊ່ວຍເຫຼືອ. ພວກເຂົາກໍ່ບໍ່ຮູ້ວ່າຈະຊ່ວຍແນວໃດ. ລາວກໍ່ໄດ້ໄປຫາເຈົ້າໜ້າທີ່ເພື່ອບອກໃນສິ່ງທີ່ເກີດຂຶ້ນກັບລາວ. ພວກເຂົາພຽງແຕ່ຄິດວ່າລາວເປັນໂສເພນີຄົນໜຶ່ງເທົ່ານັ້ນ ແລະ ພວກເຂົາກໍ່ບໍ່ຕ້ອງການທີ່ຈະຊ່ວຍລາວ. ເຈົ້າໜ້າທີ່ກໍ່ໄດ້ຮັບສິນບົນຈາກເຈົ້າຂອງຮ້ານບໍລິການທຸກໆເດືອນ, ດັ່ງນັ້ນພວກເຂົາກໍ່ບໍ່ໄດ້ຟັງຫຍັງໝົດຈາກນາງ ເອວ.



# ເອກະສານອ້າງອີງ 11 ກ: ເລື່ອງທີ່ເກີດຂຶ້ນພາຍຫຼັງການຄ້າມະນຸດ

11

ຕົວຢ່າງການຕອບໂຕ້

1. ເພາະວ່າຂ້ອຍບໍ່ມີເອກະສານໄປເຮັດວຽກທີ່ຖືກຕ້ອງຕາມກົດໝາຍ, ຂ້ອຍບໍ່ມີສິດທີ່ເຮັດວຽກຖືກຕ້ອງຕາມກົດໝາຍ. ຂ້ອຍຕ້ອງການຢາກໄປຫາເຈົ້າໜ້າທີ່ ເພາະວ່າບາງທີ່ຂ້ອຍອາດພົບບັນຫາຫຼາຍຂຶ້ນ.

2. ມັນເປັນຄວາມຜິດຂອງຂ້ອຍທີ່ຂ້ອຍໄດ້ຖືກຈັບທີ່ປະເທດມາເລເຊຍ, ເພາະວ່າຂ້ອຍເຮັດວຽກທີ່ຜິດກົດໝາຍ. ຂ້ອຍບໍ່ຕ້ອງການບອກກັບຄອບຄົວຂອງຂ້ອຍ, ເພາະວ່າພວກເຂົາບໍ່ເຂົ້າໃຈ.

3. ຂ້ອຍບໍ່ເຂົ້າໃຈສິດທີ່ທີ່ຂ້ອຍຈະເອົາຜິດກັບພາຍໜ້າ. ຂ້ອຍເມື່ອຍກັບປະສົບການທີ່ຂົມຂື່ນ, ຂ້ອຍຕ້ອງການຢາກກັບບ້ານ ແລະ ຢາກຈະລືມກັບສິ່ງທີ່ເກີດຂຶ້ນ.

4. ຂ້ອຍຮູ້ສິດຂອງຂ້ອຍໃນການເອົາຄວາມຜິດກັບນາຍໜ້າ, ເພາະວ່າສິ່ງເຮັດກັບຂ້ອຍນັ້ນເປັນສິ່ງທີ່ຜິດກົດໝາຍ. ຂ້ອຍມີສິດທີ່ຈະລົງໂທດ ເພາະວ່າມັນຂັດກັບການຂູດຮີດ.

5. ຂ້ອຍມີຄວາມຮູ້ສຶກຜິດຫວັງເພາະວ່າຂ້ອຍໄດ້ເຮັດວຽກທີ່ຂັດກັບອຸດົມການຂອງຂ້ອຍ ແລະ ຂ້ອຍກໍ່ໄດ້ບໍລິການລູກຄ້າທຸກໆຄືນ ຂ້ອຍຮູ້ວ່າຂ້ອຍມີສິດປົກປ້ອງທີ່ຂັດຕໍ່ການຂູດຮີດ.

# 12 ບົດທີ 12: ການເຄື່ອນຍ້າຍແຮງງານທີ່ປອດໄພ

**ຈຸດປະສົງ: ໃຫ້ບັນດາຜູ້ເຂົ້າຮ່ວມຈະໄດ້ເຂົ້າໃຈເຖິງຄວາມແຕກຕ່າງລະຫ່ວາງການເຄື່ອນຍ້າຍແຮງງານທີ່ປອດໄພ ແລະ ການເຄື່ອນຍ້າຍແຮງງານທີ່ຜິດກົດໝາຍ ແລະ ຈະເຂົ້າໃຈເຖິງການເຄື່ອນຍ້າຍແຮງງານທີ່ປອດໄພເປັນທາງເລືອກໜຶ່ງທີ່ມີຄວາມປອດໄພກວ່າ.**

**ເວລາ:**

75 ນາທີ

**ອຸປະກອນ**

- ເຈ້ຍແຜ່ນໃຫຍ່
- ສຳເນົາປັດສະປໍ ແລະ ເອກະສານອະນຸຍາດເຂົ້າປະເທດ.
- ສຳເນົາ 12 ກ: ການເຄື່ອນຍ້າຍແຮງງານທີ່ຜິດກົດໝາຍສຳລັບເຮັດກິດຈະກຳ.

## ການກະກຽມ

ຊອກຫາຜູ້ທີ່ມີອາຍຸໃນເກນເຮັດວຽກໄດ້ໃນປະເທດຂອງເຈົ້າ ດັ່ງນັ້ນ ເຈົ້າຈຶ່ງສາມາດແລກປ່ຽນບົດຮຽນດັ່ງກ່າວໃຫ້ແກ່ເດັກນ້ອຍໃນບົດຮຽນນີ້

## ການແນະນຳບົດຮຽນ:

**ຍິນດີຕ້ອນຮັບ:**

ດ້ວຍການເອີ້ນຊື່ຜູ້ເຂົ້າຮ່ວມ ແລະ ຍື່ນເຈ້ຍໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມທັງໝົດເຊັ່ນ.

**ອົບອຸ່ນຮ່າງກາຍ:**

ໃຫ້ຄູຝຶກເດັກເປັນຜູ້ນຳພາຜູ້ເຂົ້າຮ່ວມໂດຍການເລືອກເກມຕາມລາຍການ (ບໍ່ຕ້ອງເລືອກເກມທວນຄວາມຊົງຈຳເພາະວ່າພວກເຮົາຈະໄດ້ຫຼິ້ນໃນຕອນທ້າຍຂອງບົດຮຽນ.

**ທວນຄືນບົດຮຽນ:**

ເຈົ້າເຄີຍໄດ້ຍິນບໍວ່າ ຜູ້ໃດຜູ້ໜຶ່ງທີ່ຢູ່ໃນຊຸມຊົນຂອງເຈົ້າເຄີຍຖືກຄ້າມະນຸດ ?

ຜູ້ທີ່ຕົກເປັນເຫຍື່ອຈາກການຄ້າມະນຸດດັ່ງກ່າວໄດ້ດຳເນີນຄະດີກັບຜູ້ຄ້າມະນຸດບໍ?

ເປັນຫຍັງຈຶ່ງດຳເນີນຄະດີ? ແລະ ເປັນຫຍັງຈຶ່ງບໍ່ດຳເນີນຄະດີ?

## ການເຄື່ອນຍ້າຍແຮງງານ

ອະທິບາຍໃຫ້ຜູ້ເຂົ້າຮ່ວມຟັງຕື່ມອີກວ່າເດັກ ແລະ ໄວໜຸ່ມໄດ້ມີການເຄື່ອນຍ້າຍແຮງງານໃນຫຼາຍວິທີທາງແຕກຕ່າງກັນ.



**ການເຄື່ອນຍ້າຍແຮງງານພາຍໃນ:** ໝາຍເຖິງເມື່ອຄົນເຮົາມີການເຄື່ອນຍ້າຍພາຍໃນປະເທດຂອງຕົນເອງ.

ການເຄື່ອນຍ້າຍແຮງງານພາຍໃນແມ່ນບໍ່ໄດ້ມີເກນອາຍຸທີ່ຜິດກົດໝາຍເຖິງແນວໃດກໍ່ຕາມ, ແຕ່ກໍ່ມີເກນອາຍຸທີ່ອະນຸຍາດໃຫ້ເຮັດວຽກ.ໃຫ້ບັນດາຄູຝຶກບອກກັບຜູ້ເຂົ້າຮ່ວມວ່າ ຜູ້ທີ່ມີເກນອາຍຸອະນຸຍາດໃຫ້ເຮັດວຽກໄດ້ໃນປະເທດຂອງເຈົ້ານັ້ນແມ່ນມີອາຍຸເທົ່າໃດ. (ເບິ່ງກົດໝາຍແຮງງານ)

**ການເຄື່ອນຍ້າຍແຮງງານໄປຕ່າງປະເທດ** ເມື່ອຄົນເຮົາຫາກເຄື່ອນຍ້າຍໄປຕ່າງປະເທດ.

ໃນນາມສາກົນແລ້ວ ການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ຕ່າງປະເທດຈະບໍ່ອະນຸຍາດໃຫ້ເດັກນ້ອຍທີ່ມີອາຍຸຕ່ຳກວ່າ 18 ປີ .

ໃຫ້ບອກກັບຜູ້ເຂົ້າຮ່ວມວ່າ ທຸກໆປະເທດມີກົດໝາຍຫຼາຍໆຢ່າງທີ່ເຮັດໃຫ້ຜູ້ເຄື່ອນຍ້າຍແຮງງານສາມາດເດີນທາງເຂົ້າປະເທດນັ້ນໄດ້. ຍັງມີກົດໝາຍລຸ່ມນີ້ທີ່ໄດ້ກ່າວໄວ້ວ່າຈະເຮັດແນວໃດເພື່ອໃຫ້ຜູ້ເຄື່ອນຍ້າຍແຮງງານເດີນທາງດ້ວຍຄວາມປອດໄພ. ມັນກໍ່ເປັນໜ້າທີ່ຮັບຜິດຊອບຂອງພວກເຂົາທີ່ຈະຕ້ອງເຂົ້າໃຈບັນດາເນື້ອໃນກົດໝາຍດັ່ງກ່າວ.

ການເຄື່ອນຍ້າຍແຮງງານທີ່ປອດໄພ (ຍັງເອີ້ນອີກຊື່ໜຶ່ງວ່າ: ການເຄື່ອນຍ້າຍແຮງງານທີ່ຖືກຕ້ອງຕາມກົດໝາຍ ຫຼື ການເຄື່ອນຍ້າຍແຮງງານແບບປົກກະຕິ)

ເມື່ອຜູ້ເຄື່ອນຍ້າຍແຮງງານປະຕິບັດຕາມກົດໝາຍດັ່ງກ່າວ ເພື່ອຄຸ້ມຄອງຜູ້ທີ່ເຂົ້າປະເທດເພື່ອໄປເຮັດວຽກໃນປະເທດອື່ນໆອັນນີ້ເອີ້ນວ່າເຄື່ອນຍ້າຍແຮງງານທີ່ປອດໄພ, ເພາະວ່າຜູ້ເຄື່ອນຍ້າຍແຮງງານໄດ້ຮັບເອກະສານທີ່ຖືກຕ້ອງຕາມກົດໝາຍເຊັ່ນ: ໜັງສືເດີນທາງ, ໜັງສືອະນຸຍາດເຮັດວຽກກ່ອນການເດີນທາງ. ມີຫຼາຍປະເທດທີ່ໄດ້ລວມເອົາບັນດາກົດໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນຍ້າຍແຮງງານຂອງລັດຖະບານຂອງແຕ່ລະປະເທດນັ້ນໆເພື່ອເປັນເຄື່ອງມືມັນມີຜົນປະໂຫຍດຫຼາຍເພື່ອພວກເຮົາຄວນຮັບຮູ້ເອກະສານດັ່ງກ່າວ:

- ການເຄື່ອນຍ້າຍແຮງງານທີ່ປອດໄພປົກກະຕິແລ້ວແມ່ນພວກເຮົາຕ້ອງການໜັງສືເດີນທາງ ແລະ ວີຊ້າ ແລະ ບາງເທື່ອກໍ່ອາດຕ້ອງການເອກະສານອື່ນໆນຳອີກ.
- ບໍລິສັດຈັດຫາງານ

ບອກໃຫ້ຜູ້ເຂົ້າຮ່ວມຮູ້ຕື່ມອີກວ່າ (ປັດສະປໍ) ແມ່ນເອກະສານທີ່ຖືກຕ້ອງຕາມກົດໝາຍເຊິ່ງອອກໃຫ້ໂດຍປະເທດຂອງພວກເຮົາເອງເຊິ່ງໃຊ້ເພື່ອເຂົ້າປະເທດ ແລະ ອອກປະເທດຢ່າງຖືກຕ້ອງຕາມກົດໝາຍ. ຈົ່ງສະແດງ ພັດສະປໍ ໃຫ້ຜູ້ເຂົ້າຮ່ວມເບິ່ງ.

ອະທິບາຍໃຫ້ຜູ້ເຂົ້າຮ່ວມຮູ້ຕື່ມອີກວ່າ ວີຊ້ານີ້ແມ່ນເປັນກາຈ້ຳ ຫຼື ສະຕິກເກີ້ ທີ່ຖືກຕ້ອງຕາມກົດໝາຍອັນໜຶ່ງທີ່ພວກເຂົາຈ້ຳໃສ່ໜັງສືເດີນທາງ ໂດຍຕົວແທນຂອງກົງສູນປະຈຳປະເທດນັ້ນ. ທີ່ເປັນການອະນຸຍາດໃຫ້ພວກເຮົາເຂົ້າປະເທດເຂົາ. ມີຫຼາຍຊະນິດຂອງວີຊ້າ,ວີຊ້າເຮັດວຽກແມ່ນອະນຸຍາດໃຫ້ຄົນເຮົາເຮັດວຽກໃນປະເທດນັ້ນໆຖືກຕ້ອງຕາມກົດໝາຍ ວີຊ້າທ່ອງທ່ຽວແມ່ນອານຸຍາດໃຫ້ຄົນເຂົ້າໄປທ່ອງທ່ຽວແຕ່ບໍ່ອະນຸຍາດໃຫ້ເຮັດວຽກໃນປະເທດນັ້ນ.

ຈົ່ງສະແດງຮູບພາບຂອງວີຊ້າໃຫ້ຜູ້ເຂົ້າຮ່ວມເບິ່ງ.

ອະທິບາຍໃຫ້ຜູ້ເຂົ້າຮ່ວມຟັງວ່າເຈົ້າບໍ່ສາມາດເຂົ້າປະເທດນັ້ນໆໄດ້ຕາມກົດໝາຍ ຖ້າຫາກວ່າເຈົ້າບໍ່ມີ ປັດສະປໍ ແລະ ວີຊ້າຈາກປະເທດທີ່ເຈົ້າຈະໄປ.

ຖ້າພວກເຂົາຕ້ອງການເຄື່ອນຍ້າຍແຮງງານໄປປະເທດອື່ນໆ ພວກເຂົາຕ້ອງຊອກຫາທາງເລືອກຕ່າງໆ ສໍາລັບການປະກອບເອກະສານເພື່ອການເຄື່ອນຍ້າຍແຮງງານຈາກຄອບຄົວ ແລະ ອໍານາດການປົກຄອງທ້ອງຖິ່ນເພື່ອເຂົ້າປະເທດນັ້ນ.

ມີແຮງງານເຄື່ອນຍ້າຍຫຼາຍຄົນທີ່ບໍ່ມີເອກະສານ, ພວກເຂົາເຫຼົ່ານັ້ນຊອກຫາວິທີທາງອື່ນເພື່ອເຂົ້າປະເທດປາຍທາງ ບາງຄົນກໍ່ລັກລອບເຂົ້າເມືອງທີ່ຜິດກົດໝາຍ, ໃຫ້ຄົນໃດຄົນໜຶ່ງອະທິບາຍວ່າ: ການລັກລອບເຂົ້າເມືອງໝາຍຄວາມວ່າແນວໃດ? ມີຫຼາຍໆຄົນເວົ້າວ່າພວກເຂົາເຂົ້າເມືອງຈະພັກຢູ່ປະມານໜຶ່ງວັນ, ແຕ່ຄວາມຈິງອາໄສຢູ່ຫຼາຍໆປີ. ນີ້ເອີ້ນວ່າ: ການເຂົ້າເມືອງທີ່ບໍ່ເອກສານ (ບາງຄັ້ງກໍ່ເອີ້ນວ່າ: ການເຂົ້າເມືອງທີ່ບໍ່ປົກກະຕິ ແລະ ຜິດກົດໝາຍ)

ການເຄື່ອນຍ້າຍແຮງງານທີ່ປອດໄພມັນມີຄວາມຫຍຸ້ງຍາກໃນການດໍາເນີນເອກະສານ, ມັນຍັງຕ້ອງໃຫ້ຜູ້ເຄື່ອນຍ້າຍແຮງງານໃຊ້ເວລາປະກອບຕາມຂະບວນການທີ່ຍາວນານ ໃນການສະໝັກເພື່ອຂໍເອກສານຕ່າງໆ. ເຖິງຢ່າງໃດກໍ່ຕາມ ການປະກອບເອກະສານທີ່ຖືກຕ້ອງຕາມກົດໝາຍເປັນການເຂົ້າເມືອງທີ່ປອດໄພ. ຜູ້ເຄື່ອນຍ້າຍແຮງງານທີ່ບໍ່ປະກອບເອກະສານແມ່ນການຝ່າຝືນກົດໝາຍ ດັ່ງນັ້ນພວກເຂົາຈຶ່ງຫຼີກລ້ຽງເຈົ້າໜ້າທີ່ບ່ອນທີ່ປະເທດຂອງຕົນເຮັດວຽກຢູ່. ມັນຈະມີຄວາມປອດໄພຫຼາຍຖ້າມີເອກະສານໃນການເຄື່ອນຍ້າຍແຮງງານ, ຖ້າມີບັນຫາຫຍັງເກີດຂຶ້ນກໍ່ສາມາດຕິດຕໍ່ອໍານາດການປົກຄອງໄດ້.

ໃຫ້ຜູ້ເຂົ້າຮ່ວມຄິດກ່ຽວກັບຄົນທີ່ພວກເຂົາຮູ້ຜູ້ທີ່ຈາກບ້ານເຂົາໄປຢູ່ອີກປະເທດອື່ນ.
ພວກເຂົາມີເອກະສານຖືກຕ້ອງບໍ ຫຼື ບໍ່ໄດ້ປະກອບເອກະສານໃນການເຄື່ອນຍ້າຍ.

## ການສົນທະນາ

ໃຫ້ຜູ້ເຂົ້າຮ່ວມແບ່ງເປັນກຸ່ມ 4 ຫາ 8 ຄົນ. ເອົາເຈ້ຍແຜ່ນໃຫຍ່ໃຫ້ແຕ່ລະກຸ່ມ, ໃຫ້ພວກເຂົາສົນທະນາຄໍາຖາມດັ່ງກ່າວ ແລະ ຂຽນຄໍາຕອບໃສ່: ຕົວຢ່າງ: ລວມບົດຮຽນຈາກ: ເອກະສານແຫຼ່ງຂໍ້ມູນ 12 ກ: ດ້ານໜຶ່ງສະແດງເຖິງການເຄື່ອນຍ້າຍແຮງງານທີ່ປອດໄພ ແລະ ດ້ານໜຶ່ງສະແດງເຖິງການເຄື່ອນຍ້າຍແຮງງານທີ່ບໍ່ປອດໄພ:

- ຜູ້ເຄື່ອນຍ້າຍແຮງງານທີ່ມີເອກະສານນັ້ນພວກເຂົາເຮັດແນວໃດ?
- ຜູ້ເຄື່ອນຍ້າຍແຮງງານທີ່ບໍ່ມີເອກະສານນັ້ນພວກເຂົາເຮັດແນວໃດ?
- ເປັນຫຍັງພວກເຂົາຈຶ່ງເລືອກທີ່ຈະປະກອບເອກະສານກ່ອນການເຄື່ອນຍ້າຍແຮງງານ?
- ເປັນຫຍັງພວກເຂົາຈຶ່ງບໍ່ເລືອກທີ່ຈະປະກອບເອກະສານກ່ອນການເຄື່ອນຍ້າຍແຮງງານ?
- ໜ້າທີ່ຂອງຜູ້ເຄື່ອນຍ້າຍແຮງງານຕໍ່ກັບປະເທດທີ່ຈະໄປມີຫຍັງແດ່?
- ເມື່ອໃດ(ອາຍຸເທົ່າໃດ) ທີ່ເຈົ້າຄິດວ່າເໝາະສົມທີ່ຈະໄປທໍາງານໄດ້?



## ຄໍາຖາມ

ຫຼິ້ນເກມທວນຄວາມຈໍາ ຈາກເກມອົບອຸ່ນຮ່າງກາຍ ໃນເບື້ອງຕົນຂອງຄູ່ມືສະບັບນີ້.

**ສະຫຼຸດບົດຮຽນ**

- ການເຄື່ອນຍ້າຍແຮງງານພາຍໃນໝາຍຄວາມວ່າ ຄົນທີ່ເຄື່ອນຍ້າຍແຮງງານພາຍໃນປະເທດຂອງຕົນເອງ.
- ການເຄື່ອນຍ້າຍແຮງງານໄປຕ່າງປະເທດ ເມື່ອຄົນເຮົາເຄື່ອນຍ້າຍແຮງງານຂ້າມປະເທດ
- ການປະກອບເອກະສານກ່ອນການເດີນທາງໝາຍຄວາມວ່າ: ແຮງງານເຄື່ອນຍ້າຍປະຕິບັດຕາມກົດໝາຍເຊິ່ງປົກປ້ອງຜູ້ທີ່ເຂົ້າໄປເຮັດວຽກໃນປະເທດນັ້ນ.
- ການປະກອບເອກະສານກ່ອນການເດີນທາງຕ້ອງການໃຫ້ທ່ານມີໜັງສືເດີນທາງ ແລະ ເອກະສານອະນຸຍາດເຮັດວຽກ ຫຼື ເອກສານອື່ນໆນໍາອີກ.
- ການເດີນທາງທີ່ບໍ່ມີເອກະສານໝາຍຄວາມວ່າເມື່ອຄົນເຂົ້າປະເທດອື່ນໆ ໂດຍບໍ່ໄດ້ປະຕິບັດຕາມກົດໝາຍ, ບໍ່ມີໜັງສືເດີນທາງ ແລະ ວີຊ້າ.
- ການເຄື່ອນຍ້າຍແຮງງານທີ່ບໍ່ປອດໄພມັນເປັນບັນຫາໃຫຍ່ຂອງການເຄື່ອນຍ້າຍແຮງງານ.
- ການປະກອບເອກະສານກ່ອນການເຄື່ອນຍ້າຍແຮງງານເປັນວິທີທີ່ປອດໄພກວ່າ ການທີ່ບໍ່ມີເອກະສານຫຍັງເລີຍ.

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈທຸກໆຄົນທີ່ມາຮ່ວມ ພົບກັນໃນຄັ້ງໜ້າ, ມື້ນີ້ທຸກໆຄົນທີ່ເຂົ້າມາຮ່ວມແມ່ນຈະໄດ້ຮັບດາວຄົນລະ 1 ດວງ.

ໃຫ້ຜູ້ເຂົ້າຮ່ວມເມືອຖາມພໍ່ແມ່ຂອງພວກເຂົາ, ຖ້າວ່າພວກເຂົາຫາກຮູ້ຜູ້ໃດໜຶ່ງທີ່ເຄີຍມີການເຄື່ອນຍ້າຍແຮງງານພາຍໃນ ແລະ ຕ່າງປະເທດ. ວ່າບຸກຄົນເຫຼົ່ານັ້ນປະກອບເອກະສານ ຫຼື ບໍ່ໄດ້ປະກອບເອກະສານໃນການເຄື່ອນຍ້າຍແຮງງານ.

# ເອກະສານອ້າງອີງ 12 ກ: ຕົວຢ່າງ ການເຄື່ອນຍ້າຍແຮງງານທີ່ປອດໄພ ການເຄື່ອນຍ້າຍແຮງງານທີ່ບໍ່ປອດໄພ

# 12

| ການເຄື່ອນຍ້າຍແຮງງານທີ່ຖືກຕ້ອງຕາມກົດໝາຍ | ການເຄື່ອນຍ້າຍແຮງງານທີ່ຜິດກົດໝາຍ |
|---|---|
| • ປື້ມເດີນທາງ (3 ວັນຕໍ່ຄືນ)<br>• ບັດເຂົ້າເມືອງ (6 ເດືອນ ເມືອງຕໍ່ເມືອງ)<br>• ໜັງສືເດີນທາງ<br>• ວີຊ້າ (ການອະນຸຍາດເຮັດວຽກ)<br>• ເອກະສານອະນຸຍາດເຮັດວຽກ (ກະຊວງແຮງງານ)<br>• ຕົວແທນຈັດຫາງານ | • ນາຍໜ້າຈັດຫາງານ<br>• ບັນດາພີ່ນ້ອງ<br>• ຂ້າມຊາຍແດນດ້ວຍຕົນເອງ<br>• ບັນດາເພື່ອນໆ<br>• ບັນດາຄົນແປກໜ້າ |
| **ເປັນຫຍັງ?:**<br>• ໄດ້ວຽກເຮັດງານທຳທີ່ປອດໄພ<br>• ໄດ້ງານທີ່ແນ່ນອນ, ໝັ້ນຄົງ, ໄດ້ງານທີ່ດີ<br>ມີທັກສະຫຼາຍໆຢ່າງ | **ເປັນຫຍັງ?:**<br>• ປະຢັດເວລາ<br>• ງ່າຍໃນການໄປ<br>• ຈ່າຍເງິນໜ້ອຍ<br>• ລົບໜີໄດ້ງ່າຍໆ |